# ຮີບໂຮມເພັງ



ຂອງ: ຄຳຫຼ້າ ໜໍ່ແກ້ວ

v.01 beta

Oct 2014

| | ຊື່ເພງ | ໜ້າ |
|---|---|---|
| 1 | ກ້ຽວສາວ | 119 |
| 2 | ກະຊັບສຳພັນລາວ-ໄທ | 126 |
| 3 | ກຸຫຼາບສອນມອນ | 102 |
| 4 | ເກີດເປັນຄົນ | 117 |
| 5 | ຂອບໃຈ | 99 |
| 6 | ຂາດນາງ | 70 |
| 7 | ຄະນຶງຮັກ | 34 |
| 8 | ຄິດຮອດຄວາມຮັກ | 9 |
| 9 | ຄິດເຖິງທີ່ຮັກ | 100 |
| 10 | ຄຶດເຖິງ | 7 |
| 11 | ຄືນນັ້ນ | 6 |
| 12 | ຄືນແຫ່ງຄວາມຫຼັງ | 42 |
| 13 | ຄົນ | 27 |
| 14 | ຄົນທີ່ເຂົາລືມ | 13 |
| 15 | ເຄາະຂີ້ໝ້ຽງ | 116 |
| 16 | ເງິນ | 86 |
| 17 | ຈາກນ້ອງປີໃໝ່ | 95 |
| 18 | ຈັນສຸຣິ | 85 |
| 19 | ສບາຍດີປີໃໝ່ | 112 |
| 20 | ສລັກຈິດ | 14 |
| 21 | ສອນມອນ | 25 |
| 22 | ສອນມອນ v2 | 26 |
| 23 | ສວັດດີນ້ອງສາວ | 24 |
| 24 | ສວັດດີປີໃໝ່ | 98 |
| 25 | ສາວລາວດາວສມັຍ | 106 |
| 26 | ສາວເຖົ້າ | 91 |
| 27 | ສາວເຖົ້າແຄ້ນ | 92 |
| 28 | ສຸຂຂີປີໃໝ່ | 129 |
| 29 | ສຸດປຼາຖນາ | 56 |
| 30 | ສເນສາວ Vietnam | 59 |
| 31 | ສຽງສັ່ງຄືນຊ້ຳ | 104 |
| 32 | ແສບຊວງ | 36 |
| 33 | ໂສກຮັກ | 68 |
| 34 | ຊັງຄົນລ່ຳໄລ | 81 |
| 35 | ເຊື່ອອ້າຍດີກວ່າ | 76 |
| 36 | ເຊໂດນ | 84 |
| 37 | ເຊໂປນລຳລຶກ | 38 |
| 38 | ຍອດຮັກແກ່ນໃຈ | 35 |
| 39 | ຍິ້ມຫວານ | 89 |
| 40 | ຍັງຮັກຍັງຫ່ວງ | 55 |
| 41 | ຍັງຮັກນ້ອງຢູ່ | 21 |
| 42 | ດ້ວຍຮັກສມັກໃຈ | 114 |
| 43 | ດອກຈຳປາ | 103 |
| 44 | ດີໃຈ | 108 |
| 45 | ດົນຈຶ່ງເຫັນ | 15 |
| 46 | ດົນຈຶ່ງເຫັນ v2 | 16 |
| 47 | ຕຶກແຂ່ງແກ່ງລອຍ | 22 |
| 48 | ຕໍ່ຮັກຕໍ່ຂານ | 121 |
| 49 | ເຖົ້າກໍມັກ | 45 |
| 50 | ເຖົ້າກໍມັກ v2 | 46 |

| ຊື່ເພງ | | ໜ້າ |
|---|---|---|
| 51 | ເທວີຫຼິງຟ້າ | 43 |
| 52 | ນ້ອຍ | 131 |
| 53 | ນ້ຳຕານ້ຳໃຈ | 118 |
| 54 | ນ້ຳໃຈລາວ v2 | 90 |
| 55 | ນອນນ້ອງວຽງສວັນ | 94 |
| 56 | ນິມິດພິສວາດ | 50 |
| 57 | ນຶ່ງອ້າຍຊາຍດຽວ | 2 |
| 58 | ນຶ່ງໃນຫົວໃຈ | 78 |
| 59 | ຫນຸ່ມຫນ້າຫນາວ | 88 |
| 60 | ໜາວ | 96 |
| 61 | ອວດສາວ | 82 |
| 62 | ບໍນອນກໍ່ຜັນ | 135 |
| 63 | ບໍຮັກຢ່າມາ | 39 |
| 64 | ປ່ອຍອ້າຍເຖີດ | 132 |
| 65 | ປ່ຽວໃຈ | 44 |
| 66 | ປ່ຽວອ້າຍເຖີດ | 57 |
| 67 | ປາກ | 23 |
| 68 | ປູ່ສອນຫຼານ | 28 |
| 69 | ເປັນມິດກັນດີກວ່າ | 74 |
| 70 | ເປັນຫຍັງຈຶ່ງລືມ | 124 |
| 71 | ໄປຄ້າຍມາ | 11 |
| 72 | ໄປໃສມາ | 10 |
| 73 | ຜິດຫວັງ | 40 |
| 74 | ຜູ້ຊາຍຜີ | 130 |
| 75 | ພອນວັນເກີດ | 51 |
| 76 | ພາກຮັກ | 128 |
| 77 | ພາສິດຮັກ | 105 |
| 78 | ພຽງເຫັນຫນ້າ | 65 |
| 79 | ພຽງແຕ່ຄຶດ | 12 |
| 80 | ພັທນາກອນ v2 | 49 |
| 81 | ພໍນຶກໄດ້ | 109 |
| 82 | ຟັງນະທີ່ຮັກ | 97 |
| 83 | ມ່ວນຊື່ນຍາມພົບ | 127 |
| 84 | ເມີດເດືອນ | 30 |
| 85 | ເມືອງຈຳລຳລຶກ | 19 |
| 86 | ເໝືອນຄົນມີກຳ | 20 |
| 87 | ແມ່ | 113 |
| 88 | ບໍກ້າບອກ | 54 |
| 89 | ຢ່າກອນ | 72 |
| 90 | ຢ່າຈັບປາສອງມື | 69 |
| 91 | ຢ່າຫ້າມໃຈ | 3 |
| 92 | ຢ່າເຊືອຜູ້ຊາຍ | 80 |
| 93 | ຢ່າໃຈນ້ອຍ | 37 |
| 94 | ຢ້ານ | 83 |
| 95 | ຢ້ານ | 133 |
| 96 | ຢ້ານນ້ຳຖ້ວມ | 52 |
| 97 | ຍອກບໍໄດ້ເບາະ | 71 |
| 98 | ຍາກຈະບອກ | 75 |
| 99 | ຍາກເປັນໂຈຣ | 101 |
| 100 | ຢູ່ກັບນ້ອງ | 122 |

| | ຊື່ເພັງ | ຫນ້າ |
|---|---|---|
| 101 | ຫາກໂລກນີ້ມີເຮົາສອງ | 73 |
| 102 | ລົມຫນາວສາວຈົ່ມ | 4 |
| 103 | ລຳບາກໃຈ | 115 |
| 104 | ລຳວົງກັບກ່ອນ | 79 |
| 105 | ລັກມັກ | 107 |
| 106 | ແລ້ວແຕ່ | 110 |
| 107 | ໂລກຍັງກວ້າງ | 66 |
| 108 | ວອນລົມ | 125 |
| 109 | ວອນຮັກເກົ່າ | 29 |
| 110 | ວິມານວຽງທອງ | 134 |
| 111 | ວຽງຈັນດວງໃຈ | 123 |
| 112 | ສາວຫນ້າຫນາວ | 31 |
| 113 | ຫ່າງຮັກ | 17 |
| 114 | ຫ່າງຮັກ | 41 |
| 115 | ຫວງຍິ້ມ | 87 |
| 116 | ຫາກນ້ອງມີໃໝ່ | 32 |
| 117 | ຫາກອ້າຍມີໃໝ່ | 33 |
| 118 | ຫາກໂລກນີ້ມີເຮົາສອງ | 18 |
| 119 | ຫົວອົກຍິງ | 64 |
| 120 | ຫົວໃຈລຳພັນ | 5 |
| 121 | ອ່ຳຖ່ຳ | 47 |
| 122 | ອ້າຍກັບມາແລ້ວ | 62 |
| 123 | ອ້າຍຄອຍ | 120 |
| 124 | ອະດີດລຳລຶກ | 48 |
| 125 | ອາລັຍອ້າຍ | 8 |

| | ຊື່ເພັງ | ຫນ້າ |
|---|---|---|
| 126 | ອຸກໃຈ | 93 |
| 127 | ອົ່ງຕົ່ງ | 77 |
| 128 | ຮັກກັນຊັງກັນ | 60 |
| 129 | ຮັກກັນເໝືອນພີ່ນ້ອງ | 63 |
| 130 | ຮັກນ້ອງແທ້ | 67 |
| 131 | ຮັກບໍລືມ | 1 |
| 132 | ຮັກຢ່າຫຼອກ | 61 |
| 133 | ຮັກໜ່ອຍ | 111 |
| 134 | ຮັກແທ້ | 58 |
| 135 | ເຮົາຮັກກັນໄດ້ | 53 |




ຄຳຫຼ້າ ໜໍ່ແກ້ວ
1961

# ຮັກບໍລືມ

| | | |
|---|---|---|
| ເກີດຊາດນີ້ | ຂໍຮັກດຽວ | ຮັກບໍລືມ |
| ໂລກສລາຍ | ເປັນເທົ່າຖ່ານ | ຮັກບໍລືມ |
| ໄດ້ນວນນ້ອງ | ຄອງໃຈຢູ່ | ຮັກບໍລືມ |
| ດິນປົກໜ້າ | ຫ້າຮ້ອຍທີ | ຮັກບໍລືມ |
| | | |
| ຈະຊື່ຕຣົງ | ຫຼົງພຽງນາງ | ຮັກບໍລືມ |
| ດື່ມໃຈໜັກ | ເໜືອນນາງແກ້ວ | ຮັກບໍລືມ |
| ຊົ່ວດິນຟ້າ | ໂລກາສິ້ນ | ຮັກບໍລືມ |
| ບໍຖອີນ | ຜິນຈາກນ້ອງ | ຮັກບໍລືມ |
| | | |
| ຂໍໄຫວ້ວອນ | ວານເທວາ | ມາປົກປ້ອງ |
| ໄດ້ຄຽງສອງ | ສົມດັ່ງໃຈ | ປຣາຖນາ |
| ອີ່ນໝື່ນແສນ | ແມ່ນລອຍມາ | ຈາກສວັນ |
| ບໍໄຜ່ຜັນ | ຜູກສຳພັນ | ຮັກບໍລືມ |
| | | |
| ຈະຢູ່ໃສ | ໃກ້ຫຼືໄກ | ຮັກບໍລືມ |
| ຫຼັບຍັງຜັນ | ເຫັນດວງໜ້າ | ຮັກບໍລືມ |
| ຢາກຄຽງຂວັນ | ນອນເນື້ອອຸ່ນ | ຮັກບໍລືມ |
| ຫາກດັ່ງຫວັງ | ສົມດັ່ງໃຈ | ຮັກບໍລືມ |

ຄຳຫຼ້າ ໜໍ່ແກ້ວ : ທຳນອງ & ເນື້ອຮ້ອງ

1950+

ບັງອອນ
1970

# ນຶ່ງອ້າຍຊາຍດຽວ

ຊາຍ... ອື່ນໝື່ນແສນ　　　ມາຈາກເມືອງແຖນ
ເມືອງແມນ　　　ແດນສວັນ
ບໍ່ເຄີຍ　　　ບໍ່ເຄີຍ ຈະຄິດຜູກພັນ
ບໍ່ຢາກ ໄດ້ເປັນມິ່ງຂວັນ　　　ບໍ່ຜັນ ແມ່ນຍາມນິທຣາ

ຊາຍ... ນຶ່ງເທົ່ານີ້　　　ເປັນຍອດຊາຕຣີ
ເປັນທີ່　　　ປຣາຖນາ
ບໍ່ລືມ　　　ບໍ່ລືມ ພໍ່ສ້ຽວເວລາ
ຢາກຢູ່ເປັນຄູ່ ສເນຫາ　　　ໄກຕາ ຄຶງໜອງຮີດີ

↻ ດາວເດືອນເກື່ອນຟ້າ　　　ແຜ່ນພະສຸທາ
ເງິນທອງ　　　ເຂົ້າຂອງມາກມີ
ພໍໄດ້ກະຕຸກ　　　ຕຸ້ນເຕືອນ ລືມອ້າຍຈັກດີ້
ຍິ່ງຮັກຍິ່ງຫວງ ເຕັມທີ່　　　ຢາກໃຫ້ອ້າຍມີ ພຽງນ້ອງຄົນດຽວ

ຊາຍ... ນຶ່ງເທົ່ານັ້ນ　　　ທີ່ນ້ອງໃຝ່ຜັນ
ຄືນວັນ　　　ຜູ່ດຽວ
ຫຼັບຕາ　　　ມືນຕາ ຢາກເຫັນຊາຍດຽວ
ບໍ່ຢາກ ໃຫ້ໃຜມາຫຼຽວ　　　ກິນກຽວ ກ່ຽວກ້ຽວອ້າຍເລີຍ

ຄຳຫຼ້າ ໜໍ່ແກ້ວ : ທຳນອງ & ເນື້ອຮ້ອງ

ທັນຕະວັນ ຣາຊາສັກດ໌
1967

# ຢ່າຫ້າມໃຈ

ຢ່າຫ້າມຫົວໃຈ ຫົວໃຈ ຄົນຈະຮັກກັນ
ຢ່າກີດຢ່າກັ້ນ ຖານະ ຈະສູງຫຼືຕ່ຳ
ຄົນຈະຮັກກັນ ກ້າບຸກຫ້ວຍໜອງ ຄອງທາມ
ເຫວເລິກ ພູຜາກ້າຂ້າມ ເຖິງຍາມ ໃຈຮ່ຳຮຽກຮ້ອງ

ຢ່າຫ້າມຫົວໃຈ ຫົວໃຈ ຄົນທີ່ຮັກກັນ
ໂລກແຫ່ງຄວາມຝັນ ເຂົາມີ ປະທີບໃສສ່ອງ
ຮັກຢູ່ທີ່ໃຈ ບໍ່ໄດ້ ເຫັນຈັບເປັນກອງ
ວິມານໝັ້ນໝາຍ ຜຸດຜ່ອງ ຫວັງປອງ ຮັກຊື່ນຊູໃຈ

↻ ຄວາມຮັກ ຄວາມຫວັງ ມີອະນຸພາບ
ທັງສອງໃຈຮັບ ເອົາຄວາມຮັກນັ້ນ ເປັນໃຫຍ່
ຈະຂຶ້ນບິນຟ້າ ດິ່ງພະສຸທາ ບຸກນ້ຳລຸຍໄຟ
ຄົນຮັກ ໄປເຖິງກັນໄດ້ ດ້ວຍໃຈເຂົາ ປຣາຖນາ

ຢ່າຫ້າມຫົວໃຈ ເຂົາມີຄວາມຮັກ ຕໍ່ກັນ
ຢ່າເພຄວາມຝັນ ວິມານ ອັນສູງສງ່າ
ແມ່ນຍາກຫ້າມໃຈ ຫ້າມໄຟ ເຜົາສຸມອຸຣາ
ຫ້າມນ້ຳບໍ່ໄຫຼ ດີກວ່າ ຄ່ອຍມາ ຫັກຫ້າມໃຈຄົນ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໝັ່ນແກ້ວ**

ສົມພອງ
1967

# ລືມໜາວສາວຈິ່ມ

ນານເຫຼືອທົນ ແລ້ວເຈົ້າ
ດອຍເຂົາ ມາຕັ້ງຫຼາຍປີ
ຈຶ່ງເໝືອນຄຳຫຼືບໍ່ ລໍເຜົ້າລໍ ແສນນານ
ຢ້ານອ້າຍລວງ ໃຫ້ໜອງ

ຄືນເໝືອນກັນ ນະອ້າຍ
ມິໄດ້ ເປັນເຄື່ອງທົດລອງ
ລືມໜາວມາແລ້ວນີ້ ຄວນຈະມີຄູ່ຄອງ
ອ້າຍປ່ອຍນ້ອງ ຢູ່ດຽວ

ຮັກຈິງໃຫ້ບອກ ຮັກຫຼອກ ບໍ່ມີຫວັງ
ຢ່າມາຫາທາງ ໃຫ້ໃຈແຫ້ງຫ່ຽວ
ຜູ້ຊາຍສມັຍໃໝ່ ຫົວໃຈມັກບິດບ້ຽວ
ຊົມແລ້ວບໍ່ກ່ຽວ ບໍ່ຫຼຽວພຽງຕາ

ໜາວນີ້ ມານະອ້າຍ
ດົນຫຼາຍ ນ້ອງອາຍວິວາ
ລືມຫຼືໃດຫັ່ນນີ້ ຄຳສັກຂີສັນຍາ
ໂຖ ອະນິຈາ ຜູ້ຊາຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ສຸນຸນທາ ສີວິມະໂນທຳ
1966

# ຫົວໃຈລຳພັນ

ຫົວໃຈຮອນ ຊີຂາດ ແລ້ວເອີຍ
ຮັກເຫຼືອຈະເອີ່ຍ ໃຫ້ນ້ອງໄດ້ຟັງ ຄຳຂາດ
ຄ່ຳຄືນໄຝ່ຝັນ ອານາດ
ກິນເດີນນັ່ງເຫັນ ຮູບວາດ ລອຍອາດ ຢູ່ທຸກນາທີ

ສາຍຕາເຫັນແລຈ້ອງ ທຸກວັນ
ສັມພັນໃຈຢູ່ ບໍ່ຮູ້ລືມເລືອນ ຈາກທີ
ຢາກໃຫ້ຄວາມຝັນ ເປັນຈິງ
ຢູ່ແນບແອບຂວັນ ນອນອີງ ພິງຄູ່ສູ່ສົມ ໃຫ້ສົມໃຈ

ອິນພົມ ຍົມມະນາ
ຈົ່ງເຫັນໃຈຂ້າ ຮັກມາດັ່ງໝາຍ
ສຽງເພັງຮ້ອງນີ້ ອອກຈາກໃຈ
ຮັກແທ້ຮັກນາງ ເໜືອສິ່ງໃດ ໄດ້ໂປຣດຟັງໄວ້ຢ່າລືມ

ສຽງເພັງດັງອ້ອຍອິ່ນ ຍາມໃດ
ນັ້ນຄືສຽງຈົ່ມ ຈາກຄົ້ວຫົວໃຈ ດູດດືມ
ຢ່າລືມວ່າໃຜ ຜູ່ນຶ່ງ
ເຜົ້າຫຼົງພ່ຳເພີ້ ລຳພຶງ ຂໍໃຫ້ຈອມຂວັນ ຈົ່ງເຫັນໃຈ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ແສນສັກດາ
1970

# ຄືນນັ້ນ

(ເວົ້າ) ສຸດທີ່ຮັກ ເວລານີ້ເຈົ້າຢູ່ໃສ ແລະກໍຢູ່ຈັ່ງໃດ ຈື່ໄດ້ບໍ ຄືນນຶ່ງ ທີ່ເຮົາພົບກັນ

ຄືນນັ້ນ ຢູ່ເງົາແສງຈັນ ໃສສ່ອງ
ເຮົາສອງ ຄຽງຄູ່ປະຄອງ ຊຶ້ງໃຈ

ຄືນນັ້ນ ຫວັງວ່ານ້ອງນັ້ນ ຈຳໄດ້
ວ່າໃຜ ອີງແອບແນບກາຍ ຈົນຂ້ອນຄືນ

↻ ຈະຮັກກັນຈົນ ຊົ່ວຟ້າ ສັນຍາ ບໍ່ຂໍລືມເຈົ້າ
ຮັກເຮົາ ບໍ່ເຫງົາຂົມຂື່ນ
ເຮົາສອງ ເປັນຄູ່ດວງໃຈ ຮັກໃດ ຄົງບໍ່ຫອມລື່ນ
ບໍ່ຫວານບໍ່ຊື່ນ ບໍ່ຍືນເໝືອນເຮົາ

ຄືນນີ້ ສຸດແສນໂສກີ ໝອງເສົ້າ
ຂາດເຈົ້າ ຈື່ງເຝົ້າຣະທົມ ຕຣົມອຸຣາ

ໂອ... ໂອ... ໂອ... ໂອ...

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ


ຮິບໂຮມເພັງຂອງ ຄຳຫຼ້າ ໜໍ່ແກ້ວ, ເຜີຍແຜ່ໂດຍ ທັມມະນູນ ພັນນຸເດຊ

ບຸນທ່ຽງ ມະນີວົງ
1970

# ຄຶດເຖິງ

ອ້າຍຄົງຈະຕາຍ ຍ້ອນຄວາມຄຶດເຖິງ ນ້ອງ
ຄຶດຫາແຕ່ນ້ອງ ຄິດຮອດແຕ່ນ້ອງ ຜູ່ດຽວ
ຄວາມຮັກຝັງປັກ ຊວງເລິກ ຫົວຄ່ຳຍາມເດິກ ສຸດແລຫຼຽວ
ຮັກນ້ອງຄົນດຽວ ຄົນດຽວ ສເມີມາ

ເຖິງຕົວຢູ່ໄກ ຫົວໃຈຍັງໂຫຍ ຫວນ
ເຊົ້າຄ່ຳບ່າຍຄວນ ຫານວນ ຢູ່ທຸກເວລາ
ຢ້ານຮັກຈະໜ່າຍ ໜ່າຍແໜງ ຣະແວງໃຈຢູ່ ຢາກກູ່ຫາ
ຄຶດແລ້ວນ້ຳຕາ ອ້າຍຫຼັ່ງໂລມໃຈ

↻ ເວລານາທີ ທີ່ອ້າຍຫ່າງນ້ອງ... ຣີ!
ອ້າຍທຸກໝົ່ນໝອງ ຢ້ານນ້ອງປ່ຽນໃຈ
ຫາກສຸດທີ່ຮັກ ຮັກຈິງຈາກໃຈ... ຣີ!
ອ້າຍຂໍມາຕາຍ ຕໍ່ໜ້າຕັກນາງ

ຮັກນາງບໍລືມ ຮັກດຽວບໍລືມ ຫຼົງ
ຫົວໃຈໝັ້ນຄົງ ຊື່ຕຣົງຕໍ່ນ້ອງ ບໍຈາງ
ອ້າຍຮັກອ້າຍຫ່ວງ ຫ່ວງຫຼາຍ ແທບທົນບໍໄດ້ ເກືອບໃຈພັງ
ຫຼົງເພີ້ພະວັງ ຮັກນາງຜູ່ດຽວ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໝໍ່ແກ້ວ

ບັງອອນ
1970

# ອາລັຍອ້າຍ

ຄ່ຳແລ້ວ ອ້າຍເອີຍ
ກ່ອນນີ້ອ້າຍເຄີຍ ມາຫານ້ອງຢູ່
ເຄີຍເຫັນເຄີຍຊົມ ເຄີຍຈົ່ມ ເຄີຍເວົ້າເປົ່າຫູ
ບັດນີ້ ນ້ອງຕ້ອງທົນຢູ່ ຜູ່ດຽວປ່ຽວໃຈ

ອ້າຍຈຶ່ງ ໂຊກດີ
ຂໍຂວັນຊີວີ ຢ່າມີໝອງໄໝ້
ຈຶ່ງຕັ້ງໃຈທົນ ສຸກລົ້ນ ມີຜົນບັ້ນປາຍ
ນ້ອງຈະຖນອມ ກາຍໃຈ ໃຫ້ອ້າຍຜູ່ດຽວ

ອາລັຍ ອາວອນ
ຍາມນອນພ່ຳເພີ້ ຫຼັບຕາລະເມີ ຫາອ້າຍຄົນດຽວ
ທົນຢູ່ທົນໝອງ ທົນຄອງ ຍອດຊາຍແສນປ່ຽວ
ອົນພຣົມ ໂປຣດໄດ້ແລຫຼຽວ ຢ່າລ້ຽວຫຼາຍ ໃຈເປັນອື່ນ

ຢ່າລືມ ນ້ອງນະ
ເມື່ອອ້າຍຫວນມາ ຢ່າພາສະອື້ນ
ຈຶ່ງເຫັນໃຈຍິງ ທີ່ອ້າຍ ເຄີຍຮັກເຄີຍຊື່ນ
ອ້າຍຢ່າຫຼີງລົມ ຍິງອື່ນ ເລີຍລືມ ລືມນ້ອງ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໝໍ່ແກ້ວ

ຈັນທະລາ ອຸເທນສັກດາ
1968

# ຄິດຮອດຄວາມຮັກ

ຄິດຮອດຄວາມຮັກ ແລ້ວນອນບໍ່ຫຼັບ
ໄດ້ແຕ່ນັ່ງນັບ ເວລານາທີ
ຈັກອີກຈັກເດືອນ ຈັກອີກຈັກປີ
ຈະຮອດຣຶກດີ ພິທີ ວິວາມົງຄົນ

ຄິດຮອດຄວາມຮັກ ແລ້ວນອນບໍ່ໄດ້
ຮູ້ສຶກຄັນຄາຍ ກາຍໃຈເຫຼືອທົນ
ຈັກອີກຈັກແລ້ງ ຈັກອີກຈັກຝົນ
ໜາວນີ້ຄົງທົນ ຕໍ່ໄປບໍ່ໄຫວ ຕາຍແນ່

ລືມແລ້ງລືມຝົນ ລືມໜາວລືມຮ້ອນ
ພັດອີ່ພັດວອນ ພັດຈອນລັບແລ
ລືມປາກລືມໃຈ ໃຜຈິງຈັງແດ່
ຂໍທານຂໍແຜ່ ຈັກຄົນແດ່ເດ

ຄິດຮອດຄວາມຮັກ ຫົວໃຈຕຶກຕັກ
ໃຈເຕັ້ນຄຶກຄັກ ເໝືອນຈັກຣົດເພ
ຢ້ານແຕ່ຄວາມຮັກ ຊັກຕົກທະເລ
ຢ້ານຫົວໃຈເພ ຢ້ານເຊລົງເຫວ ເຖິງຕາຍ

ບັງອອນ
1962

# ໄປໃສມາ ?

ໄປໃສມາ
ຈົນສຸຣິຍາ ຟ້າໃໝ່
ຄືນນີ້ໄປນອນ ຄ້າງຄືນຢູ່ໃສ
ບອກມາໄວໆ ໄວໆດຽວນີ້

ພໍ່ທູນຫົວ
ອ້າຍຫຼົງລືມຕົວ ແລ້ວນີ້
ຕິດໄພ້ຕິດຢາ ສຸຣານາຣີ
ອີກບໍ່ເຖິງປີ ຄົງຕິດກັນຊາ

ລືມແລງລືມງາຍ ລືມລູກລືມເມັຽ
ການງານກໍ່ເສັຽ ຂາຍໜ້າ
ຍາມກິນຍາມນອນ ອ້າຍບໍ່ຫົວຊາ
ປ່ອຍພັລຍາ ນ້ອຍໃຈ

ບອກມາຊະ
ດຽວນີ້ອ້າຍມາ ແຕ່ໃສ
ນອນແລ້ງມາດົນ ນ້ອງທົນບໍ່ໄຫວ
ຫຼືວ່າເສືອກໄປ ມີນ້ອຍອີກຄົນ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ



ຈັນທະລາ ອຸເທນສັກດາ
1962

# ໄປຄ້າຍມາ

ໄປຄ້າຍມາ

ຮັກສາ ຫາຄວາມປອດພັຍ
ບໍ່ໄດ້ໄປນອນ ຄ້າງຄືນຢູ່ໃສ
ອົດນອນຈົຕາຍ ຈົຕາຍເຕັມທີ

ໂທ້ທູນຫົວ
ບໍ່ໄດ້ ເມົາມົວຫຍັງນີ້
ເຮື່ອງໄພ້ເຮື່ອງຢາ ສຸຣານາຣີ
ບໍ່ເຄີຍໃຍດີ ບໍ່ມີດອກຫນາ

↻ ເຮືອນຊານແລງງາຍ ທັງລູກທັງເມັຽ
ການງານບໍ່ເສັຽ ຫາວ່າ
ສັງສັນເພື່ອນມິດ ຈົນຜິດເວລາ
ບໍ່ລືມແກ້ວຕາ ແກ້ວໃຈ

ຟັງອ້າຍນະ
ດຽວນີ້ ອ້າຍມາແຕ່ຄ້າຍ
ທັງຫິວທັງວິນ ມືດຫນ້າຕາລາຍ
ຢ່າວຸ້ນຢ່າວາຍ ໄປໆ ໄປນອນ

1950+

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**



ຈັນທະລາ ອຸເທນສັກດາ
1968

# ພຽງແຕ່ຄຶດ

ອ້າຍພຽງແຕ່ຄຶດ ເທົ່ານັ້ນ
ບໍ່ເຄີຍ ລັ່ນປາກ ກັບໃຜ
ອ້າຍເກັບຄວາມຮັກ ອັດໄວ້ໃນໃຈ
ເຫັນນ້ອງເທື່ອໃດ ຫົວໃຈມັນເຕັ້ນ ຕຶກຕັກ ໆ

ອ້າຍພຽງແຕ່ຄຶດ ເທົ່ານັ້ນ
ບໍ່ເຄີຍ ຜັນວ່າ ຈະຮັກ
ຢ້ານນ້ອງຕອບມາ ວ່າບໍ່ຮູ້ຈັກ
ຄຳນັ້ນມັນຍາກ ມັນແສນລຳບາກ ຈະບອກໃຫ້ຟັງ

↻ ແບກຄວາມຄຶດໄວ້ ໃນໃຈດົນແລ້ວ
ວຽນກັນເປັນແຖວ ຢູ່ໃນຄວາມຫວັງ
ຄຶດໄປຄຶດມາ ຢ້ານບໍ່ມີທາງ
ຫົວໃຈ ມັນຄອນຄາງ ຮື.. ຄຶດຢາກກືນກິນ ເສັຽເລີຍ

ອ້າຍພຽງແຕ່ຄຶດ ເທົ່ານັ້ນ
ບໍ່ຕ້ອງໄຫວຫວັ່ນ ຫຍັງເລີຍ
ຄຶດເຫັ້ນຄຶດຫົວ ໃຫ້ໃຈສະເບີຍ
ແທ້ຈິງບໍ່ເຄີຍ ຈິເວົ້າຈິເອີ່ຍ ໄດ້ພຽງແຕ່ຄຶດ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ


ຮິບໂຮມເພງຂອງ ຄຳຫຼ້າ ໜໍ່ແກ້ວ, ເຜີຍແຜ່ໂດຍ ທັມມະນູນ ພັນບຸເດຊ

ບຸນທົງ ວົງສາລີ
1968

# ຄົນທີ່ເຂົາລືມ



ອ້າຍຈົບລະຕີ ນ້ອງຈຶ່ງເມີນ
ອ້າຍຂາດອ້າຍເຂີນ ເງິນທອງຂອງໃຊ້
ອ້າຍຂາດທຸກຢ່າງ ຈະຄອຍເອົາໃຈ
ນ້ອງຈຶ່ງປ່ຽນໃຈ ຫັນໄປ ເປັນຂອງຄົນອື່ນ

ອ້າຍບຸນບໍ່ເຖິງ ດ້ອຍກວ່ານາງ
ນ້ອງຈຶ່ງເມີນໜາງ ເຫີນຫາງຫວານຊື່ນ
ໄດ້ໃໝ່ລັ້ນເບາະ ເກາະຜິດຄິດຝືນ
ຫາວ່າມືນທຶນ ລ່ວງເກີນຜິດຜີ ຂໍນຳ

ເຂົາຄົງລໍ່າລວຍ ມັ່ງຄັ້ງເສດຖີ
ມາຫຼົງເຈົ້ານີ້ ເທວີຄົນງາມ
ອ້າຍຕໍ່າທັງສັກ ສັບສິນເງິນຄຳ
ຕ້ອງທົນຣະກຳ ເໝືອນຄົນສິ້ນຫວັງ

ນ້ອງລືມລະຕີ ຄືນສຸກສັນ
ຕົ້ນຂາມຄືນນັ້ນ ແສງຈັນກະຈ່າງ
ໃຜກອດໃຜຈູບ ລູບໄລ້ນວນນາງ
ໃຜຄໍາຄວນຄາງ ບໍລືມ ບໍລືມສັນຍາ

ຄຳຫຼ້າ ໜໍ່ແກ້ວ : ລວບລວມ & ຮຽບຮຽງ

ບຸນທົງ ວົງສາລີ
1968

# ສລັກຈິດ

ນ້ອງຄືທຸກສິ່ງ ທີ່ອ້າຍໝາຍ ປຣາຖນາ
ມິ່ງຂວັນຊີວາ ຜັງໃນອຸຣາ ແນ່ແທ້
ເຫັນຍິງຫຼາຍລ້ານ ຫຼາຍໂກດ ຫົວໃຈປະກົດ ບໍ່ຢາກແລ
ຫຼົງໄຫຼພຽງແຕ່ ນ້ອງນີ້

ນ້ອງຄືປຣະທີບ ສ່ອງແສງແນວທາງ ຊີວາ
ຫຼົງໄຫຼໄປວ່າ ນ້ອງນາງເມດຕາ ປຣານີ
ຫວັງໃນຄວາມຮັກ ສູງສົ່ງ ເທບໄທ້ຂໍຈົ່ງ ໂປຣດຊ່ວຍທີ
ສິງໃຈຍິງທີ່ ຂ້າຮັກ

ສລັກຈິດ ສລັກໃຈ
ສລັກຢູ່ໃນ ຮືທັຍແນ່ນໜັກ
ນ້ອງຄົງຮັບຮູ້ ນ້ອງຄົງຮູ້ຈັກ
ວ່າອ້າຍເຝົ້າຮັກ ຫຼົງຮັກສລັກຈິດ ໃຈດຽວ

ຫົວໃຈເພີ້ຟ້າ ຮຳພຶງລຳພັນ ໃຝ່ຫາ
ຕັ້ງໃຈໄວ້ວ່າ ຮັກຍືນຊົ່ວຟ້າ ແໜ້ນໜຽວ
ຮັກເຮົາຄົງຫວານ ຊື່ນໜັກ ແມ່ນນ້ອງບໍ່ຫັກ ຮັກແຫ້ງຮ່ຽວ
ຮັກດຽວແຕ່ອ້າຍ ຕລອດການ

ຄຳຫຼ້າ ໜໍ່ແກ້ວ : ທຳນອງ & ເນື້ອຮ້ອງ


ຮີບໂຮມເພັງຂອງ ຄຳຫຼ້າ ໜໍ່ແກ້ວ, ເຜີຍແຜ່ໂດຍ ທັມມະນູນ ພັນນຸເດຊ

ຈັນທະລາ ອຸເທນສັກດາ
1969

# ດົນຈົ່ງເຫັນ

ດົນໆ ເຫັນກັນ ເທື່ອນຶ່ງ
ຈົນຕົກຕະລຶງ ມາງາມແທ້ ງາມແທ້
ກ່ອນນັ້ນ ທັງດຳທັງແຫຼ້ (ຊ້ຳ)
ບັດນີ້ຍັງ ໄຄແດ່ ໜ້າຮັກໜ້າແພງ

ງາມເກີນຄາດໝາຍ ໄວ້ກ່ອນ
ຈົນອົກສະທ້ອນ ຈົນໃຈຍ້ອນແຮງໆ
ຫຼົງມັກ ຫຼົງລົມຫຼົງແຍງ (ຊ້ຳ)
ລືມເຂົ້າສວາຍ ເຂົ້າແລງ ນອນສະແຄງ ຝັນເຫັນ

ໃຜມາໝັ້ນ ຫຼືຍັງ
ຫຼືແຕ່ງງານ ໄປແລ້ວແຕ່ຊັ້ນ
ນ້ອງງາມ ເໝີດມື້ເໝີດເວັນ (ຊ້ຳ)
ຜູ້ໃດມາເຫັນ ບໍເປັນອັນກິນ ອັນນອນ

ເທວາ ຟ້າໃດບໍ່ສ້າງ
ປະດິດນ້ອງນາງ ຈົ່ງງາມງຽບ ງາມງອນ
ນ້ອງສາວ ຢ່າຟ້າວໜີກ່ອນ (ຊ້ຳ)
ອ້າຍຂໍຈອງ ຈັກບ່ອນ ຫ້ອງຫົວໃຈ ນ້ອງນາງ

1977

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

24 / VII
ຫ້າມຈຳໜ່າຍ

ຈັນທະລາ ອຸເທນສັກດາ
1993

# ດົນຈົ່ງເຫັນ (v.2)

ດົນໆ ເຫັນກັນ ເທື່ອນຶ່ງ
ຈົນຕົກຕະລຶງ ມາງາມແທ້ ງາມແທ້
ກ່ອນນັ້ນ ທັງດຳທັງເຫຼ້ (ຊ້ຳ)
ບັດນີ້ຍັງ ໄຄແດ່ ໜ້າຮັກໜ້າແພງ

ງາມເກີນຄາດໝາຍ ໄວ້ກ່ອນ
ຈົນອົກສະທ້ອນ ຈົນໃຈຍ້ອນແຮງໆ
ໜ້າຮັກ ໜ້າຊົມໜ້າແຍງ (ຊ້ຳ)
ລືມເຂົ້າສວາຍ ເຂົ້າແລງ ໂອ ຂວັນແພງ ພໍ່ເຫັນ

ໃຜມາໝັ້ນ ຫຼືຍັງ...ນ້ອງ
ຫຼືແຕ່ງດອງ ໄປແລ້ວແຕ່ເຊັ່ນ
ນ້ອງງາມ ເໜີດມື້ເໜີດເວັນ (ຊ້ຳ)
ຍາມໃດບໍ່ເຫັນ ບໍ່ເປັນອັນກິນ ອັນນອນ

ເທວາ ຟ້າໃດບໍ່ສ້າງ
ຕົກແຕ່ງນ້ອງນາງ ໂສມສະອາງ ງາມງອນ
ມັກຫຼາຍ ອາໄລອາວອນ (ຊ້ຳ)
ຢາກເຊີຍຊິດ ຂວັນອ່ອນ ແນບເນື້ອນອນ ໄປຈົນຕາຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ບັງອອນ
1969

# ຫ່າງຮັກ



ຫ່າງກັນພຽງນ້ອຍ ຄອຍແຕ່ເສົ້າ ເຫງົາໃຈ
ຄົນຮັກຫ່າງໄກ ໂອໃຈເຝົ້າແຕ່ ຫ່ວງຫາ
ຄິດເຖິງຄິດເຖິງ ຄິດເຖິງ ຢູ່ທຸກເວລາ
ໂອປານນີ້ ດວງຊີວາ ແກ້ວຕາ ໄປຢູ່ຫົນໃດ

ນັ່ງຫຼືນອນຝັນ ຫຳຈອມຂວັນ ຄົນດີ
ເຫັນຜ້າປ່ຽນສີ ຢ່າມີທີ່ປອງ ສອງໃຈ
ທີ່ຮັກທີ່ຮັກ ທີ່ຮັກ ຄົງບໍ່ລືມໄລ
ຝາກຄວາມຫວັງ ມອບໄວ້ໃຫ້ ຍອດຊາຍຈົ່ງໄດ້ປານີ

↻ ຍາມໃດ ໄດ້ຢູ່ຮຽງຄຽງຄູ່
ເໝືອນນ້ອງໄດ້ຢູ່ ສວັນວິມານ ສິມພລີ
ຍາມໃດ ຫ່າງໄກ ຍອດຂວັນຊີວີ
ດັ່ງໄຟ ສຸມໃນຣືດີ ດັ່ງຕົກອະເວຈີ ທັ່ງເປັນ

ຫາກໄດ້ຍິນສຽງ ເພັງທີ່ຮ້ອງ ສົ່ງໄປ
ຂໍວອນແກ້ວໃຈ ຈົ່ງປະກົດກາຍ ໃຫ້ເຫັນ
ຢ່າຫີນໜ້ານ້ອງ ຂ້ານ້ອງ ໃຫ້ຕາຍທັງເປັນ
ຫາກແມ່ນອ້າຍ ໝາຍຫຼີກເວັ້ນ ຂໍໃຫ້ມີເວນ ຕາມມາ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ບຸນທ່ຽງ ມະນີວົງ
1967

# ຫາກໂລກນີ້ມີເຮົາສອງ

ຢາກໃຫ້ໂລກນີ້ ມີເຮົາສອງຄົນ
ເຮົາຄົງຈະພົ້ນ ຈາກການຕິສິນ
ຄວາມຮັກຄວາມຫວັງ ເຮົານັ້ນ ຄົງຈິງດັ່ງຝັນ ຢູ່ອາຈິນ
ສົມດັ່ງຖວິນ ຜັນໄຝ່

ຫາກໃນໂລກນີ້ ມີເຮົາສອງຄົນ
ເຮົາຄົງສຸກລົ້ນ ຍິ່ງກວ່າສຸກໃດ
ໃຈອ້າຍໃຈນ້ອງ ໝັ້ນເໝາະ ມີພຽງສະເພາະ ບໍ່ເພື່ອໃຜ
ຕັ້ງຈິດໝັ້ນໝາຍ ແນ່ນອນ

ແຕ່ໃນໂລກນີ້ ຍັງມີມະນຸດ ສຸດພັລນາ
ຄອຍເຕືອນຄອຍວ່າ ຄອຍຫຼອກຄອຍຫຼອນ
ຢູ່ໃສມີຮັກ ຢູ່ຫັ້ນມີທຸກ ສຸດແສນອາວອນ
ໄດ້ຍິນຄຳສອນ ວ່າວອນສອນມາ

ຫາກແມ່ນໂລກນີ້ ມີເຮົາສອງຄົນ
ໂລກາຈະພົ້ນ ຈາກພັຍນາໆ
ຄວາມໂລບຄວາມຫຼົງຄວາມໂກດ ຄົງເບົາແຮງລົດ ກວ່າເຄີຍມາ
ສິ້ນຄວາມອິດສາ ສົມປອງ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ



ຄຳເຕີມ ຊານຸບານ
1964

# ເມືອງຊຳລຳລຶກ

ເມືອງຊຳແດນເໜືອ ງາມເຫຼືອ ສຸດພັນນາ
ທິວທັດທ້ອງນາ ປ່າດົງ ທົ່ງກວ້າງງາມຍິ່ງ
ນ້ຳຊຳໄຫຼຜ່ານ ພູຜາ ໜ້າເພີນພັກພິງ
ງາມແທ້ ຊວນຊົມທຸກສິ່ງ ງາມຈິງ ຈັບໃຈບໍ່ຫາຍ

ເມືອງຊຳເຈົ້າເອີຍ ກ່ອນເຄີຍ ສຸກສົມຮົ່ມເຢັນ
ຊຳເໝືອນນັ້ນເປັນ ຖິ່ນຖານ ສຳຣານຫົວໃຈ
ສາຍັນຄ້ອຍຄ່ຳ ຢູ່ຕາມ ລຳນ້ຳສ່ອງໃສ
ໜຸ່ມສາວ ອາບເຢັນຊື່ນໃຈ ຫາໃສ ຈະເທົ່າເມືອງຊຳ

ອຸດົມສົມບູນ ໄປດ້ວຍ ຊັບຢູ່ໃນດິນ
ຊາວເມືອງຢູ່ກິນ ກັນດ້ວຍ ສິນຢູ່ໃນນ້ຳ
ຄ່ຳຄືນແວ່ວແຄນ ແອ່ວແຟນນ້ອງສາວເມືອງຊຳ
ທົບຄວນ ແລ້ວຍິ່ງສຸກລ້ຳ ໂອທັມມະຊາດ ເມືອງເໜືອ

ເມືອງຊຳເຈົ້າເອີຍ ເຖິງເຈົ້າ ຢູ່ແດນກັນດານ
ຍັງເໝືອນວິມານ ຕະການ ບໍ່ມີຮູ້ເບື່ອ
ເຖິງຄາວຈຳຈາກ ຈຳພາກ ຈາກຖິ່ນເມືອງເໜືອ
ຄິດເຖິງ ເມືອງຊຳທຸກເມື່ອ ບຸນເຫຼືອ ຈະຫວນກັບມາ

ບຸນທົງ ວົງສາລີ
1968

# ເໝືອນຄົນມີກັມ

ຢູ່ສູງໜັກໜາ    ແສນໄກຫຼາຍກວ່າ
ສຸດໄຜ່ຄວ້າ    ນ້ອງມາ ເປັນຄູ່ຂວັນໃຈ
ໄດ້ແຕ່ແຫງນ    ເຝົ້າແຫງນ ເງີຍຄໍຝັນໄຝ່
ດຸດດັ່ງ ກັບຄົນໜາວໄຂ້    ໜາວເຫັນບຫົວໃຈ ສັ່ນສາຍບານປີ

ບໍ່ມີຄົນເຫັນ    ເຖິງໃນໃຈຂ້າ
ວາສນາ    ດ້ອຍກວ່າ ຈະເອີ່ຍອະລີ
ໄດ້ແຕ່ຫຼິງ    ຮັກເຂົາ ຂ້າງດຽວຫຼືນີ້
ກັມໃດ ໝຸນນຳຍ່ຳຍີ    ເໝືອນເກີດມາມີ ບາບເວນເຂັນໃຈ

↻ ໄກເກີນມືຄວ້າ    ໄຝ່ຫາ
ຂ້າຕຣອມອຸຣາ    ຈວນຕາຍ
ຂໍວອນເທບໄທ້    ຊ່ວຍດົນຈອມໃຈ
ຂໍນາງຈົ່ງໄດ້    ອ່ອນໄຫວ ໂນ້ມໃຈເມດຕາ

ດັ່ງມີບາບໜາ    ດັ່ງຟ້າລົງໂທດ
ໂກດຕົວຂ້າ    ແສນດ້ອຍ ຕ້ອຍຕ່ຳເໝືອນກາ
ກ່ອນຈະຕາຍ    ຊີບວາຍ ແຜ່ນດິນຖົມໜ້າ
ຈະຂໍບອກ ຈອມຂວັນວ່າ    ຮັກເທົ່າຊີວາ ຊົ່ວຟ້າມະລາຍ

ບຸນທົງ ວົງສາລີ
1963

# ຍັງຮັກນ້ອງຢູ່

ບໍເຄີຍ ບໍເຄີຍ ຮັກໃຜເທົ່ານາງ
ບໍເຄີຍ ຫາທາງ ເມີນໜາງເຈົ້າເລີຍ
ອ້າຍຍັງຮັກດຽວ ໃຈດຽວເໝືອນເຄີຍ
ຢ່າຟັງຄົນເຍີ້ຍ ເອີ່ຍສິນນິນທາ

ບໍເຄີຍ ບໍເຄີຍ ຄິດລວງລໍ້ກັນ
ບໍເຄີຍເຫຫັນ ສາບານສັນຍາ
ອ້າຍພຽນໄຫວ້ວອນ ຢູ່ທຸກເວລາ
ຢາກໃຫ້ດິນຟ້າ ຊ່ວຍເປັນພະຍານ

ຍັງຮັກ ຍັງຮັກ ຍັງຮັກນ້ອງຢູ່
ຄິດເຖິງຍອດຊູ້ ຢູ່ທຸກຄືນວັນ
ຢາກໃຫ້ເປັນຈິງ ເໝືອນດັ່ງຄວາມຝັນ
ຢາກໃຫ້ວິມານ ໂຫລານສົມປອງ

ບໍເຄີຍ ບໍເຄີຍ ຫຼິງຕົວຫຼິງໃຈ
ບໍເຄີຍ ຄິດໄປ ໜີໄກເນື້ອທອງ
ອ້າຍຍັງຊື່ຕຣົງ ບໍຫຼົງລືມນ້ອງ
ຢາກເປັນເຈົ້າຂອງ ຢາກຄອງຄູ່ນອນ

1950+

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໝໍ່ແກ້ວ

ຄຳພູດ ແຄນກິດຕິສັກ
1961

# ຕຶກແຂ່ງແກ່ງລອຍ

ຜົນຕຶກ — ອ້າຍກໍຍັງ ກ້າແຂ່ງ
ເຖິງນໍ້າເປັນແກ່ງ — ອ້າຍກໍລອຍ ມາຫາ
ແບກເອົາຄວາມຮັກ — ຜ່ານລົມຜ່ານຟ້າ (ຊໍ້າ)
ຢາກພົບແກ້ວຕາ — ປານນີ້ນິທຣາ ຫຼືວ່າຈັ່ງໃດ
ນອນແລ້ວ — ຫຼືຍັງ
ຫຼືວ່ານ້ອງນັ່ງ — ນັ່ງລົມກັບໃຜ
ສົ່ງສຽງ — ມາຫາກ່ອນກາຍ (ຊໍ້າ)
ກ່ອນຂາດໃຈຕາຍ — ຂໍໃຫ້ໄດ້ເຫັນ ໜ້ານາງ

ຜົນຕຶກ — ອ້າຍກໍຍັງ ກ້າແຂ່ງ
ເຖິງນໍ້າເປັນແກ່ງ — ອ້າຍຍັງລອຍ ມາໄຫວ
ມັນຈັກມັນເຊືອນ — ຢູ່ເຮືອນບໍໄດ້ (ຊໍ້າ)
ບຸກມາຫາ ຈົນໄດ້ — ຂໍຈົ່ງເຫັນໃຈ ອ້າຍກ່ອນເຖິດໜາ
ຈິງຫຼື — ບໍຈິງ
ນ້ອງຫຍັງມານີ້ງ — ບໍປາກບໍຈາ
ນັ່ງເສີຍ — ບາດເຫັນອ້າຍມາ (ຊໍ້າ)
ແລ້ວໄຮ່ແລ້ວນາ — ອ້າຍຂໍວິວາ ກັບນ້ອງ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ
1969

# ປາກ



ປາກຄົນ ບໍ່ຄືປາກໄຫ
ປາກໄຫ ບໍ່ຄືປາກຄົນ
ປາກດີ ມີສີແກ່ຕົນ
ປາກຄົນ ແຕ່ລະຄົນ ຕ່າງກັນ ຄົນລະປາກ

ປາກນັ້ນ ໃຫ້ກົງກັບໃຈ
ປາກຫຼາຍ ຜູ້ຟັງບໍ່ມັກ
ປາກຄ່ອຍ ໄດ້ຍິນບໍ່ຄັກ
ປາກດັງ ກໍຟັງຍາກ ຍິ່ງລຳບາກ ຜູ້ຟັງ

ຫູ ໄດ້ຍິນ ແລ້ວຟັງຄັກໆ
ໃຫ້ເຫັນປະຈັກ ແກ່ຕາທຸກຄັ້ງ
ແລ້ວເອົາໄປຄຶດ ໃຫ້ຖືກແນວທາງ
ປາກເທື່ອໃດ ລະວັງ ລະວັງຈະຜິດ ຫູຄົນ

ປາກຄົນ ບໍ່ຄືປາກຊ້າງ
ປາກຊ້າງ ບໍ່ຄືປາກຄົນ
ປາກດີ ຊະນະໃຈຄົນ
ປາກບໍ່ດີ ບໍ່ພົ້ນ ຄົນເຂົາ ຈະນິນທາ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ

# ສວັດດີນ້ອງສາວ

ສວັດດີ ນ້ອງສາວ
ເນື້ອນ້ອງງາມ ຜ່ອງພັນ
ດັ່ງສວັນ ລົງມາແຕ່ງ
ແສງຕາຫວານ ຜ່ານໄປ
ແສງຕາຫວານ ຜ່ານມາ
ພາໃຫ້ອ້າຍ ຝັນລະເມີ
ເຊີນນ້ອງສາວ ເຂົ້າມາ (ຊ້ຳ)
ຈົ່ງຢ່າໄດ້ ລະອາຍ
ຈົ່ງຢ່າໄດ້ ແຫນງໜ່າຍ
ເຊີນເຂົ້າມາ ລຳວົງ ໃຫ້ມ່ວນຊື່ນອຸຣາ

ຍາມນ້ອງມາ ຟ້ອນລຳ
ງາມແສນງາມ ໜັກໜາ
ດັ່ງຈາກຟ້າ ມາລຳວົງ
ຄົງບໍ່ມີ ເຈົ້າຂອງ
ທີ່ໝາຍປອງ ເຝົ້າຫວງ
ຢູ່ໃນຊວງ ດວງຣືທັຍ
ເຊີນນ້ອງສາວ ເຂົ້າມາ (ຊ້ຳ)
ຈົ່ງຢ່າໄດ້ ລະອາຍ
ຈົ່ງຢ່າໄດ້ ແຫນງໜ່າຍ
ເພື່ອຜ່ອນຄາຍ ຫາຍເສົ້າ ໃຫ້ເຮົາຊື່ນອຸຣາ
ເຊີນເຂົ້າມາ ລຳວົງ ໃຫ້ມ່ວນຊື່ນອຸຣາ

ແຕ່ງໂດຍ: ອີຊຸພັນ ຊຸມມະນີວົງ

ແຕ່ງໂດຍ: ຄຳຫຼ້າ ໜໍ່ແກ້ວ

## MADEMOISELLE BONJOUR

Mademoiselle bonjour
quelle jeune fille si douce
qui ressemble à un ange
un coup d'œil par ci un coup d'œil par là
et elle fait le ravage ;
Viens viens viens danser
viens viens viens danser
viens danser le Lamvong
viens danser le Lamvong
sans hésitations on aura le bonheur.

ແຕ່ງໂດຍ: ອີຊຸພັນ ຊຸມມະນີວົງ



ຄຳຫຼ້າ ໜໍ່ແກ້ວ
1955

# ສວນມອນ

ສວນມອນແຫ່ງນີ້ ນີ້ເປັນຖານຖິ່ນ ສົດໃສ
ຊົມແລ້ວວິໄລ ຊວນໃຈເບີກບານ ພາຜັນ
ທ້ອງຖິ່ນລຳເນົາ ຍາວຍຽດ ຍຽດໄດ້ຕັ້ງສາມ ກິໂລນັ້ນ
ເປັນເຂດມະຫັນ ຢູ່ໃນ ນະຄອນ

ຫົນທາງກ້ຽງງາມ ຜູ້ຄົນທ່ຽວທ່ອງ ໄປມາ
ແມ່ຂອງຄົງຄາ ເລືອນລາຫຼາກໄຫຼ ສູ່ຄອນ
ເຫັນໜຸ່ມສາວລົງ ລອຍຫຼິ້ນ ອາບເຢັນຢອກເຢົ້າ ໜ້າອອນຊອນ
ນົກບິນກັບຄອນ ເມື່ອຍາມ ຄ້ອຍຄ່ຳ

ຄືນວັນເພັງ ແສງເດືອນ ແສງດາວສ່ອງມາ
ສຸກອຸຣາ ນະພາພາໃຈ ຊື່ນຊ່ຳ
ເດີກຂ້ອນຄືນ ສຽງແຄນຂັບໂອ້ ໂອ່ລຳ
ສຽງຊຸ່ຍ ຊ້ຳເຕີມເຂົ້ານຳ ສຸກເຫຼືອລ້ຳ ສວນມອນແຫ່ງນີ້

ໃຜເຄີຍໄດ້ມາ ຕິດຕາຝັນເພີ້ ເພີ້ຫາ
ຄົງຫວນຄືນມາ ບໍ່ເລືອນເລີກລາ ຫຼີກໜີ
ແມ່ນເກີດຊາດໃດ ຂໍຈົ່ງ ເກີດໃນຖິ່ນຖານ ບ້ານແຫ່ງນີ້
ເຖິງສູນຊີວີ ຈະບໍ່ ຂໍຫ່າງ

24 / VII
ຫ້າມຈຳໜ່າຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ
1990

# ສວນມອນ (v.2)

ສວນມອນແຫ່ງນີ້ ທີ່ເປັນຖານຖິ່ນ ສົດໃສ
ເຫັນແລ້ວວິໄລ ຊວນໃຈເບີກບານ ພາຝັນ
ທ້ອງຖິ່ນລຳເນົາ ຍາວຍຽດ ຍຽດໄດ້ຫຼາຍຫຼັກ ກິໂລນັ້ນ
ເຂດພັທນາການ ໃນກຳແພງ ນະຄອນ

ຫີນທາງກ້ຽງງາມ ຜູ້ຄົນທ່ຽວທ່ອງ ໄປມາ
ແມ່ຂອງທາຣາ ເລືອນລາຫຼາກໄຫຼ ສູ່ຄອນ
ເຫັນໜຸ່ມສາວລົງ ລອຍຫຼິ້ນ ອາບເຢັນຍອກເຍົ້າ ໜ້າອອນຊອນ
ນົກຜິນກັບຄອນ ເມື່ອຍາມ ຄ້ອຍຄ່ຳ

↻ ຄືນວັນເພັງ ແສງເດືອນ ແສງດາວສ່ອງມາ
ສຸກອຸຣາ ນະພາພາໃຈ ຊື່ນຊ່ຳ
ເດີກຂ້ອນຄືນ ສຽງແຄນຂັບໂອ້ ໂອ່ລຳ
ສຽງຊຸ່ຍ ຄ່ຳຄວນຄ້ອຍຕາມ ສຸກເຫຼືອລ້ຳ ສວນມອນແຫ່ງນີ້

ໃຜເຄີຍໄດ້ມາ ຕິດຕາຝັນເພີ້ ເພີ້ຫາ
ເມື່ອແລ້ວຫວນມາ ບໍ່ເລືອນເລີກລາ ຫຼີກໜີ
ແມ່ນເກີດຊາດໃດ ຂໍຈົ່ງ ເກີດໃນຖິ່ນຖານ ບ້ານແຫ່ງນີ້
ເຖິງສູນຊີພພລີ ຈະບໍ່ ຂໍຫ່າງ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ



ຄຳຫຼ້າ ໜໍ່ແກ້ວ
1962

# ຄົນ



ຄົນ
ເກີດເປັນມະນຸດ　　ເພິ່ນວ່າຄົນ
ບວດຢູ່ໃນວັດ　　ກໍ່ແມ່ນຄົນ
ຄົນໆ　　ເສດຖີຫຼືຂໍທານ ກໍແມ່ນຄົນ

ຄົນ
ຢູ່ໃນໂລກນີ້　　ມີຫຼາຍຄົນ
ຜູ່ດີຜູ່ຮ້າຍ　　ກໍແມ່ນຄົນ
ຄົນໆ　　ຕຳຣວດທະຫານ ກໍແມ່ນຄົນ

ຄົນມີຫຼາຍພວກ　　ຫຼາຍຊັ້ນວັນນະ
ເລົ່າອະນາຖາ　　ກໍແມ່ນຄົນ
ເປັນເຈົ້າເປັນນາຍ　　ກໍແມ່ນຄົນ
ມີມັ່ງ ກະທັ້ງຈົນ　　ລ້ວນແລ້ວແຕ່ຄົນ ທັ້ງນັ້ນແຫຼະຄົນ

ຄົນ
ຢູ່ໃນປ່າຊ້າ　　ແມ່ນເສດຄົນ
ຢ່າຢຽບຢ່າຢ່ຳ　　ປະນາມຄົນ
ຄົນໆ　　ຫຼີກຕາຍບໍພົ້ນ ໄດ້ຈັກຄົນ



ຄຳຫຼ້າ ໜໍ່ແກ້ວ
1964

# ປູ່ສອນຫຼານ

ຟັງໆໆ

ຂໍເຊີນ ທ່ານຟັງພີ້ກ່ອນ
ເມື່ອຍບັກ ກ່ອນຈະພັກຜ່ອນ (ຊ້ຳ)
ໂປຣດຟັງເພັງ ນີ້ກ່ອນ ແລ້ວເອົາໄປສອນ ກັນຕໍ່ໄປ

ຍາມໜຸ່ມນ້ອຍ ຈົ່ງອົດສາ ພາກພຽນ
ຈົ່ງອົດສາ ຮ່ຳຮຽນ ຮຽນເອົາໄວ້ ຫຼາຍໆ
ມີຜຍາ ບໍ່ແມ່ນໃສ່ບ່າ ແບກໄວ້ (ຊ້ຳ)
ຈົ່ງຈຳເອົາໄວ້ ຢ່າລືມຢ່າລືມ ນະຫຼານເອີຍ

ເມື່ອຮຽນມາ ຈົ່ງຮັກສາ ໃຫ້ດີ
ຢ່າສ້າງຄວາມ ອັບປີ ຄວາມບັດສີ ເອົາໄວ້
ອະນາຄົດ ບ້ານເມືອງ ຈະຢູ່ກັບໃຜ (ຊ້ຳ)
ນອກຈາກຫຼານ ທັງຫຼາຍ ຈຳໄວ້ຈຳໄວ້ ໃຫ້ດີ

ເຈົ້າກະຊວງ ທະບວງກົມສຶກສາ
ໄດ້ຂົນຂວາຍ ຊອກຫາ ຈະພັທນາ ເລື້ອຍໄປ
ຍາກຈະເຫັນ ຊົນໃນຊາດ ທັງຫຼາຍ (ຊ້ຳ)
ທັນສມັຍກ້າວໄກ ຢ່າລືມຢ່າລືມ ນະຫຼານເອີຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຈັນທະລາ ອຸເທນສັກດາ
1968

# ວອນຮັກເກົ່າ

ຂອງກິນ ບໍກິນມັນເນົ່າ
ຂອງເກົ່າ ບໍເລົ່າມັນລືມ
ເບິ່ງເຫັນຜ້າ ອິ່ມຄື້ມ
ຮັກເກົ່າບໍລືມ ຍັງບໍລືມ ບໍລືມ

ໂອ ນ້ອງເອີຍ
ບຸນສອງເຮົາເຄີຍ ຮ່ວມກິນຮ່ວມທານ
ຈາກໄປ ຢູ່ໄກມິ່ງຂວັນ ອ້າຍຍັງ ຊື່ຕຮົງຄົງໝັ້ນ
ນອນຝັນນັ່ງຝັນ ແທ້ລະເນີ ແທ້ລະເນີ

ໂອ ນ້ອງສາວ
ຢ່າຫຼົງຄົນເວົ້າ ກ່າວສິນນິນທາ
ຈາກໄປແຕ່ກາຍ ດອກໜາ ຮອດໃສ ອ້າຍຍັງຄືນມາ
ໃຈຮ້ອງໄຫ້ຫາ ຢູ່ວ້ອນວອນ ວ້ອນວອນ

ໂອ ນ້ອງເອີຍ
ຮັກເຮົານັ້ນເຄີຍ ຫວານມັນເຕັມທີ່
ຈາກໄປ ບໍທັນເຖິງປີ ມື້ນັ້ນ ບໍຄືມື້ນີ້
ຍາມໜາວຍາມນີ້ ມາຄືນດີ ກັນເຖີດເອີຍ



ວົງເດືອນ
1968

# ເມີດເດືອນ

ເມີດເດືອນ ກໍເມີດເງິນ
ອຸກໃຈເຫຼືອເກີນ ຫາເງິນກະບໍ່ມີ
ເບີກເງິນມາຍາມໃດ ບໍ່ພໍກິນພໍໃຊ້ວຸ້ນວາຍເຈົ້າໜີ້
ເຂົ້າຂອງເປັນເງິນຕົວະ ເຈັບໃຈເຈັບຫົວສອນຄົວກະບໍ່ມີ

(ເວົ້າ) ໂອຍ ຈັ່ງແມ່ນມັນທຸກ ເຮືອນກໍເຊົ່າເຂົ້າກໍຊື້ ມື້ພັກກະເວີຍບໍ່ມີສອນຄົວຊິເຮັດ

ເມີດເດືອນ ກໍເມີດແຮງ
ອັດເຂົ້າສວາຍເຂົ້າແລງ ຂອງມັນແພງອີ່ຫຼີ
ຈະໄປໃສມາໃສ ຍ່າງເອົາຈົນເຫື່ອໄຫຼບໍ່ມີຣົຖຂີ່
ງົດທ່ຽວງົດເຣຣາ ງົດເບີງົດບາງົດສຸຣານາຣີ

(ເວົ້າ) ຄັກປານຫຍັງບາດນີ້ ຈະໄດ້ເຊົາຫຼາຍແນວຢູ່ດອກ ສົມນໍ້າໜ້າໂຕເອງນີ້ແຫຼະ

ຜູ່ດີ ມີເງິນ
ຟຸ້ມເຟືອຍເຫຼືອເກີນ ໃຊ້ເງິນບໍ່ປຣານີ
ຕັ້ງວົງການພະນັນ ສາມຄືນສາມວັນຫຼິ້ນກັນບໍ່ນບີ້
ປະລູກເຕົ້າເຮືອນຊານ ປະລ້າປະການມັນສາມານບັດສີ

(ເວົ້າ) ເອົາລົງໄປບາດນີ້ ໄຫໃຫຍ່ລົ້ນໄຫນ້ອຍບໍ່ເຕັມ ກັມເອີຍ ເວນເອີຍ

ພວກເຮົາ ຄົນຈົນ
ຈຳຕ້ອງຍອມດົ້ນຣົນ ຝືນໃຈທົນຢູ່ຢ່າງນີ້
ຢາກຖືກຫວຍຢາກລວຍເງິນ ຢາກຈະມີເງິນລ້ານຢາກຖືກລົດຕະຣີ
ເວົ້າຫຼາຍຢາກອາຍຄົນ ເມີດຕົວເມີດຕົນສອງກີບກໍບໍ່ມີ

(ເວົ້າ) ບ໋ະບຸນບໍ່ຄໍ້ານໍ້າບໍ່ຊູອີ່ຫຼີບໍ່? ຫາຈິຕາຍກໍຍັງບໍ່ກຸ້ມປາກ

ຢາກຕາຍ ຊະໃຫ້ພົ້ນ
ເກີດມາພົບຄວາມຈົນ ມັນເຫຼືອທົນອີ່ຫຼີ
ຢູ່ໄປກໍອາຍເຂົາ ຫາແລງກິນເຊົ້າຍັງແບ່ງເອົາໃຊ້ໜີ້
ເຂົ້າໜຽວໆ ເຢັນໆ ຈໍ້າປາແດກເໝັນໆກັບຕົ້ມເອັນແຊບອີ່ຫຼີ

(ເວົ້າ) ຫຼີບເຈົ້າໜີ້ ຍັງບໍ່ພໍ ອົດມື້ກິນມື້ ປາແດກກໍເຫຼືອຕ່ອນດຽວນີ້ຮີ!
ຄັກບໍ່ໄດ້ລົງລາຍ ກິນປາແດກກັບຕົ້ມເອັນ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ແກ້ວມະນີຄອນ
1965

# ສາວໜ້າໜາວ



ເມື່ອເວລາ ໜ້າໜາວ
ເອີກສາວ ໜາວຮ້ອນນອນສັ່ນ
ໜາວຈົນ ສະບັ້ນ
ເມື່ອເຫມັນ ກັບຫັນພັດມາ

ຢູ່ດຽວດາຍ ໃຈເຫງົາ
ໜາວໜາວ ໜາວຈອນຈຽນບ້າ
ໜາວຍາມ ນິທຣາ
ປ່ຽວອຸຣາ ສຸດຫາໃດ ແກ້ໜາວ

ໜາວລົມ ຫົ່ມຜ້າ
ໃຜວ່າ ຈະອຸ່ນເອີກສາວ
ໜາວຫຼາຍ ໃຈເສົ້າ
ຄອຍບ່າວ ບໍ່ມາຈັກທີ

ຫາກໄດ້ຍິນ ເພງຫວນ
ຂໍຊວນ ເຊີນມາທາງພີ້
ສົງສານ ຂ້າທີ
ດ້ວຍວິທີ ວິວາກັບແກ້ໜາວ

1950+

ບຸນທ່ຽງ ມະນີວົງ
1970

# ຫາກນ້ອງມີໃໝ່

ຫາກນ້ອງມີ ໃໝ່ແລ້ວ
ຢ່າຫາແນວ ມາຍຸ້ງ
ເອົາຄວາມຮັກ ກັບໄປ ຢ່າວຸ້ນວາຍ ໜາຍມຸ້ງ
ຄົນທົ່ວກຸງ ຈະນິນທາ

ຫາກນ້ອງມີ ໃໝ່ຈ້ອນ
ຢ່າພ່າວອນ ດີກວ່າ
ຢ່າມາລໍ້ ຕໍ່ເຕີມ ຢ່າແກ້ງເສີມ ຂາຍໜ້າ
ຢ່າວຽນມາ ຂວາງຂັດໃຈ

↻ ໜີໄປໃຫ້ພົ້ນ ໃຫ້ພົ້ນສາຍຕາ
ຮີບໄປຫາ ຄົນຮັກໃໝ່
ຊາຍດຽວບໍພໍ ຫາອີກເລື້ອຍໄປ
ກວ່າຊິບຈະອາຍ ຄົງໄດ້ເປັນພັນ

ຫາກນ້ອງເອົາ ອີກຄົນ
ປະນຶ່ງຄົນ ເສັ່ງນັ້ນ
ຄືນຄວາມຮັກ ໜ້າຊັງ ຄືນຄວາມຫວັງ ໄວ້ນັ້ນ
ແຍກທາງກັນ ເສັ່ງເຖີດເອີຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ດາວມະນີວອນ
1970

# ຫາກອ້າຍມີໃໝ່



ຫາກອ້າຍມີ ໃໝ່ແລ້ວ
ຢ່າຫາແນວ ມາຍຸ້ງ
ເອົາຄວາມຮັກ ກັບໄປ ຢ່າວຸ້ນວາຍ ໝາຍມຸ້ງ
ຄົນທີ່ວກຸງ ຈະນິນທາ

ຫາກອ້າຍມີ ໃໝ່ຈ້ອນ
ຢ່າພໍ່າວອນ ດີກວ່າ
ຢ່າມາລໍ້ຕໍ່າເຕີມ ຢ່າແກ້ງເສີມຂາຍໜ້າ
ຢ່າວຽນມາ ຂວາງຂັດໃຈ

ຫີ່ໄປໃຫ້ພົ້ນ ໃຫ້ພົ້ນສາຍຕາ
ຮີບໄປຫາ ຄົນຮັກໃໝ່
ຍິ່ງດຽວບໍ່ພໍ ຫາອີກເລື້ອຍໄປ
ກວ່າຊິບຈະວາຍ ຄົງໄດ້ເປັນພັນ

ຫາກອ້າຍເອົາ ອີກຄົນ
ປະນຶ່ງຄົນ ເຊັ່ງນັ້ນ
ລືມຄວາມຮັກ ໜ້າຊັງ ລືມຄວາມຫຼັງ ໄວ້ນັ້ນ
ແຍກທາງກັນ ເຊັ່ງເຖີດເອີຍ

ຮຽບຮຽງ ໂດຍ : ທຳນອງ & ເນື້ອຮ້ອງ

ທັນຕະວັນ ຣາຊາສັກດ໌
1965

# ຄະນຶງຮັກ

ປານນີ້ ອ້າຍຢູ່ຫົນໃດ
ຢູ່ໃສ ກັບໃຜຫັ່ນນີ້
ສຸກສັນ ຫຼືເສົ້າໂສກີ
ອ້າຍນອນຝັນດີ ຫຼືຢ່າງໃດ

ຄ່ຳນີ້ ຣຶດີແສນເສົ້າ
ຂາດເຈົ້າ ມາເລົ້າໂລມໃຈ
ນັ່ງຄິດ ຄະນຶງມີວາຍ
ແມ່ນຮັກມະລາຍ ຄົງຕາຍແນ່

↻ ອິດນິທຣາ ຜວາຂຶ້ນມາໄດ້
ລະເມີເພີ້ໄປ ດວງໃຈ ປ່ອຍໃຫ້ດຽວແດ
ຮັກຈິງຫຼືບໍ່ ຫຼືງເຜົ້າລໍ ບໍ່ເຫັນມາແລ
ຮັກລວງ ຫຼືວ່າແນ່ແທ້ ປ່ຽນແປ ຫຼືຍັງພັກດີ

ຄືນນີ້ ແສງຈັນໃສສ່ອງ
ແຕ່ນ້ອງ ໝົ່ນໝອງເຕັມທີ່
ຍອດຮັກ ຍອດຂວັນຊີວີ
ຫວນຄືນມາທີ ທີ່ຮັກເອີຍ

ແສງສຸຣິຈັນ
1969

# ຍອດຮັກແກ່ນໃຈ

ຍອດຮັກ ແກ່ນໃຈ
ສະຖິດຢູ່ໃນ ອຸຣາ
ເຜົ້າພຽນຖນອມ ມິຍອມສເນຫາ
ຍົກໄວ້ເປັນຍອດບູຊາ ເປັນເຈົ້າແຫ່ງອານາໃຈ

ຕ່າງຮັກ ຕ່າງຫວັງ
ຕ່າງເປັນພະລັງ ດັ່ງໝາຍ
ສາບານຈະຮັກ ຮັກຈົນຊີບວາຍ
ຂໍພອນຈາກອົງ ເທບໄທ້ ຄຸ້ມພັຍພິບັດນາງ

ຮັກດຽວໃຈດຽວ ບໍ່ຫຼຽວໃຜຕື່ມ
ສຸດແສນດູດດື່ມ ມິລືມໄລລາ
ສຸດຮັກສຸດແພງ ດຸດດັ່ງແກ້ວຕາ
ສຸດຫວັງສຸດປາຖນາ ເປັນສຸດບູຊາ ຢູ່ໃນຫົວໃຈ

ຊາດນີ້ ຊາດດຽວ
ຈະມີຮັກດຽວ ຈົນຕາຍ
ຂໍພຽງໄດ້ມາ ຢູ່ຮຽງຄຽງກາຍ
ຊື່ນຊົມສຸກສົມ ດັ່ງໝາຍ ຂໍຕາຍ ໃນອ້ອມກອດນາງ

1977

ປະພັນເພງ ຄຳຫຼ້າ : ໂອທອງ & ໂອທອງ

ສົມພອງ
1969

# ແສບຊວງ

ເຈັບຊ້ຳໃນໃຈ ເໝືອນໄຟສຸມແກບ ແສບຊວງຈິງໜໍ່
ເຂົາລວງເຂົາລໍ້ ໃຫ້ຕາຍໃຈນໍາ
ພໍສົມໃຈແລ້ວ ເລີຍຖິ້ມ ເຂົາຊົມຈົນເສັ່ງຄວາມງາມ
ກໍກັມທໍາເຂັນ ໄອ້ໃຫ້

ນີ້ຫຼືສັນຍາ ສາບານຂອງຄົນ ສຸດທົນທານເຫຼືອ
ປົນເຈືອຢາພິດ ຝັງແໜ້ນພາຍໃນ
ເງິນແສນເງິນລ້ານ ມອບໃຫ້ ເລົ້າໂລມໂອບອ້ອມ ເອົາໃຈ
ແລ້ວດ້ວຍເຫດໃດ ຈຶ່ງລືມໄດ້ລົງ

↻ ຄົງເປັນເພາະນ້ອງ ສິ້ນສາວສິ້ນສວຍ ເສັ່ງໂສມ
ສິ້ນຣົດນິຍົມ ຈຶ່ງຫາໃໝ່ຊົມ ໄສສົ່ງ
ພຣະຍາແຖນເອີຍ ບັ່ງເສີຍ ເລີຍໜໍ່ພຣະອົງ
ແຫຼກໝົດແລ້ວ ເຂົາເອົາມາສົ່ງ ເຫຼືອແຕ່ໂຄງ ຄວາມຮັກໜ້າຊັງ

ລູກຂໍອຸທອນ ສານຂອງພຣະພຣົມ ອົກາຍົມມະນາ
ຟ້ອງຖານເຂັ່ນຂ້າ ຫົວໃຈຈົນພັງ
ໃຫ້ສານຕັດສິນ ລົງໂທດ ຄະດີທັ້ງມໂທດ ເຖິງຊີວັງ
ຫຼືຫວນກັບຫຼັງ ບ່ອນເຄີຍໄດ້ຊື່ນ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ແສນສັກດາ
1970

# ຢ່າໃຈນ້ອຍ

ຢ່າຫວັ່ນຢ່າໄຫວ ຢ່າໃຈນ້ອຍເລີຍ ນ້ອງ
ຢ່າໝົ່ນຢ່າໝອງ ຢ່ານອງນ້ຳຕາ ເລີຍເຈົ້າ
ບໍ່ມີສິ່ງໃດ ຈະມາພາກຮັກ ສອງເຮົາ
ຢ່າໂສກຢ່າເສົ້າ ຍາມອ້າຍຫ່າງນາງ

ບໍ່ຫຼອກບໍ່ລວງ ບໍ່ລືມເຈົ້າເລີຍ ນ້ອງ
ນຶ່ງບໍ່ມີສອງ ອ້າຍຂໍຮັບຮອງ ຢືນຢັ້ງ
ບໍ່ເຄີຍຈະຄິດ ແບ່ງໃຈດວງນີ້ ຫຼາຍທາງ
ຕັ້ງໃຈມຸ້ງຫວັງ ພຽງນາງຜູ້ດຽວ

ຄວາມຮັກຄວາມຫ່ວງ ຫຼວງຫຼາຍ
ຍິ່ງອື່ນມາກມາຍ ບໍ່ຂໍຂ້ອງກ່ຽວ
ຈະຮັກຈະຫອມ ຫອມນ້ອງຜູ້ດຽວ
ບໍ່ຢາກແລຫຼຽວ ໃຜມາເປັນມິດ

ສຸດອີກສຸດໃຈ ບໍ່ມີໃຜອີກ ແລ້ວ
ນ້ອງຄືນາງແກ້ວ ເປັນແວວມະນີ ໃນຈິດ
ຂາດນ້ອງເປັນຄູ່ ບໍ່ຢາກຢູ່ແລ້ວ ຊີວິດ
ໂປຣດຈົ່ງໄດ້ຄິດ ຄິດແລະເຫັນໃຈ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ບຸນທ່ຽງ ມະນີວົງ
1962

# ເຊໂປນລຳລຶກ

ເຊໂປນ ເມືອງງາມ ເມື່ອຄັ້ງກ່ອນເກົ່າ
ມີວົງພຣະເຈົ້າ ຊົມພູສຖາປານາ
ຢູ່ພູສະງໍ້ ທໍ່ຄຳ ສວຍເດັ່ນງາມຕາ
ມີພຣະນາງ ສຸມັງຄະລາ ນຳພາ ນະຄອນນັ້ນ

ເຊໂປນ ດິນແດນ ສຸກສັນງາມຍິ່ງ
ມີທຸກງສິ່ງ ສົມບູນ ດັ່ງແດນສວັນ
ຜູ່ໃດໄປເຫັນ ມີເວັ້ນ ຊົມຊື່ນສຸກສັນ
ເຫັນນ້ຳເຊ ຜາໂຄດຫີນຊັນ ເຜົ້າຝັນ ຢາກຢູ່ເຊໂປນ

↻ ຖ້ຳປ່ອງ ຕາດສະໂຄຍ ພົງໄພພຶກສາ
ດ່ຽວນີ້ ສົງຄາມເຂັ່ນຂ້າ ຮາວີ ຍ່ຳຍີບີ້ບົ່ນ
ບ້ານແຕກສລາຍ ໜີຍາຍ ໄປທຸກແຫ່ງຫົນ
ປະຖິ້ມ ທີ່ເຄີຍສຸກລົ້ນ ໄປບົນກັບຄົນ ແຄ້ວນອື່ນ

ເຊໂປນ ຄົງມີ ຈັກວັນເຮືອງຮຸ່ງ
ຂ້າຍັງໝາຍມຸ້ງ ສ້າງສາ ເວລາກັບຄືນ
ຂ້າຈຳໃຈໜີ ພັຍລີ ດ້ວຍຈິດຂົ່ມຂືນ
ຄົງມີນານ ຂ້າຈະຫວນຄືນ ຈະຄືນມາສ້າງ ເຊໂປນ

*ລາແລ້ວ ລາກ່ອນ ລາກ່ອນ ເຊໂປນ...*

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ ແລະ ນະຄອນຄຳ ບຸບຜານຸວົງ


ຮີບໂຮມເພັງຂອງ ຄຳຫຼ້າ ໜໍ່ແກ້ວ, ເຜີຍແຜ່ໂດຍ ທົມມະນູນ ພັນນຸເດຊ

ແກ້ວມະນີຄອນ
1970

# ບໍຮັກຢ່າມາ

ບໍຮັກ ຢ່າມາໃຫ້ເຫັນ
ນ້ອງເປັນ ຜູ່ຍິງຜູ່ຍິງ ຊື່ໆ
ປາກອອກຄຳໃດ ຂໍໃຫ້ ເປັນທີ່ນັບຖື
ຂໍໃຫ້ຈຳຈື່ ຢ່າເອົາແຕ່ດື້ ຊູຊີ

ບໍຮັກ ຢ່າມາໃຫ້ຫຼົງ
ອ້າຍຄົງ ເປັນຊາຍ ຫົວໃຈອາຣີ
ຢ່າຫຼອກຢ່າລວງ ຢ່າລວງຢ່າຕົວະ ນາຣີ
ຮັກກັນດີໆ ໂລກຈະແຈ່ມສີ ງາມເດັ່ນ

ຂໍ ຂໍນຳແຫ້ງ
ນ້ອງຂໍພຽງແຕ່ ຢ່າຜານ ຫົວໃຈກັນເຫຼັ້ນ
ຫຼີບລີ້ນປີ້ນຄວາມ ຂໍນຳ ຢ່າທຳໃຫ້ເຫັນ
ນ້ອງຂໍຫຼີກເວັ້ນ ບໍຢາກຈອງເວນ ຜູ່ຊາຍ

ບໍຮັກ ບໍຕ້ອງມາຫາ
ເສັຽເວລາ ອ້າຍມາ ຫວັງລວຍບໍໄດ້
ຫາກອ້າຍມາດີ ຫວັງດີ ນ້ອງກໍພໍໃຈ
ນ້ອງຍອມມອບໃຫ້ ທັງໃຈແລະກາຍ ບໍຫວງ

ຄຳຫຼ້າ ໜໍ່ແກ້ວ : ທຳນອງ & ເນື້ອຮ້ອງ

ຊານໄຊ
1970

# ຜິດຫວັງ

ຜິດຫວັງ ແລ້ວເຈົ້າຈັ່ງ ຮູ້ເມື່ອ
ບອກບໍ່ເຊື່ອ ແລ້ວເສືອເປັນຈັ່ງໃດ
ຈະຫັນໜ້າ ກັບໄປຫາ ຜູ່ໃດ
ເຂົາຄົງ ຈະບໍ່ສົນໃຈ ແລ້ວໃຜ ຈະທໍຣະມາ

ຜິດຫວັງ ແລ້ວມານັ່ງ ຮ້ອງໄຫ້
ຈະໂທດໃຜ ຫາລົງອາຍາ
ຍາມຫຼົງຜິດ ທາງຊີວິດ ນານມາ
ເສັ່ງຕົວ ເສັ່ງທີ ເສັ່ງທ່າ ນ້ຳຕາ ເຈົ້າຕ້ອງຫຼັ່ງນອງ

ກັບໂຕ ກັບໃຈ ເສັ່ງໄດ້ກໍ່ດີ
ມາຊຸບຊີວີ ຢ່າໃຫ້ມີ ອັບສີເສົ້າໝອງ
ຮັກຄົນທີ່ເຂົາ ຮັກເຮົາ ຢ່າຫວັງເງິນທອງ
ຫົວໃຈ ບໍ່ແມ່ນສິ່ງຂອງ ຕໍ່ຮອງຊື້ໄດ້ ຂາຍກັນ

ຜິດຫວັງ ແລ້ວມາຕັ້ງ ໂຕໃໝ່
ທີ່ແລ້ວໄປ ຖືວ່າເປັນ ຄວາມຝັນ
ຊີວິດໃໝ່ ຄົງສົດໃສ ຣາວັນ
ຟ້າຄົງ ຈະລົງໂທດທັນ ສາບານທີ່ເຂົາ ແກ້ງລືມ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ບັງອອນ
1970

# ຫ່າງຮັກ

ຄໍ່າແລ້ວ ອ້າຍເອີຍ
ກ່ອນນີ້ອ້າຍເຄີຍ ມາຫານ້ອງຢູ່
ເຄີຍເຫັນເຄີຍຊົມ ເຄີຍຈົ່ມ ເຄີຍເວົ້າເປົ່າຫູ
ບັດນີ້ ນ້ອງຕ້ອງທົນຢູ່ ຜູ່ດຽວປ່ຽວໃຈ

ອ້າຍຈິ່ງ ໂຊກດີ
ຂໍຂວັນຊີວີ ຢ່າມີໝອງໃໝ້
ຈິ່ງຕັ້ງໃຈທົນ ສຸກລົ້ນ ມີຜົນບັ້ນປາຍ
ນ້ອງຈະຖນອມ ກາຍໃຈ ໃຫ້ອ້າຍຜູ່ດຽວ

ອາລັຍ ອາວອນ
ຍາມນອນພໍ່າເພີ້ ຫຼັບຕາລະເມີ ຫາອ້າຍຄົນດຽວ
ທົນຢູ່ທົນໝອງ ທົນຄອງ ຍອດຊາຍແສນປ່ຽວ
ອົນພຣົມ ໂປຣດໄດ້ແລຫຼຽວ ຢ່າລ້ຽວຫຼາຍໃຈ ເປັນອື່ນ

ຢ່າລືມ ນ້ອງນະ
ເມື່ອອ້າຍຫວນມາ ຢ່າພາສະອື້ນ
ຈິ່ງເຫັນໃຈຍິງ ທີ່ອ້າຍ ເຄີຍຮັກເຄີຍຊື່ນ
ອ້າຍຢ່າຫຼົງລົມ ຍິງອື່ນ ເລີຍລື່ນ ລືມນ້ອງ

1950+

ຄຳຫຼ້າ ໜໍ່ແກ້ວ
1967

# ຄືນແຫ່ງຄວາມຫຼັງ

ນິ່ງ ທາຕຣີ ມີຈັນສາຍ
ແສງ ກະຈາຍ ທົ່ວເມຄາ
ເບິ່ງ ເບື້ອງບົນ ພາກຟ້າດາຣາ
ເລື່ອນ ລອຍມາ ບົນກັບເດືອນ

ກ່ອນ ຍັງເຄີຍ ມີຈອມຂວັນ
ແນບ ເນື້ອນວນ ນັ່ງເປັນເພື່ອນ
ສຸກ ອັນໃດ ຈະມາປຽບເໝືອນ
ພາບ ຍັງເຕືອນ ຍັງຜັງໃຈ

↻ ຕລອດ ຄືນ ນັ້ນ
ບໍ່ອາດ ລືມໄດ້ ເພີ້ຢູ່ບໍ່ຫາຍ
ຈະຈົດ ຈະຈຳໄວ້ ຈະອົດຖນອມໄວ້
ມີໃຫ້ ອັບເສົາ

ຄ່ຳ ຄືນນີ້ ບໍ່ມີນ້ອງ
ຟ້າ ຈຶ່ງໝອງ ທາສີເສົ້າ
ຂາດດວງ ເດືອນສິ່ງດຽວ ປ່ຽວເຫງົາ
ເໝືອນ ສອງເຮົາ ບໍ່ພົບກັນ

ຄຳຫຼ້າ ໜໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ
1959

# ເທວີຫຼິ້ງຟ້າ

ບໍເຫັນ ໃຜງາມປານເຈົ້າ
ນ້ອງສາວ ໃຜຈອງແລ້ວຫຼືຍັງ
ຫາກເດີນທ່ຽວ ຂໍທຽວຮ່ວມທາງ
ຈະຄອຍຣະວັງ ກັ້ງພັຍໃຫ້ດອກໜາ

ຄຸ້ມໃດ ໜໍນາງນ້ອງຢູ່
ຢາກຮູ້ ແຕ່ຕອນ ໄດ້ເຫັນໜ້າ
ນ້ອງເປັນຄົນ ຫຼືເປັນເທວະດາ
ເບິ່ງປານນາງຟ້າ ທີ່ຫຼິ້ງມາ ເມືອງຄົນ

ຕິດຕາ ຕິດອົກ ຕິດໃຈ
ຈັ່ງແມ່ນງາມຫຼາຍ ເບິ່ງໄປດົນໆ
ຢາກເປັນເຈົ້າຂອງ ເຈົ້າເດ່ໜ້າມົນ
ໂປຣດຮັບຊາຍຈົນ ເໝືອນຄົນ ເປັນທາດແຫ່ງໃຈ

ນ້ອງສາວ ຫຼຽວມາພີ້ແດ່
ຢ່າແລ ໄປຫາ ຜູ້ອື່ນຫຼາຍ
ນ້ອງລິໄປ ຫຼືມາທາງໃດ
ຢ່າລືມບອກອ້າຍ ຈະໄດ້ເປັນ ມືປືນ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**



ບຸນທ່ຽງ ມະນີວົງ
1968

# ປ່ຽວໃຈ

ຢູ່ຜູ່ດຽວ ເຫງົາໃຈ
ໂອ້ຄຶດໄປ ໝອງຊວງ
ຢາກຈະມີ ຄູ່ຄວງ
ຢ້ານຖືກລວງ ປ້ຽວເປືອນ

ເບິ່ງບົນຟ້າ ຣາຕຣີ
ກໍຍັງມີ ແສງເດືອນ
ຍິ່ງເປັນແນວ ຊ່ວຍເຕືອນ
ຢາກມີເພື່ອນ ຊູໃຈ

↻ ລົມຣາຕຣີ ໂບຍໂບກມາ
ລົມໜາວ ພາໝອງໄໝ້
ລົມເຢັນໆ ໂຍກກິ່ງໄມ້
ພາຫົວໃຈ ໄຫວເຫວ່ວ່າ

ໂອ້ ຕົວເຮົາ ນີ້ຫົນ
ຕັ້ງໃຈລໍ ຮັກມາ
ຫາກມີຄົນ ເມດຕາ
ກະຣຸນາ ຊ່ວຍປອບໃຈ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ


ຮິບໂຮມເພັງຂອງ ຄຳຫຼ້າ ໜໍ່ແກ້ວ, ເຜີຍແຜ່ໂດຍ ທັມມະນູນ ພັນນຸເດຊ

ຈັນທະລາ ອຸເທນສັກດາ
1970

# ເຖົ້າກໍມັກ

ເຖິງເຖົ້າ ກະເປັນຕາມັກ
ໜ້າຮັກ ກວ່າສາວ ອາຍຸສິບສີ່
ໂບຮານທ່ານວ່າ ຄົນເຖົ້າໃຈດີ
ໂອບອ້ອມອາຣີ ບໍ່ມີໂມໂຫ ໂທໂສ

ເຖິງເຖົ້າ ກະບໍ່ເປັນຫຍັງ
ເນື້ອໜັງ ມັງສັງ ຍັງຕຶງເຕັ່ມໂຕ
ສະຕຣີສາວແກ່ ຢ່າຟ້າວໂມໂຫ
ຍັງງາມອັກໂຂເໝືອນ ຄລີໂອພັດຕຣາ

ຢ່າ ໄປຊາເຂົາ
ເຣື່ອງເພັງສາວເຖົ້າ ຈາກສຽງຂອງ ຈັນທະຣາ
ເຂົາຂຽນເຂົາແຕ່ງ ເພື່ອຄວາມສຸກສັນ ຫັນສາ
ສນຸກເຮຮາ ບໍ່ໄດ້ຂຽນດ່າ ໃຜເລີຍ

ເຖິງເຖົ້າ ກະຂໍປອງມັກ
ເຝົ້າຮັກ ແມ່ນາງ ໄວ້ເປັນຄູ່ເຊີຍ
ສາວນ້ອຍມີຢູ່ ບໍ່ສູ້ເຖົ້າເລີຍ
ຢ່າແກ້ງເມີນເສີຍ ສາວເອີຍ ສາວເຖົ້າກະມັກ

*(ຈົບ: ເຖິງເຖົ້າກະມັກ ເຖິງເຖົ້າແຫ່ງຄັກ)*

(ເວົ້າ) ນ້ອງສາວ ເຖິງເຈົ້າເຖົ້າກະສິເປັນອີຫຍັງລະ ເນື້ອໜັງກະຍັງມັງສັງເຕັ່ມໂຕ
ຢູ່ເດ່ນີ ເບິ່ງໄປເບິ່ງມານິງາມໆ ສາວເຖົ້ານີ້ເກາະ ງາມປານ ຄລີໂອພັດຕຣາ

ຈັນທະລາ ອຸເທນສັກດາ

# ເຖົ້າກໍມັກ (v2)

ເຖິງເຖົ້າ ກະເປັນຕາມັກ
ໜ້າຮັກ ກວ່າສາວ ອາຍຸສິບສີ່
ໂບຮານທ່ານວ່າ ຄົນເຖົ້າໃຈດີ
ໂອບອ້ອມອາລີ ບໍ່ມີໂມໂຫ ໂທໂສ

ເຖິງເຖົ້າ ກະບໍ່ເປັນຫຍັງ
ເນື້ອໜັງ ມັງສັງ ຍັງຕຶງເຕັ່ມໂຕ
ສະຕຣີສາວແກ່ ຢ່າຟ້າວໂມໂຫ
ຍັງງາມອັກໂຂ ເໝືອນ ຄລີໂອພັດຕຣາ

↻ ຢ່າ ໄປຊາເຂົາ
ເຣື່ອງເພັງສາວເຖົ້າ ຈາກສຽງຂອງ ຈັນທະຣາ
ເຂົາຂຽນເຂົາແຕ່ງ ເພື່ອຄວາມສຸກສັນ ຫັນສາ
ມ່ວນຊື່ນເຣຣາ ບໍ່ໄດ້ຂຽນວ່າ ໃຜເລີຍ

ເຖິງເຖົ້າ ກະຂໍປອງມັກ
ເຜົ່າຮັກ ແມ່ນາງ ໄວ້ເປັນຄູ່ເຊີຍ
ສາວນ້ອຍມີຢູ່ ບໍ່ສູ້ເຖົ້າເລີຍ
ຢ່າແກ້ງເມີນເສີຍ ສາວເອີຍ ສາວເຖົ້າກະມັກ

*(ຈົບ: ເຖິງເຖົ້າກະມັກ ເຖິງເຖົ້າແຫ່ງຄັກ)*

(ເວົ້າ) ນ້ອງສາວ ເຖິງເຈົ້າເຖົ້າກະສິເປັນອີຫຍັງລະ ເນື້ອໜັງກະຍັງມັງສັງເຕັ່ມໂຕ
ຢູ່ເດ່ນີ ເບິ່ງໄປເບິ່ງມານີ້ງາມໆ ສາວເຖົ້ານີ້ເກາະ ງາມປານ ຄລີໂອພັດຕຣາ

ເພັຊ
1968

# ອໍ່າຖໍ່າ



ອໍ່າຖໍ່າ ແຫ້ຫຳອ້າຍເອີຍ
ບໍເຄີຍ ເຫັນກັນມາກ່ອນ
ເບິ່ງດີນຫຼາຍ ຫົວໃຈອາວອນ
ພະເນຈອນ ດັ້ນດອນແດນໃດ

ອໍ່າຖໍ່າ ແຫ້ຫຳອ້າຍຫຳ
ນັ່ງລໍ ຄອຍຫາຜູ້ໃດ
ຖ້າຜູ້ຍິງ ຫຼືຖ້າຜູ້ຊາຍ
ພໍ່ສາຍໃຈ ຈົ່ງໄດ້ເອີ່ຍຈາ

ຊື່ຈັ່ງໃດຫຳ ບ້ານຢູ່ຄຸ້ມໃດ
ໂພນໄຊ ຫຼືອ້າຍຢູ່ ເມືອງວາ
ມີພໍ່ແມ່ ຫຼືລູກກໍ່າພ້າ
ໜ້າຕາ ທ່າທາງເຈົ້າຊູ້

ອໍ່າຖໍ່າ ອີ່ຫຼີຍອດຊາຍ
ຢາກໄດ້ ໄວ້ຮຽງຄຽງຄູ່
ຫາກແມ່ນບຸນ ຄ້ຳຈຸນຫນູນຊູ
ຈົ່ງຮັບຮູ້ ນ້ອງແດ່ຄົນດີ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ທັນຕະວັນ ຣາຊາສັກດ໌
1967

# ອະດີດລຳລຶກ

ອະດີດຍັງຝັງ ຍັງຝັງ ຢູ່ໃນດວງຈິດ
ຍັງເພີ້ຍັງຄິດ ເຖິງຄວາມຫຼັງ ເຄີຍຜ່ານມາ
ຍັງຮັກຍັງຫຼົງ ຍັງຄົງ ຕິດຕຣຶງອຸຣາ
ຫົວໃຈຍັງ ປຣາຖນາ ຢາກເຫັນຢາກມາ ຢູ່ຮຽງຄຽງຂວັນ

ອະດີດຍັງເຕືອນ ຍັງເຕືອນ ບໍມີວັນໜ່າຍ
ຍັງຄິດຍັງໝາຍ ຫວັງໃຈ ຕໍ່ສັນຍານັ້ນ
ທີ່ຮັກຄົງຮູ້ ຄົງຮູ້ ແກ່ໃຈ ມານານ
ທີ່ສອງເຮົາແຍກ ທາງກັນ ດ້ວຍຄວາມກີດກັນ ຂອງປຣະເພນີ

ຄົງເປັນເວນກັມ ຊັກນຳ ດົງຈ່ອງເຮົາ
ຮັກຈຶ່ງຕ້ອງເສົ້າ ເຜົາທາງຮັກ ເປັນທຸລີ
ໂອ້ ກາມມະເທບ ໃຈຮ້າຍ ບໍຄິດປຣານີ
ຮັກກັນ ໝັ້ນຢູ່ດີໆ ຍັງມີແນວທາງ ແຍກກັນ

ອະດີດຄວາມຮັກ ຄວາມຮັກ ເຮົານັ້ນຍັງຢູ່
ຍັງຮັກຍອດຊູ້ ຄູ່ແລ້ວ ຄາດແຄ້ວຈາກກັນ
ຢ່າລືມຢ່າລືມ ຢ່າລືມ ຄວາມຫຼັງກ່ອນນັ້ນ
ຮັກຍັງຄົງຢູ່ ທຸກວັນ ຮັກຈົນເຖິງວັນ ວັນຈະສິ້ນໃຈ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ຄຳຫຼ້າ ໜ່ຳແກ້ວ
1993

# ພັທນາກອນ (v.2)

ຂ້ອຍຢາກມີເງິນ ຢູ່ເຕັມ ຈັກໝື່ນ ທະນາຄານ
ຈະພັທນາການ ລ່ອຍຣັຖບານ ບ້ານເມືອງເຮືອງຮຸ່ງ
ຖນົນຫົນທາງ ລາດຢາງ ແຖວນອກ ດັ່ງກັບໃນກຸງ
ໂຮງໝໍໂຮງຮຽນ ນ້ຳໄຟໄຫຼຮຸ່ງ ກວ່າກຸງນິວຢອກ ແລະລອນດອນ

ຂ້ອຍຢາກເປັນຄົນ ເລີດໃນ ເວດມົນຄາຖາ
ຈະຄຸ້ມອານາ ພູຜາປ່າໄມ້ ຂຽວງາມສະກ່ອນ
ດຽວນີ້ໂອໂຊນ ຂອງໂລກຕົກຕ່ຳ ມັນເດືອດມັນຮ້ອນ
ຫ້ວຍໜອງຄອງທາມ ນ້ຳໃນໄຫຼຂ້ອນ ສັດສາປາດອນ ໃກ້ຈະສູນພັນທ໌

ຣະວັງ ຣະວັງ ພໍ່ຄ້າ ໜ້າເລືອດທັງຫຼາຍ
ຢ່າຫວັງແຕ່ຜົນ ກຳໄລ ງົກເອົາແຕ່ໄດ້ ເທົ່ານັ້ນ
ຢ່າຕັດຢ່າງດຽວ ສີຂຽວ ຈະດັບສູນພັນ
ຕ້ອງປູກຕ້ອງຜັງ ທົດແທນພືດພັນ ໃຫ້ມັນຂຽວງາມ ດັ່ງຫຼັງ

ນ້ຳກໍຈະໄຫຼ ປ່າໄມ້ ຈະເຕັມແຜ່ນດິນ
ທຳມາຫາກິນ ສບາຍ ຫາຍຮ້ອນທຸກຢ່າງ
ອານຸລັກປ່າດົງ ໃຫ້ຄົງມີຢູ່ ດັ່ງເກົ່າດັ່ງຫຼັງ
ສັດປ່າສັດນ້ຳ ງອກງາມສະພັ້ງ ຍຸທາງສ້າງສັນ ສວັນແນ່ນອນ

ຄຳຫຼ້າ ໜ່ຳແກ້ວ : ທຳນອງ & ຄຳຮ້ອງ

ບຸນທົງ ວົງສາລີ
1968

# ນິມິດພິສວາດ

ຈົບແລ້ວທົບຈຽມ ໜຽມອາຍໄຜ່ຝັນ ທຸກຄືນ
ຝັນໄດ້ເຊີຍຊື່ນ ທຸກວັນແລະຄືນ ຊື່ນໃຈ
ອ້າຍພານ້ອງຍ່າງ ທົ່ວແດນ ຮອດແດນວິມານ ກ້ວາງໃຫຍ່
ຫຼັບໄປຝັນໄປ ມິໄດ້ເລືອນລາ

ເຮົາສອງຄູ່ກັນ ເໝືອນຈັນຄູ່ຟ້າ ເບື້ອງບົນ
ພຣະເຈົ້າຄົງດົນ ຜິວມິນຮັກທານ ໃຫ້ມາ
ນ້ອງນາງຜິວຜ່ອງ ຂາວນວນ ຊິດຊວນມິຄວນ ຫ່າງລາ
ສຸດປຣາຖນາ ດວງໃຈ

ນາງນອນແນບອົກ ດັ່ງນົກຫຼົງຮັງ
ແນ່ໂສມສະອ່າງ ຊ່າງພາຫຼົງໄຫຼ
ບໍ່ເຄີຍເມີນໜາງ ເໝືອນນາງຮູ້ໃຈ
ກອດນາງເອົາໄວ້ ສຸກໃຈເຫຼືອທົນ

ພັກນ້ອງເໝືອນຈັນ ວັນເພັງເປັ່ງແສງ ໂສພາ
ສອງບົວຊັກພາ ຫວິວໃນອຸຣາ ເຫຼືອລົ້ນ
ສຽງລົມພັດໂຜ່ ພຣຶກສາ ສຽງນອງຈາກຟ້າ ຫ່າຝົນ
ຕື່ນໃຈໄຮ້ຜົນ ຈາກຝັນ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**


ຮຽບໂຮມເພັງຂອງ **ຄຳຫຼ້າ ໜໍ່ແກ້ວ**, ເຜີຍແຜ່ໂດຍ **ທັມມະນູນ ພັນນຸເດຊ**

ບຸນທ່ຽງ ມະນີວົງ
1969

# ພອນວັນເກີດ

ທ່ານເກີດວັນນີ້ ຂໍຈົ່ງມີ ຣາສີໃສສ່ອງ
ຢ່າໝົ່ນໝອງ ໃຫ້ຄອງສຸກ ຕລອດຊີວີ
ອັນໂຣຄາ ໂພຍພັຍ ຢ່າໄດ້ມີ
ຈົ່ງສຸກຂີ ສຸກຂີ ສົມປຣາຖນາ

ມະໂນນຶກ ສິ່ງໃດ ໃນໂລກນີ້
ຈົ່ງໄດ້ມີ ສົມພອນ ທີ່ວອນວ່າ
ກຽດຕິຍົດ ຊື່ສຽງ ກ້ອງໂລກາ
ເຮືອງອຳນາດ ວາສນາ ໄຫຼມາກອງ

ທ່ານເກີດວັນນີ້ ເປັນວັນດີ ອະມຸດຕະໂຊກ
ຢ່າມີທຸກ ຢ່າມີໂສກ ຢ່າເສົ້າໝົ່ນໝອງ
ອັນເງິນຄຳ ມາກມາຍ ຫຼາຍກ່າຍກອງ
ຢ່າມີມານ ໄຕ່ຕ້ອງ ຕລອດການ



ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໝໍ່ແກ້ວ

1950+

ຄຳຫຼ້າ ໝັ່ນແກ້ວ
1966

# ຢ້ານນ້ຳຖ້ວມ

ຝົນຕົກຢູ່ທາງ ພາກເໜືອ
ນ້ຳຕ້ອງລົ່ງເຫຼືອ ທາງໃຕ້
ຢ້ານຖ້ວມບ້ານເຮືອນ ຖ້ວມນາຖ້ວມໄຮ່
ນ້ຳຂຶ້ນປີໃດ ອຸກໃຈທຸກທີ

ບ້ານຢູ່ແຄມຂອງ ໜອງໃຈ
ເຫັນນ້ຳຂຶ້ນຫຼາຍ ປີນີ້
ຢ້ານໄຮ່ຢ້ານນາ ລຸງປ້ານ້ອງພີ່
ລອຍລ່ອງນະທີ ເໝືອນປີກ່ອນມາ

ຢ້ານຈະ ບໍ່ມີເຂົ້າກິນ ຢ້ານດິນ ບໍ່ມີຈະຢູ່
ໂປຣດຈົ່ງເອັນດູ ດ້ວຍເທພທາຣາ
ຂໍວອນ ເທພະເຈົ້າ ຢຶກເຄົ້າອົງນາຄາ
ຢ່າໃຫ້ທາຣາ ຂຶ້ນຈົນລົ້ນຝັ່ງ

ຂອງຢາກໝາກແພງ ເຫຼືອເກີນ
ແຖມຄ່າຂອງເງິນ ບໍ່ຢືນຢັ້ງ
ແມ່ນຫາກນ້ຳນອງ ລົ້ນຄອງລົ້ນຝັ່ງ
ຄົງຊິ້ນຊີວັງ ຍ້ອນວັງນ້ຳວົນ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໝັ່ນແກ້ວ

ແສນສັກດາ
1970

# ເຮົາຮັກກັນໄດ້

ເຮົາຮັກກັນໄດ້ ຫາກຫົວໃຈ ເຮົາກົງກັນ
ເຮົາຮັກກັນໝັ້ນ ຫາກສັມພັນ ນັ້ນຍິ່ງໃຫຍ່
ເຮົາຮັກກັນໜາ ໃຫ້ສັນຍາ ນັ້ນຈິງໃຈ
ເຮົາຮັກກັນໄປ ຫາກຫົວໃຈ ເຮົາປຣາຖນາ

ເຮົາຮັກກັນໄດ້ ຫາກຫົວໃຈ ເຮົາຕ້ອງການ
ເຮົາຮັກກັນໝັ້ນ ດັ່ງດວງຈັນ ຮັກກັບຟ້າ
ເຮົາຮັກກັນໜໍ່ ດັ່ງໃຈຂໍ ຮ້ອງວອນວ່າ
ເຮົາຮັກກັນໜາ ຈົນຊົ່ວຟ້າ ດິນຈະສລາຍ

ເຖິງໃຜຈະເຍີ້ຍ ເອີຍຂວັນບິນທາ ຢ່າໄຫວຫວັ່ນ
ເຮົາຮັກກັນແລ້ວ ເຮົາຮັກກັນໝັ້ນ ເຮົາຮັກກັນໄວ້
ເຖິງຟ້າຈະປິ້ນ ແມ່ນດິນຈະຫຼົ້ມ ຈົມຫາຍໄປ
ຂໍພຽງແຕ່ໄດ້ ຮັກສົມດັ່ງໃຈ ໝັ້ນໃນສັດທາ

ເຮົາຮັກກັນໄດ້ ຫາກຫົວໃຈ ເຮົາໄຝ່ຝັນ
ເຮົາຮັກກັນໝັ້ນ ຄຶດເຖິງກັນ ທຸກເວລາ
ເຮົາຮັກກັນໄວ້ ຢ່າຫວັ່ນໃຈ ຈະຮ້າງລາ
ເຮົາຮັກກັນໜາ ກວ່າຊີວາ ເຮົາຈະສິ້ນສູນ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ບຸນທ່ຽງ ມະນີວົງ
1968

# ບໍ່ກ້າບອກ

ຢາກບອກໃຫ້ຮູ້ ອົດຢູ່ນານແສນນານ
ບໍ່ກ້າຈະຂານ ເກງສວັນຈະວົ້ມ
ຮັກຢູ່ໃນໃຈ ບໍ່ກ້າໄຂກ້າວົມ
ຮັກຝັງໃຈບົ່ມ ຣະທົມຂົມຂື່ນ ດຽວດາຍ

ຫຼັບໄຫຼໃຝ່ຝັນ ເຝົ້າຄອຍວັນ ພົບໜ້າ
ຄ່ຳຄອນຫວນຫາ ອົກຜວາຮ້ອງໄຫ້
ຄຶດວ່າຊາດນີ້ ຄົງມີຫວັງ ຕັ້ງໃຈ
ຄຶດວ່າຄົງໄດ້ ສົມໃຈ ສົມປຣາຖນາ

ຮັກນີ້ ມີແຕ່ຕອນ ແຮກເຫັນ
ສົນໃຈບໍ່ເວັ້ນ ຄົງເປັນວາສນາ
ຫຼັບກໍ່ຝັນ ຄ່ຳຄືນວັນ ຫວັ່ນຜວາ
ຢາກພົບໜ້າ ຢາກມາຫາ ເວົ້າຈາພາທີ

ຊື່ນໃຈໃນຝັນ ຢູ່ທຸກວັນທຸກຄືນ
ຫຼັບໆຕື່ນໆ ສຸດຈະຝືນ ແລ້ວນີ້
ຄຶດຮອດສເມີ ພໍ່າເພີ້ທຸກນາທີ
ຂໍຮັກຢ່າມີ ຢ່າມີ ມານຂວາງຂັດທາງ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ບຸນທ່ຽງ ມະນີວົງ
1965

# ຍັງຮັກຍັງຫ່ວງ

ກ່ອນນັ້ນເຮົາສອງ ຮັກກັນຝັງຈິດ
ບໍ່ເຄີຍ ຄິດວ່າຮັກ ຈະຫ່າງກັນໄກ
ແຕ່ນ້ອງມາ ໜີໜ້າຈາກໄປ
ປ່ອຍອ້າຍໄວ້ ໃຫ້ຢູ່ກັບຄວາມ ຊ້ຳໃຈ

ບັດນີ້ເຮົາສອງ ແຍກທາງກັນຢູ່
ຢາກຈະຮູ້ ວ່ານາງ ຮັກຢູ່ກັບໃຜ
ຊາຍນັ້ນມີ ຮັກຈິງຫຼືໃດ
ສຸກສົມໃຈ ຫຼືນາງ ນ້ຳຕາຫຼັ່ງນອງ

ຂ້ອຍອມຮັບຄວາມ ເຈັບຊ້ຳ
ທຸກສິ່ງທີ່ທຳ ໃຫ້ໄວ້
ຂ້ານີ້ອະພັຍ ໃຫ້ນ້ອງ
ຍັງຮັກຍັງຫວງ ບໍ່ລວງຮັບຮອງ ນຶ່ງບໍ່ມີສອງ ບໍ່ຈືດຈາງ

ຫາກນາງຖືກລວງ ຣະທົມຂົມຂື່ນ
ຫາກຊະອື້ນ ຍ້ອນຮັກເຂົາປ່ຽນ ເປັນຊັງ
ຈົ່ງຫວນຄືນ ຮັກຄົນທີ່ຫວັງ
ຢູ່ທາງຫຼັງ ອ້າຍຍັງ ຮັກນາງດັ່ງເຄີຍ

1977

ໄຊຊະນະ ທານາດາບຸດ
1969

# ສຸດປຼາຖນາ

ໃຈ ເກືອບຈະຂາດແລ້ວ
ດ້ວຍຮັກດ້ວງແກ້ວ ເຕັມທີ່
ໃນ ພືນໂລກເຮົານີ້ ດຸດດັ່ງຈະມີ ພຽງນ້ອງຄົນດຽວ

ຜັນ ຫຼັບຕາກໍ່ຜັນ
ເພີ້ເພີ້ລຳພັນ ຜັນກ່ຽວ
ມີ ນຶ່ງນ້ອງນາງດຽວ ສຸດໜ່ຽວສຸດຍັ້ງ ຜັງໃຈ

↻ ເໝືອນມີນສະກົດ ດວງໃຈ ໃຫ້ໄຝ່ຜັນຫາ
ສຸດປຣາຖນາ ສຸດຫ່ວງການດາ ທຸກລົມຫາຍໃຈ
ຮັກຈິງຈຶ່ງບອກ ຢ່າຫຼອກໃຫ້ຫຼົງ ພະວົງມົວາຍ
ຢ່າຫຼອກໃຫ້ຊ້ຳ ຢ່າຫຼອກໃຫ້ອາຍ ຢ່າໝາຍພຽງລວງ

ໂທ ສຸດປຣາຖນາ
ສຸດຍັ້ງອຸຣາ ບ້າປ່ວງ
ໃຈ ອ້າຍຫ່ວງອ້າຍຫວງ ໂອ ເທບບົນສວງ ຂໍທີ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ບຸນທ່ຽງ ມະນີວົງ
1969

# ປ່ຽອ້າຍເຖີດ



ປ່ອຍອ້າຍຢູ່ ຜູ່ດຽວທີ່ຮັກ
ແມ່ນຫາກນ້ອງຮັກ ອ້າຍຈິງຈາກໃຈ
ອ້າຍຈົນ ຢາກໄຫ້
ຖ້າຂືນຢູ່ໄປ ຄົງອາຍຂາຍໜ້າ

ບໍຫານຢູ່ ຕໍ່ໄປແລ້ວເອີຍ
ຢູ່ໃຫ້ຄົນເຍີ້ຍ ເຍີ້ຍຫຍັນນິນທາ
ອ້າຍຂໍ ເວລາ
ໄປພັດທະນາ ຖານະແລະສັກສີ

↻ ອຸດົມຂະຕິ ເຮົາຄົນລະຢ່າງ
ຈື່ງຂໍຫຼີກທາງ ໄປຄົນລະທີ
ຫາກບຸນເຮົາຄາດ ໄດ້ຮ່ວມກັນ
ກໍ່ຄົງໄດ້ຫັນ ມາຮ່ວມຊີວີ ຊົ່ວຊີວິດນີ້ ອ້າຍມີຮັກດຽວ

ປ່ອຍອ້າຍອອກ ຈາກເອີກນ້ອງໄປ
ຈະດີຈະຮ້າຍ ເປັນຕາຍດາຍດຽວ
ຂໍນ້ອງ ຢ່າກ່ຽວ
ຂໍທຸກຄົນດຽວ ຊ້ຳດຽວປ່ຽວໃຈ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໝູ່ແກ້ວ

ບຸນທ່ຽງ ມະນີວົງ
1968

# ຮັກແທ້

ອ້າຍຮັກນ້ອງປານ ຈະກືນກິນ
ລວມຟ້າລວມດິ ບໍ່ເໝືອນໄດ້
ຫາງນ້ອງໄປຢູ່ ແຫ່ງຫົນໃດ
ໃຈຍັງຮ່ຳຮ້ອງ ຮຽກຫານ້ອງ

ບໍ່ເຫັນຍິງໃດ ອີກແລ້ວເໝືອນ
ບໍ່ຂໍລືມເລືອນ ຫຼອກເນື້ອທອງ
ລວມຮັກລວມຫ່ວງ ຮ່ວມທັງຜອງ
ມອບແດ່ນາງນ້ອງ ພຽງຜູ້ດຽວ

↺ ແມ່ນມີນາງຟ້າ ຈາກບິນສວງ
ສາວງາມທັ້ງປວງ ບໍ່ຂໍກ່ຽວ
ມອບກາຍໃຈພັກ ພຽງນີ້ງດຽວ
ບໍ່ແລບໍ່ຫຼຽວ ໃຜອີກແລ້ວ

ສຸດຮັກນ້ອງເກີນ ກວ່າຊີວາ
ສຸດຫວັງຕັ້ງຕາ ແຕ່ນ້ອງແກ້ວ
ສຸດຮັກແສນຊື່ນ ດວງໃຈແລ້ວ
ສຸດພຽງນີ້ແລ້ວ ສຸດແກ້ວໃຈ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ບຸນທ່ຽງ ມະນີວົງ
1968

# ສເນສາວ Vietnam

ເຄີຍເຫັນແອ່ນມຢູ່ ທຸກວັນເວລາ
ໃຈປຣາຖນາ ບໍ່ກ້າຈະເອີຍວາຈີ
ຫຼົງຮັກຫຼົງປອງ ມາຕັ້ງສອງປີ
ໝົດໝື່ນເປັນຣາຊີນີ ຊ່ວຍທີແອ່ນເອີຍ

ທຸກຄືນຊິມວ່າ ແອ່ນແດບເໝືອນຈັນ
ແລ້ວເກັບໄປຜັນ ກະສັນ ຢາກຊື່ນຢາກເຊີຍ
ຫາກຮູ້ແລ້ວແອ່ນ ຢ່າໄດ້ທຳເສີຍ
ໃຈອັນເທື່ອງແອ່ນ ແລ້ວເອີຍ ບຽດຄົງ ແຫງຄົງ

ເດມໃບ່ ແສງຈັນສາດຊ່ອງ
ຄົງແດບເໝືອນນ້ອງ ເນື້ອງທອງ ລະອໍອົງ
ຕໍ່ໃຫ້ນາງຟ້າ ເທວາພຣະອິນ ນຳສົ່ງ
ລັບລອງຕ້ອງອາຍ ໂສມຍົງ ຍືນຊົງຫຼົງຊົມ ແອ່ນແນ່

ອົ່ງວແອ່ນຝັງຈິດ ເປັນມິດຄູ່ໃຈ
ບໍ່ເຄີຍ ເຫັນໃຜ ວິລັຍບອກໃຫ້ ແອ່ນແຫງ
ຫາກນ້ອງໃຈດຳ ທຳເສີຍມີແລ
ອັນຄົງເຈັດໂຮຍ ແນ່ງ ບຽດຄົງ ແຫງຄົງ

ຄຳຕຸ່ນ
1968

# ຮັກກັນຊັງກັນ

ຮັກກັນ ເໝືອນຈະກິນ ກິນໄດ້
ໄປໃສມາໃສ ສຸດອາໄລ ແສນຫວງ
ຍ້ານແຕ່ຄົນຮັກ ຄຶດຫຼອກຄຶດລວງ
ທັງຫວງທັງຫ່ວງ ຍ້ານເຂົາຄອງ ຄົນອື່ນ

ຊັງກັນ ຄຶດຢາກບິນ ໜີໄດ້
ຮັກຫຼາຍຊັງຫຼາຍ ບໍ່ເຫັນໃຈ ຄາຍຊື່ນ
ຄຳໝັ້ນສັນຍາ ຫຼີບໜ້າສົງຄືນ
ຈາກຫວານເປັນຂົມ ຄືນຄວາມຮັກ ຈາກຈອນ

↻ ຊັງກັນນັ້ນ ມັນງ່າຍແທ້ໜໍ່ ມິໄດ້ຕິດຕໍ່ ຂໍຄວາມເຫັນໃຈກ່ອນ
ຜິດໃຈໜ້ອຍດຽວ ບໍ່ແລບໍ່ຫຼຽວ ບໍ່ອາທອນ
ຮັກກັນ ຕ້ອງເຝົ້າອາວອນ ງໍ້ງອນ ຢູ່ທຸກຄືນວັນ

ຮັກກັນ ນອນກະຝັນ ເຫັນໜ້າ
ຂ້າມຫ້ວຍຂ້າມຜາ ປຣາຖນາ ຮັກນັ້ນ
ບັດຊັງຂຶ້ນມາ ຢາກຂ້າຢາກຟັນ
ຢາກໜີໜ້າກັນ ບໍ່ຢາກພົບພານ ອີກເລີຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ສົມພອງ
1968

# ຮັກຢ່າຫຼອກ

ຮັກຢ່າຫຼອກ ຢ່າຫຼອກໃຫ້ຫຼົງ ຕາຍໃຈ
ຢ່າໃຫ້ອາຍ ຢ່າຂາຍຂີ້ໜ້າ ອີ່ນເຂົາ

ຮັກແກມຫຼີ້ນ ຢ່າບອກຢ່າປີ້ນ ມົວເມົາ
ນ້ອງຍັງສາວ ເໝືອນດາວປະດັບ ຟາກຟ້າ

ຢາກເຫັນຊາຍໃຈເພັດ ແລະເດັດແນ່ນອນ
ບໍ່ມີຫຼອກຫຼອນ ໃຫ້ຍິງເສັຽທ່າ
ໃຈດຽວຮັກດຽວ ຈົນສິ້ນຊີວາ
ແມ່ນດິນບົກໜ້າ ຢ່າຄາຍ

ຮັກຢ່າເລືອກ ເລືອກມີສອງ ດວງໃຈ
ຫາກຊາຍໃດ ສົນໃຈ ເຊີນບອກມາເລີຍ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໝໍ່ແກ້ວ**

1950+

ແສງສຸຣິຈັນ

# ອ້າຍກັບມາແລ້ວ

ອ້າຍກັບມາແລ້ວ ມາແລ້ວແກ້ວຕາ
ອ້າຍຄືນມາຫາ ຍອດຮັກຂອງອ້າຍ
ກ່ອນນີ້ອ້າຍຫ່າງ ຈາກນາງຫ່າງໄກ
ສຸດຫ່ວງອາລັຍ ນ້ອງທຸກຄືນວັນ

ອ້າຍຄືນມາແລ້ວ ມາແລ້ວແກ້ວເອີຍ
ຢ່າແກ້ງເມີນເສີຍ ຮັກເຄີຍໝາຍໝັ້ນ
ເຮົາສອງເຄີຍຊື່ນ ຍັ້ງຢືນສັມພັນ
ບໍ່ມີແປຜັນ ຮັກນັ້ນຝັງໃຈ

ເຖິງເຂົາຂຶ້ນເດືອນ ເຖິງເຂົາຂຶ້ນດາວ
ຮັກຍັງຄືເກົ່າ ບໍ່ແຕກສລາຍ
ເຖິງອ້າຍຈາກນ້ອງ ຈາກນ້ອງໄປໄກ
ຮັກຍັງລົ້ນໃຈ ຖ້ອມໃຈມີເບົາ

ໂອ້ ສຸດທີ່ຮັກ ອ້າຍຮັກບໍ່ລືມ
ບໍ່ລືມບໍ່ລືມ ຮັກດວງພຽງເຈົ້າ
ຫຼືເທບທານໃຫ້ ແກ່ໃຈຮັກເຮົາ
ອ້າຍຄອຍແຕ່ເຜົ້າ ຮັກເຈົ້າແທ້ຈິງ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ບັງອອນ

# ຮັກກັນເໝືອນພີ່ນ້ອງ



ຮັກກັນເໝືອນພີ່ ເໝືອນນ້ອງ ບໍດີກວ່າຫວະ
ຢ່າງທັມມະດາ ຈະພາ ໃຫ້ເຮົາສຸກສັນ
ບໍຕ້ອງຫຶງຫວງ ຂັດຂວາງ ຊີງກັນແລະກັນ
ຢ່າກິດຢ່າຂວງ ໃຫ້ມັນເປືອງສມອງ

ຮັກກັນເໝືອນເພື່ອນ ເໝືອນຝູງ ຈະດີບໍນ້ອຍ
ຈະບໍໄດ້ຄອຍ ອິນອອຍ ປະຄັບປະຄອງ
ຈະຢູ່ຈະກິນ ຈະບິນ ເໝືອນກັບຫົງທອງ
ຢູ່ຢ່າງພີ່ນ້ອງ ມີຕ້ອງ ໃຫ້ຫ່ວງກັງວົນ

ຢູ່ຢ່າງນີ້ ຍິ່ງມີຄວາມສຸກ
ມັນແສນສນຸກ ສນຸກໃນໃຈ ເຫຼືອລົ້ນ
ຈະກິນຈະນອນ ຈະຈອນ ບໍມີໃຜວົນ
ທຸກດີມີຈົນ ຕ່າງຄົນ ຢູ່ໃຜຢູ່ມັນ

ຮັກກັນຄືອ້າຍ ຄືນ້ອງ ຈະດີຍິ່ງນັກ
ຢ່າເອົາຄວາມຮັກ ຄວາມຮັກໜຸ່ມສາວ ເສັ່ງນັ້ນ
ບໍຢາກຜິດຫວັງ ເພາະຍັງຫາຄວາມ ສຸກສັນ
ຈິ່ງມາຮັກກັນ ຮັກກັນ ຢ່າງພີ່ຢ່າງນ້ອງ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ມະນີວັນ

# ຫົວອົກຍິງ

ຍາກຍິ່ງໜັກໜາ ໄດ້ເປັນນາຣີ
ເກີດເປັນສະຕຣີ ຫາມີຄວາມສຸກ ສົມປອງ
ລະວັງຣະວ່ງງ ສຳນຽງຖ້ອຍຄຳ ຄ່ຽມຄ່ອງ
ປະເພນີ ຮາຊີຮີດຄອງ ມາຣະຍາດຄ່ອງ ອ່ອນຫວານ

ວຽກບ້ານການເຮືອນ ຕ້ອງໃຫ້ຮຽບຮ້ອຍ
ເຝົ້າພຽບລູກນ້ອຍ ຫາຄອຍ ຕົກແຕ່ງອາຫານ
ເຖິງເປັນເພດອ່ອນ ຜັນຜ່ອນຊີ່ຕຣົງ ຄົງໝັ້ນ
ອົດນອບນ້ອມ ທອມຮັກຜູກພັນ ພຽບຖຸນອມໝັ້ນ ອາລົມ

ຂໍພຽງຜົວແກ້ວ ຢ່ານອກໃຈ ຫຼາຍຈິດ
ຈົ່ງຈ່ອຍນ້ອງຄິດ ຫາທາງສຸກສັນ ຊື່ນຊົມ
ຍາມກິນຍາມນອນ ພັກຜ່ອນ ຢ່າໃຫ້ຂື່ນຂົມ
ຢ່າຫາເມັຽນ້ອຍ ຫ້ອຍຊົມ ຍິງບໍ່ນິຍົມ ຂໍນຳ ໆ

ຍາກຍິ່ງອັກໂຂ ໂທເປັນສະຕຣີ
ແຕ່ຕົວຂ້ານີ້ ມິເຄີຍແອອ່ອນ ເກງຂາມ
ຍິ່ງທຳດີໄດ້ ຈະໄດ້ຂຶ້ນຊື່ ລືນາມ
ກຽດສະຕຣີ ມີພ້ອມຄວາມງາມ ໃຈສເມືອນນ້ຳ ວັງຫຼວງ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ


ຮີບໂຮມເພັງຂອງ ຄຳຫຼ້າ ໜໍ່ແກ້ວ, ເຜີຍແຜ່ໂດຽ ທັມມະນູນ ພັນນຸເດຊ

ວົງເດືອນ

# ພຽງເຫັນໜ້າ

ພຽງເຫັນໜ້າ ຢາກເວົ້າຈາ ປຣາສັຍທັນທີ
ວົງເຮືອນມາ ມາພົບນາຣີ ສະບາຍດີ ໆ ຢູ່ຫວະນ້ອງສາວ

ພຽງເຫັນໜ້າ ສຸກອຸຣາ ບໍ່ຫາໃສເທົ່າ
ມາຄົນດຽວ ຫຼືມີຄົນເຝົ້າ ຫ້ອງຫົວໃຈວ່າງເປົ່າ ຫຼືເຈົ້າມີຄູ່

ອ້າຍນີ້ຍັງເປັນໂສດ ສົດໆ ບໍ່ເຄີຍ ມີຊູ້
ວານນີ້ ອ້າຍໄປຫາໝໍດູ ໝໍບອກຈະພົບເນື້ອຄູ່ ຢູ່ບ່ອນນີ້ລະ

ພຽງເຫັນນ້ອງ ຈິດໝາຍປອງ ພຽງນ້ອງຈຽນບ້າ
ຄົນງາມໆ ເວົ້າກອນດີກວ່າ ຢ່າມົວເສີຍທຳທ່າ ຂວັນຕາຄົນດີ

24/VII
ຫ້າມຈຳໜ່າຍ

1977

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ໄພທອງ

# ໂລກຍັງກວ້າງ

ໂລກນີ້ ບໍ່ທີ່ໃບຂາມ
ຄົນງາມ ບໍ່ມີພຽງເຈົ້າ
ຢ່າຫວັງ ວ່າອ້າຍຈະເສົ້າ
ຂາດເຈົ້າ ມາເປັນຄູ່ໃຈ

ໂລກນີ້ ບໍ່ທີ່ໃບມອນ
ຢ່າງອນ ວ່າງາມວິໄລ
ບໍ່ເຫິງ ເຈົ້າຕ້ອງຮ້ອງໄຫ້
ເສັຽໃຈ ເມື່ອເດີນຜິດທາງ

ຍາມນີ້ ເຈົ້າເດັ່ນໂສພາ
ມີໜຸ່ມຫຼາຍໜ້າ ແຫ່ມາປອງໝາຍ ຄັບຄັ່ງ
ເຖິງຄາວ ເມື່ອເຈົ້າ ຕ້ອງນ້ຳຕາລັ່ງ
ໃຜທົນຈະນັ່ງ ອອຍໃຈ ແລະເສັດນ້ຳຕາ

ໂລກນີ້ ບໍ່ທີ່ໃບຂີງ
ຜູ້ຍິງ ມາກມາຍໃນຫລ້າ
ສົດສວຍ ແຖມຍັງໂສພາ
ໃຜວ່າ ຫາຈົບສະຕຣີ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຈັນທະລາ ອຸເທນສັກດາ

# ຮັກນ້ອງແທ້



ບໍ່ເຫັນນ້ອງ ມັນເປັນເຫງົາໆ
ບໍ່ພົບເຈົ້າ ເສົ້າໆ ຊຶມໆ
ຈະຢູ່ໃສ ບໍ່ລືມ ໆ
ຮັກຂື້ນຕຶມ ທຸກວັນ ໆ

ບໍ່ເຫັນໜ້າ ຍິ່ງພາໃຫ້ໝອງ
ຢ້ານນວນນ້ອງ ລອຍລ່ອງເຫຫັນ
ຢ້ານທີ່ຮັກ ຈະຫັກສັມພັນ
ແມ່ນຮັກສບັ້ນ ຈະກັ້ນໃຈຕາຍ

ຮັກນ້ອງແທ້ ບໍ່ແປປ່ຽນແປງ
ຢ່າຫວາດຣະແວງ ອ້າຍຈະປ່ຽນໃຈ
ຂໍພຽງນ້ອງ ຢ່າລ່ອງລອຍໄປ
ປ່ຽນອີກປ່ຽນໃຈ ປ່ຽນຊາຍໝາຍປອງ

ຢາກພົບເຈົ້າ ຢາກເວົ້າລົມນຳ
ເຊົ້າສວາຍຄ່ຳ ຢາກລ່ຳແວນ້ອງ
ຢາກເຊີຍຊິດ ແນບຕິດເນື້ອງທອງ
ສຽງເພັງກ້ອງ ໂປຣດນ້ອງ ຈົ່ງເຫັນໃຈ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

*ຮັກນ້ອງແທ້ໆ...*



ກອບແກ້ວ

# ໂສກຮັກ

ຕັ້ງໃຈ ໄວ້ມານານ ເກືອບປີ
ເຖິງວັນງາມ ຍາມດີ ຈະມີຜູ້ໃຫຍ່ ມາຂໍ
ບອກແລ້ວ ອ້າຍຍັງບໍ່ ພຽງພໍ
ໃສ່ນ້ອງວ່າ ຈະລໍ ຈະລໍ ຈະລໍແຕ່ອ້າຍ

ບັດນີ້ ນ້ອງມີຄູ່ ເສັ່ງແລ້ວ
ເຫຼືອແຮງແພງ ປານແກ້ວ ແຕ່ແລ້ວ ນ້ອງມາປ່ຽນໃຈ
ກ່ອນນັ້ນ ນ້ອງສັນຍາກັບໃຜ ຈົນຂວັນບິດເບືອນອຽງອາຍ
ຍາກຕາຍ ໃນອ້ອມກອດນີ້

↻ ໃຈ ຂອງຍິງ ຂອງຍິງໝໍ່ໃຈ
ຫຼອກຂ້າໃຫ້ອາຍ ໂຫດຮ້າຍ ຮ້າຍຍິ່ງກວ່າຜີ
ແມ່ນຕາຍແລ້ວເກີດ ເກີດແລ້ວ ຢ່າພົບອີກທີ
ພໍແລ້ວ ເທື່ອດຽວເທົ່ານີ້ ສຸກຂີ ເຖີດນະຂວັນໃຈ

ສິ້ນແລ້ວ ຍອດຊີວາຂ້ານີ້
ເຂົາຕັດໄຍ ໄມຕຣີ ຄວາມດີ ທີ່ເຄີຍໃຫ້ໄວ
ໂສກສັນ ເພີ້ລຳພັນຫວງໄຍ ບຸນນ້ອຍ ນັ່ງຄອຍດຽວດາຍ
ຍາກຕາຍ ເຂົາລວງໃຫ້ໝອງ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ

# ຢ່າຈັບປາສອງມື

ຢ່າເວີຍ ຢ່າຄິດຈັບປາສອງມື
ຢ່າຖື ວ່າຕົນ ນັ້ນເກັ່ງໜັກໜາ
ຫາກຫຼຸດໄປ ເມື່ອໃດ ຈະເສັຽເວລາ
ມືດຽວດີກວ່າ ຜິດມາ ຫາໃໝ່ຍັງມີ

ຢ່າຫວັງ ຈະກິນ ເທື່ອດຽວສອງໂຕ
ຢ່າໂງ່ ຈຳຫຼາຍ ມັນຫຍຸ້ງບັນຊີ
ຢາກກິນປາ ທັງທີ ເລືອກໂຕດີໆ
ຮັບຮອງວ່າມີ ຮົດດີ ດັ່ງປຣາຖນາ

ໜຸ່ມນງສາວງ ເມື່ອຄາວ ຍັງຮຽນຮັກກັນ
ຈຳໄວ້ໃຫ້ໝັ້ນ ຢ່າພາກັນ ໂລບມາກໂລພາ
ເກີດຖືກບັ້ນຊວຍ ດິນຟ້າບໍ່ຊ່ວຍ ຄົງຈະຂາຍໜ້າ
ໂຕດຽວ ມືດຽວດີກວ່າ ຢ່າມົວ ຫຼົງລົມໂລກີ

ຢ່າຫາ ເອົາເຫົາມາໃສ່ ຫົວຕົນ
ຢ່າວົນ ລົງໄປຫາ ອະເວຈີ
ຢ່າງົມງາຍ ຫຼາຍທາງ ຣະວັງໃຫ້ດີ
ຂໍເຕືອນນ້ອງພີ່ ເປັນພຽງ ເພັງສັ່ງໃຫ້ຟັງ



ວົງເດືອນ

# ຂາດນາງ

ບໍ່ຢາກໄດ້ເງິນ ບໍ່ຢາກໄດ້ທອງ
ແຕ່ຢາກໄດ້ນ້ອງ ມານອນແນບຂ້າງ
ຈະຕິງໄປໃສ ບໍ່ໃຫ້ເຫີນຫ່າງ
ມີອ້າຍມີນາງ ຕລອດເວລາ

ຢູ່ດຽວບໍ່ງວໃຈ ຜູ່ໃດບໍ່ເຫັນ
ຄ່ຳຄືນເຊົ້າເຢັນ ເໝືອນເປັນຄົນບ້າ
ຂາດຄູ່ຄຽງໝອນ ຍາມນອນນິທຣາ
ຢາກໄດ້ແກ້ວຕາ ມາເປັນເພື່ອນໃຈ

↻ ຍາມນອນ ກໍ່ນອນບໍ່ຫຼັບ
ຫົວໃຈແລະຕັບ ມັນສັ່ນມັນສາຍ
ຢ້ານໂຊຢ້ານເຈັບ ຢ້ານຕາຍ
ຍ້ອນຢ້ານບໍ່ໄດ້ ສາຍໃຈມາກອດນອນ

ບໍ່ຢາກມີເງິນ ບໍ່ຢາກມີຄຳ
ຢາກມີງານຂຳ ທຸກຍາມເຂົ້າບ່ອນ
ບໍ່ມີເຂົ້າກິນ ບໍ່ເຫັນອາທອນ
ບໍ່ເຄີຍ ເດືອດຮ້ອນ ເທົ່ານອນຂາດນາງ ຂາດນາງ ໆ ໆ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ



ຈັນທະລາ ອຸເທນສັກດາ

# ຢອກບໍ່ໄດ້ເບາະ

ຢ່າເວົ້າ ແຮງຫຼາຍ
ແມ່ນໃຜ ວ່າໃຈເຈົ້າອ່ອນ
ເຈົ້າງາມ ແລ້ວຍັງທຳງອນ
ຂ້ອຍເມື່ອຍມາວອນ ມາງໍ້ແຫ້ງ

ຢ່າຄຸຍ ຫຼາຍນະ
ເບິ່ງໜ້າ ບໍ່ຄືໜ້າແມ່
ຂຶ້ນສຽງ ຮ້ອງປານສຽງແກ
ໂອຍຄ່ອຍໆແດ່ ອີ່ແມ່ຄົນງາມ

ຍ້ອນຮັກ ຍ້ອນປາຖນາ
ບໍ່ແມ່ນຕັ້ງໜ້າ ຫາລວຍລວນລາມ
ພຽງຈັບມື ຖືແຂນຈັກຖາມ
ຫາວ່າອ້າຍທຳ ອັບປີສີກະບານ

ຢອກກໍ່ ບໍ່ໄດ້ເບາະ
ໜ້າງໍ້ ເຂົ້າແລ້ວແຈ່ມຈັນ
ຮັກດອກ ຈຶ່ງຢອກຈອມຂວັນ
ເອົາບີ້ແຫອນໜັ້ນ ມາດີກັນເຖີດເອີຍ

1950+

ບັງອອນ

# ຢ່າກອນ

ຢ່າກອນ ໃຈນະ
ຢ່າຫາ ວ່າຍິງໃຈອ່ອນ
ຜູ່ຍິງ ເຂົາງາມເຂົາງອນ
ເພື່ອໃຫ້ຊາຍວອນ ມາງໍ້ ມາງໍ້

ຢ່າຫວັງ ລວຍນະ
ເບິ່ງໜ້າ ບໍ່ຄືໜ້າພໍ່
ຜູ່ຊາຍ ບໍ່ມີເນື້ອງໍ່
ມາຫຼອກມາລໍ້ ບໍ່ພໍ່ຈັກທີ

↻ ລະວັງ ຈະຖືກຂອງແຂງ
ຢ່າລວນຫາແລ່ງ ເວົ້າກັນດີໆ
ມາຈັບມື ຖືແຂນແບບນີ້
ຜິດປະເພນີ ອັບປີ ສີກະບານ

ຢ່າກອນ ໃຈນະ
ຖ້າຮັກ ໃຫ້ຂໍແຕ່ງງານ
ຢ່າທຳ ສິ່ງອະນາຈານ
ໜ້າອາຍຊາວບ້ານ ຈະກ່າວຂວັນ ນິນທາ

ຄຳຫຼ້າ ໜໍ່ແກ້ວ : ທຳນອງ & ເນື້ອຮ້ອງ

ບຸນທ່ຽງ ມະນີວົງ

# ຫາກໂລກນີ້ມີເຮົາສອງ

ຢາກໃຫ້ໂລກນີ້ ມີເຮົາສອງຄົນ
ເຮົາຄົງຈະພົ້ນ ຈາກການຕິສິນ
ຄວາມຮັກຄວາມຫວັງ ເຮົານັ້ນ ຄົງຈິງດັ່ງຝັນ ຢູ່ອາຈິນ
ສົມດັ່ງຖວິນ ຝັນໃຝ່

ຫາກໃນໂລກນີ້ ມີເຮົາສອງຄົນ
ເຮົາຄົງສຸກລົ້ນ ຍິ່ງກວ່າສຸກໃດ
ໃຈອ້າຍໃຈນ້ອງ ໝັ້ນເໝາະ ມີພຽງສະເພາະ ບໍ່ເພື່ອໃຜ
ຕັ້ງຈິດໝັ້ນໝາຍ ແນ່ນອນ

↻ ແຕ່ໃນໂລກນີ້ ຍັງມີມະນຸດ ສຸດພັລນາ
ຄອຍເຕືອນຄອຍວ່າ ຄອຍຫຼອກຄອຍຫຼອນ
ຢູ່ໃສມີຮັກ ຢູ່ຫັ້ນມີທຸກ ສຸດແສນອາວອນ
ໄດ້ຍິນຄຳສອນ ວ່າວອນສອນມາ

ຫາກແມ່ນໂລກນີ້ ມີເຮົາສອງຄົນ
ໂລກາຈະພົ້ນ ຈາກພັຍນາໆ
ຄວາມໂລບ ຄວາມຫຼົງ ຄວາມໂກດ ຄົງເບົາແຮງລົດ ກວ່າເຄີຍມາ
ສິ້ນຄວາມອິດສາ ສົມປອງ

ບຸນທ່ຽງ ມະນີວົງ

# ເປັນມິດກັນດີກວ່າ

ເພາະນ້ອງເປັນຍິງ ຊູງສັກ
ຫົນທາງແຫ່ງຮັກ ຈຶ່ງບໍ່ແຈ່ມໃສ
ເຖິງເຮົາຮັກກັນ ຈົນແທບຂາດໃຈ
ກໍບໍ່ມີຫວັງໄດ້ ຢູ່ຮຽງຄຽງໝອນ ນິທຣາ

ເພາະນ້ອງເລີດລອຍ ຊູງສົ່ງ
ຫົວໃຈອ້າຍຄົງ ຕ້ອງຜິດອາຍາ
ແມ່ນຄວາມຮັກເປັນ ດັ່ງຫວັງຕັ້ງຕາ
ກໍບໍ່ຫານວິວາ ບໍ່ກ້າ ຈະໄຝ່ເກີນຕົວ

↺ ຫົງຄວນຄູ່ຫົງ ເຫີນຟ້າ
ກາຄວນຄູ່ກາ ສຽງມຈຽມຕົວ
ບໍ່ຢາກໃຫ້ນ້ອງ ມີທຸກໝອງມົວ
ເຮົາເປັນມິດກັນ ດີກວ່າ ດີກວ່າທົນໝອງ ຊີວີ

ເພາະອ້າຍເປັນຄົນ ຕ້ອຍຕ່ຳ
ມີຄວນຈະທຳ ໃຫ້ນ້ອງເຊື່ອມສີ
ຕັ້ງໃຈໄວ້ພົບ ຫາກຊາດໜ້າມີ
ຢ່າໄດ້ເໝືອນ ຊາດນີ້ ຮັກມີກຳແພງ ກີດກັນ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໝໍ່ແກ້ວ

ບຸນທົງ ວົງສາລີ

# ຢາກຈະບອກ

ຢາກຈະບອກ ຈັກຄຳວ່າຮັກ
ບອກໃຫ້ຮູ້ຈັກ ວ່າຮັກພຽງໃດ
ອ້າຍອົດມາ ບານປີ ທີ່ເກັບຂັງ ບັງໄວ້
ຫົວໃຈ ອ້າຍປາກບໍ່ເປັນ

ຮັກອີ່ຫຼີ ບໍ່ຫຼອນຫຼອກລວງ
ອ້າຍຫວງອ້າຍຫ່ວງ ຊວງແທບກະເດັນ
ຍາມນ້ອງປາກ ກັບໃຜ ຫົວໃຈເກືອບ ຢຸດເຕັ້ນ
ເໝືອນຄົນ ເປັນບ້າຈິດຄອນ

ດວງໃຈອາວອນ ກິນນອນຮໍາເພິງ
ເຝົ້າແຕ່ຄິດເຖິງ ນອນນ້ອງບັງອອນ
ພຽງເຫັນໜ້ານ້ອງ ຈອບມອງນິຖອນ
ຫົວໃຈອາວອນ ຮ້ອນສຸດທົນໄຫວ

ຢາກຈະບອກ ວ່າຮັກວ່າຮັກ
ມັນຊ່າງຍາກໜັກ ຮັກຊ້ອນໃນໃຈ
ແມ່ນນ້ອງຄິດ ສົງສານ ຂໍໃຫ້ທານຮັກໄວ້
ຂໍຕາຍ ຢູ່ແນບອົກນາງ

1977

ຄຳຫຼ້າ ໜໍ່ແກ້ວ : ທຳນອງ & ເນື້ອຮ້ອງ

ບຸນທ່ຽງ ມະນີວົງ

# ເຊື່ອອ້າຍດີກວ່າ

ເຖິງໃຜຈະປອງ ຮັກນ້ອງພຽງໃດ
ຄົງນ້ອຍກວ່າໃຈ ອ້າຍຮັກນ້ອງຢູ່
ຈົ່ງຢ່າໃຈເບົາ ເຂົາຫຼອກຍອດຊູ້
ຈົ່ງໄຕ່ຕອງດູ ຄິດດູ ໃຫ້ດີເຖີດໜາ

ມີໃຜເຂົາປອງ ຮັກນ້ອງກວ່າອ້າຍ
ຮ້ອຍຮັກພັນຊາຍ ອ້າຍຮັກນ້ອງກວ່າ
ນ້ອງຕ່ຳພຽງດິນ ຫຼືຢູ່ພຽງຟ້າ
ອ້າຍປາຖນາ ສັນຍາ ຮັກບໍ່ຈືດຈາງ

↻ ເຖິງຈະມີ ຮ້ອຍພັນອຸປສັກ
ອ້າຍຂໍສມັກ ແມ້ແຕ່ ເອົາຊີວາວາງ
ເພື່ອຄົນຮັກ ຈະຂໍຕາມໃຈ ທຸກຢ່າງ
ເທບແຫ່ງຄວາມຫວັງ ຂໍພະລັງ ຊ່ວຍດົນຫົວໃຈ

ເງິນຄຳໝື່ນແສນ ແມ່ນມີຣາຄາ
ທົ່ວທັ່ງໂລກາ ທຽບຮັກບໍ່ໄດ້
ລົ້ນດິນຖ້ວມຟ້າ ຮັກນາງຖ້ວມໃຈ
ເຊື່ອເຖີດດວງໃຈ ອ້າຍຂໍຮັກ ພຽງແຕ່ນາງ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ ແລະ ພູທອນ ພຸດທະວົງ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຄຳຕຸ່ນ

# ອີ່ງຕີ່ງ

ອີ່ງຕີ່ງ ແທ້ນໍ້ນ້ອງສາວ
ຜິວຂາວ ເໝືອນດັ່ງຍອງຝ້າຍ
ເບິ່ງດີໆ ແລ້ວຍິ່ງງາມຫຼາຍ
ຍ່າງຍ້າຍ ປານຫົງເດີນດິນ

ອີ່ງຕີ່ງ ແທ້ຫໍ່ແກ້ມນ້ອງ
ຢາກຈອງ ໄວ້ດົມຈູມກິ່ນ
ເນດຄົມຂຳ ໃສດຳປານນິນ
ແມ່ຍຸພິນ ງາມສິ້ນເກີນຄົນ

ເກີດວັນຫຍັງຫໍ່ ກິນເຂົ້າກັບຫຍັງ
ເປັ່ງປັ່ງ ແທ້ຫໍ່ໜ້າມົນ
ເປັນລູກຫຼ້າ ຫຼືວ່າລູກໂທນ
ມີຈົນ ຫຼື ຄົນທັມມະດາ

ອີ່ງຕີ່ງ ແທ້ນໍ້ຍອດຍິງ
ໄດ້ພັກພິງ ແລ້ວຕາຍກໍຢ່າ
ໂປຣດເອັນດູ ອ້າຍແດ່ນາງຟ້າ
ແມ່ຂວັນຕາ ນ້ອງຢ່າທຳເມີນ

ປະພັນ ຄຳຫຼ້າ ໝັ່ນແກ້ວ : ທຳນອງ ແລະ ເນື້ອຮ້ອງ

ທັນຕະວັນ ຣາຊາສັກດ໌

# ບຶ່ງໃນຫົວໃຈ

ບຶ່ງເທົ່ານັ້ນ ໃນຫົວໃຈ
ເຝົ້າຫຼົງໄຫຼ ທຸກຄືນວັນ
ບໍ່ມີໃຜ ມາທຽມທັນ
ບໍ່ມີວັນ ຈະລືມເລີຍ

ບຶ່ງເທົ່ານັ້ນ ຄອງຫົວໃຈ
ສຸດໃຈໝາຍ ເຫຼືອຈະເອີ່ຍ
ຈະປອງອ້າຍ ໝາຍຊື່ນເຊີຍ
ນ້ອງບໍ່ເຄີຍ ຄິດຫຼອກລວງ

ຫຼົງຮັກ ຫຼົງຫ່ວງ ແທບປ່ວງຈຽນບ້າ
ໂອ ອະນິຈາ ຄວາມຮັກປັກຊວງ
ຮັກດຽວໃຈດຽວ ໝຽວໜັກປັກໜ່ວງ
ໂອ ເທບບິນສວງ ຢ່າລວງຂ້າທີ

ບຶ່ງເທົ່ານັ້ນ ໃນຫົວໃຈ
ໂປຣດຈຳໄວ້ ນະຄົນດີ
ອ້າຍເປັນຍອດ ຂວັນຊີວີ
ຊົ່ວຊີບນີ້ ນ້ອງຂໍຈອງ

ຄຳຫຼ້າ ໜໍ່ແກ້ວ : ທຳນອງ & ເນື້ອຮ້ອງ

ສ. ແສງສີຣິວັນ

# ລຳວົງກັນກ່ອນ

ລຳວົງກັນກ່ອນ ສຳຣານໃຈ
ໃຫ້ຈິດຜ່ອງໃສ ຮ້ອງລຳໄປ ໃຈເພີນ
ລຳວົງ ໂຕ້ງພາກັນເດີນ (ຊ້ຳ)
ສນຸກເຫຼືອເກີນ ເພີນໃຈເພີນເພັງ

ສາວນີ້ ຟ້ອນງາມລຳເກັ່ງ ສາວນັ້ນ ຟ້ອນງາມລຳເກັ່ງ
ເອິກເບັ່ງແອວກົມ ໂສມງາມ ອໍຣະຊອນ
ຢາກຈະລຳ ລຳໂຕ້ງແມ່ເນື້ອອ່ອນ ຢາກຈະເບັນ ຈອມໃຈແມ່ງາມງອນ
ຍິ້ມຈັກໜ່ອຍ ບັງອອນ ຈະເກັບໄປນອນ ຜັນເອີຍ

↻ ລຳກັນເປັນຄູ່ ເປັນຄູ່ໄປ
ລູກໃຜເມັ່ງໃຜ ຟ້ອນກັນໄປ ເລີຍໆ
ລຳວົງ ຍິ້ມລົມຊົມເຊີຍ (ຊ້ຳ)
ຕາມແບບທີ່ເຄີຍ ລຳກັນມານານ

ຄູ່ນີ້ ສົມກັນດີແທ້ ຄູ່ນັ້ນ ສົມກັນດີແທ້
ຢ່າດ່ວນຜັນແປ ແລໄປເປັນອື່ນ
ຈົ່ງຖນອມ ທອມຮັກໃຫ້ຍັ້ງຍືນ ຢ່າລວນເລ ລວນລາມທຳຜ່າຝືນ
ຂືນຄອງປະເພນີ ແລ້ວຈະເສື່ອມສີ ເສັ່ງໃຈ

ປະກອບ

# ຢ່າເຊື່ອຜູ້ຊາຍ

ຢ່າເຊື່ອຜູ້ຊາຍ ໜ້າໄຫວ້ຫຼັງຫຼອກ
ຍາມຮັກກໍບອກ ແຕ່ຄຳຫວານໆ
ຜູ້ຊາຍຜູ້ຊາຍ ນີ້ແຫຼະ ຍອດທໍຣະມານ
ສຸດແສນລຳຄານ ຈົນຄ້ານ ຈະພົວພາ

ຢ່າເຊື່ອຜູ້ຊາຍ ເສັງດາຍລື້ນລົມ
ຈະຊ້ຳຈະຕຣົມ ຈະເສັງນ້ຳຕາ
ຜູ້ຊາຍຜູ້ຊາຍ ລ້ວນແຕ່ ໃຊ້ກົນມານຍາ
ແສນເບື່ອຣະອາ ໜັງໜ້າຜູ້ຊາຍ

ຕໍ່ໜ້າ ສັນຍາສາບານ
ທັງໄຫວ້ທັງວານ ຍາກສົມໃຈໝາຍ
ສັນຍາຈະລົ້ມ ລົມຫາຍ ບໍທັນເທົ່າໃດ
ຍາມເຂົາຫ່າງໄກ ຫາໃໝ່ເຊີຍຊົມ

ຢ່າເຊື່ອຜູ້ຊາຍ ເຫັນຫຼາຍພາຍມາກ
ຄຳຫວານທີ່ປາກ ຈະພາຂື່ນຂົມ
ຜູ້ຊາຍຜູ້ຊາຍ ໝາຍຫຼອກ ໃຫ້ຊ້ຳພຽງຊົມ
ທັງເຈັບທັງຕຣົມ ລົມປາກຜູ້ຊາຍ

*ຢ່າເຊື່ອຜູ້ຊາຍ ຢ່າເຊື່ອຜູ້ຊາຍ...cha ໆ ໆ!*

ຄຳຫຼ້າ ໜໍ່ແກ້ວ : ເນື້ອຮ້ອງ & ທຳນອງ

ດາວມະນີວອນ

# ຊັງຄົນລໍ່າໄລ

ຊັງຄົນລໍ່າໄລ ຊັງຄົນລໍ່າໄລ
ໂກດແຄ້ນຜູ້ໃດ ແຕ່ໃສຫັ່ນນີ້
ຮ້ອງໃສ່ຜູ້ຍິງ ວ່າບໍ່ໃຈຈິງ ເຫຼືອດີ
ຕົນເອງນັ້ນແຫຼະໂຕດີ ຢ່າມາອວດດີ ເລີຍນະຜູ້ຊາຍ

ຊັງຄົນສໍພໍ ຊັງຄົນສໍພໍ
ບໍ່ຮັກບໍ່ງໍ້ ຢ່າຂໍຜູ້ໃດ
ຖ້າເກັ່ງກໍ່ເຊີນ ຂໍເຊີນ ໄປເຖິດຍອດຊາຍ
ຂືນຮັກ ກັນອີກຕໍ່ໄປ ຄົງຕຣົມຫົວໃຈ ບໍ່ປາຖນາ

ບໍ່ແນ່ຢ່າທ້າ ບໍ່ກ້າຢ່າຕີງ
ຮູ້ບໍ່ຜູ້ຍິງ ຜູ້ຍິງ ເຂົາມີຣາຄາ
ເຂົາຢູ່ສ້າງໂລກ ສ້າງຄົນ ຈົນທົ່ວໂລກາ
ຈົ່ງຮູ້ເສັຽວ່າ ຍິງເກັ່ງເຫຼືອຊາຍ

ຊັງຄົນອວດດີ ຊັງຄົນອວດດີ
ທົ່ວທັງໂລກີ ຄົນມີມາກມາຍ
ອອກຈາກຜູ້ຍິງ ຫຼືວ່າ ອອກຈາກຜູ້ຊາຍ
ຢາກຫົວ ໃຫ້ໂລກທະລາຍ ຢາກຫົວຜູ້ຊາຍ ທຳທ່າອວດດີ

ປະພັນ ໜູ່ມ ເຫຼົ່າ : ທຳນອງ & ເນື້ອຮ້ອງ

1950+

ວົງເດືອນ

# ອວດສາວ

ໜຸ່ມໆ ແໜ້ນໆນະນ້ອງ
ບໍ່ຢາກຈອງ ໄວ້ເປັນຜົວຫວະ
ປີນີ້ ອ້າຍອາຍຸຊາວກວ່າ
ທຳໄຮ່ໄຖນາ ຫາປາລ້ຽງຕົວ

ປະສາດ ອ້າຍກໍມີ ສອງຫຼັງ
ໂປຣດຟັງ ອ້າຍໄດ້ຢູ່ ເຮືອນຄົວ
ຣົຖໂດຍສານ ອ້າຍມີໄປທົ່ວ
ນ້ອງຢ່າຫວັ່ນກົວ ຢ່າມົວນ້ອຍໃຈ

↻ ເຫຼົ້າ ອ້າຍກໍບໍ່ກິນ
ເຮໂຣອີນ ອ້າຍກໍສູບ ບໍ່ໄດ້
ການພະນັນ ອຸ່ຍ ແຮງບໍ່ໃກ້
ສາບານກະໄດ້ ບໍ່ເຄີຍ ບໍ່ເຄີຍ

ເປົ່າປ່ຽວ ດ່ຽວດາຍໃຈເຫງົາ
ອ້າຍຢາກເອົາ ນ້ອງໄວ້ເປັນ ຄູ່ເຊີຍ
ມັກເຈົ້າຫຼາຍ ອົດບໍ່ໄຫວ ແລ້ວເອີ່ຍ
ອ້າຍຢາກເປັນເຂີຍ ເປັນເຂີຍພໍ່ນາງ

ປື້ມຮ້ອງ & ທ່ານອງ : ຄຳຫຼ້າ ໜໍ່ແກ້ວ


ຮິບໂຮມເພງຂອງ ຄຳຫຼ້າ ໜໍ່ແກ້ວ, ເຜີຍແຜ່ໂດຍ ທັນມະນູນ ພັນບຸເດຊ

ຄຳຫຼ້າ ໜໍ່ແກ້ວ

# ຢ້ານ

ຢ້ານ ແຕ່ຄວາມຮັກ ຈະໝອງ
ຢ້ານມີເຈົ້າຂອງ ອີກຄົນ
ຢ້ານໜີຄວາມເສົ້າ ບໍ່ພົ້ນ
ຢ້ານຄົນເຂົາ ແໜງໜ່າຍ



ຢ້ານ ຮັກບໍ່ສົມ ດັ່ງຫວັງ
ຢ້ານມີຄົນຂວາງ ຂັດໄວ້
ຢ້ານເຂົາໃຈອ່ອນ ເອນໄຫວ
ຢ້ານຕາຍຮັກ ກັບຄົນ

ຮູ້ແລ້ວໃຈເຈົ້າ ຍັງພັກດ໌
ຮູ້ແລ້ວວ່າຮັກ ຍັງຊື່ນ
ຢ້ານຄວາມກັ່ນແກ້ງ ຄົນອື່ນ
ຢ້ານກືນນ້ຳຕາ ຈົນໄດ້

ຢ້ານ ແຕ່ຄວາມຫວັງ ມືດມົວ
ຢ້ານຄົນຈະຍົວະ ໃຫ້ອາຍ
ຢ້ານເຫຼືອພຽງຊາກ ຮັກໄວ້
ຢ້ານຕາຍ ເພາະຜິດຫວັງ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ພິມມະ ພິມມະສອນ

# ເຊໂດນ

ລ່ອງມາ ຈາກວຽງຈັນ
ທີ່ເຄີຍຝັນ ເຄີຍຄເນ
ລ່ອງລົງມາ ຈົນເຖິງປາກເຊ
ງາມແທ້ເດ່ ແຂວງເຊໂດນ

ນ້ຳເຊ ແລະນ້ຳຂອງ
ຫຼາກໄຫຼນອງ ລອຍລ່ອງວົນ
ດັ່ງເມືອງຟ້າ ເມືອງແຖນບັນດົນ
ໂອ ເຊໂດນ ແສນງາມວິໄລ

ຍາມນີ້ ຂ້າຈາກບ້ານມາ
ດ້ວຍປາຖນາ ທ່ຽວຊົມສົມໃຈ
ງາມແທ້ເມືອງນີ້ ງາມກວ່າເມືອງໃດ
ທີ່ຂ້າເຄີຍໄດ້ ໄປເຫັນມາ

ໜຸ່ມສາວ ຊາວເຊໂດນ
ປາກອ່ອນໂຍນ ດົນໃຫ້ມາ
ບໍ່ຢາກໜີ ຈາກໄປໄກຕາ
ສຸກໜັກໜາ ໄດ້ມາເຊໂດນ

ບຸນທ່ຽງ ມະນີວົງ

# ຈັນສຸຣີ

ໂອດວງ ສຸຣິຍາ
ສ່ອງນະພາ ແຈ່ມໃສ
ແຫງນງອກ ເບິ່ງໄປ
ພາຫົວໃຈ ໃຫ້ສຸກສັນ

ໂອດວງ ຈັນທຼາ
ເດັ່ນບົນຟ້າ ສວັນ
ສູງກວ່າ ເກີນຜັນ
ໃຝ່ຫາຈັນ ມາໄວ້ຄອງ

ຍາມໃດ ຟ້າແຈ່ມສີ
ໂອສຸຣີ ສົ່ງແສງສ່ອງ
ຍາມໃດ ນະພາຜ່ອງ
ເດືອນຍັງສ່ອງ ແສງລັບລອຍ

ໂອດວງ ຈັນສຸຣີ
ແຜ່ໄມຕຣີ ຈັກນ້ອຍ
ຂໍຢ່າ ເລື່ອນລອຍ
ປ່ອຍຫົວໃຈ ໃຫ້ໝອງເສົ້າ

1977

ຄຳຫຼ້າ ໜໍ່ແກ້ວ : ທຳນອງ & ເນື້ອຮ້ອງ

24 / VII
ຫ້າມຈຳໜ່າຍ



ຄຳຫຼ້າ ໜໍ່ແກ້ວ

# ເງິນ

ເງິນ ໄດ້ເປັນເສດຖີ ກໍເພາະເງິນ
ຕົກເປັນຂໍທານ ກໍເພາະເງິນ
ເງິນ ເງິນ ເງິນ
ເປັນໂຈນຜູ່ຮ້າຍ ກໍເພາະເງິນ

ເງິນ ຕື່ນອອກຈາກບ້ານ ໄປຫາເງິນ
ແກ່ດຶງແບກຫາມ ແລກເອົາເງິນ
ເງິນ ເງິນ ເງິນ
ໜີ້ສິນຖ້ວມຫົວ ກໍແມ່ນເງິນ

ເງິນເປັນພຣະເຈົ້າ ມະນຸດທັງຫຼາຍ
ເກີດຂ້າກັນຕາຍ ກໍເພາະເງິນ
ຮັກກັນຊັງກັນ ກໍເພາະເງິນ
ເປັນສຸກ ກໍເພາະເງິນ ເປັນທຸກຊິຕາຍ ກໍເພາະເງິນ

ເງິນ ເກີດເປັນມະນຸດ ຕ້ອງຫາເງິນ
ຢ່າສໍ້ຢ່າໂກງ ຢ່າລັກເງິນ
ເງິນ ເງິນ ເງິນ
ຈະພາສຸກລົ້ນ ຈົນໝົດເງິນ

ກອບແກ້ວ

# ຫວງຍິ້ມ



ບໍ່ຢາກໃຫ້ ນ້ອງຍິ້ມ
ບໍ່ຢາກໃຫ້ຍິ້ມ ຍິ້ມ ຍິ້ມກັບໃຜ
ເພາະຮອຍຍິ້ມ ຂອງນ້ອງບາດໃຈ
ບາດໃຈ ຜູ້ຊາຍ ທີ່ໄດ້ພົບເຫັນ

ບໍ່ຢາກໃຫ້ ນ້ອງຫົວ
ບໍ່ຢາກໃຫ້ຫົວ ຖ້າບໍ່ຈຳເປັນ
ຢ້ານຄົນພົບ ຫົວໃຈຢຸດເຕັ້ນ
ຢ້ານເປັນ ນ້ອງເປັນ ອາສຍາກອນ

ຖນອມໄວ້ ໃຫ້ອ້າຍດີກວ່າ
ຢ່າຍິ້ມໄປທົ່ວ ຢ່າຫົວຜິດບ່ອນ
ຢູ່ໃສຂາດອ້າຍ ເຈົ້າຢ່າອອນຊອນ
ຢ້ານຄົນໃຈບອນ ຈະອອນວອນຮັກ ໝັ້ນໝາຍ

ບໍ່ຢາກໃຫ້ ຍິ້ມນັ້ນ
ບໍ່ໃຫ້ຍິ້ມນັ້ນ ສັມພັນກັບໃຜ
ເພາະນ້ອງຍິ້ມ ຫວານຕາຫວານໃຈ
ເກັບໄວ້ຫວງໄວ້ ໃຫ້ອ້າຍຜູ້ດຽວ

ຄຳຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ເມດຕາ ດາຣາສຸກ

# ໜຸ່ມໜ້າໜາວ

ເມື່ອລົມໜາວ ພັດຫວິວມາ
ແລ້ວພາດວງໃຈ ໃຫ້ໄຫວຫວັ່ນ
ຂາດຄູ່ຄຽງ ກ່ອນຂວັນ
ຫວນຄິດ ຈິດເຝົ້າໄຝ່ຫາ

ໄດ້ແຕ່ນອນ ນອນໜາວກາຍ
ຫາໃຜ ມາຮຽງ ບໍ່ເຫັນໜ້າ
ແຕ່ກຳເນີດ ເກີດມາ
ໜາວອຸຣາ ມາຕລອດການ

ແລບິນຟ້າ ດາຣາ ຄູ່ຄຽງເດືອນ
ຍິ່ງເຕືອນໝອງ ດວງໃຈ ສຸດທໍຣະມານ
ຍິງໃດໜໍ່ຈະເຫັນໃຈ ຂໍໄຫວ້ວານ
ໂປຣດສົງສານ ນົງຄານ ໃຫ້ແນບໜູນ

ຫາກມີຄົນ ຊື່ນຊິດກາຍ
ໜາວມະລາຍ ກາຍອົບອຸ່ນ
ຫາກໄດ້ມີ ຄູ່ໜູນ
ແນບນອນ ຄົງຈະສຸກເອີຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ

# ຍິ້ມຫວານ

ຍິ້ມ ຮອຍຍິ້ມແມ່ນາງ ຊ່າງຫວານ
ຫວານ ຍິ່ງກວ່ານ້ຳຕານ ຮ້ອຍເທົ່າ

ຍິ້ມ ຮອຍຍິ້ມນັ້ນຊ່ວຍ ແບ່ງເບົາ
ເຫັນ ແລ້ວລືມຄວາມເສົ້າ ໂສກສັນ

ຍິ້ມ ນ້ອງມີຄວາມໝາຍ
ຫວານຈັບໃຈອ້າຍ ລະເມີເພີ້ຝັນ
ແມ່ນ ໄດ້ເຊີຍຊິດຊົມ ທຸກວັນ
ຈະແພງຍິ້ມນັ້ນ ຍິ້ມຫວານ ປະດັບຊີວີ

ຍິ້ມ ຂໍໃຫ້ນ້ອງຍິ້ມ ອີກທີ
ຫວານ ຫວານໃຈພຽງນີ້ ບໍລືມ.

ຄໍາຫຼ້າ ໜໍ່ແກ້ວ

# ນໍ້າໃຈລາວ (v2)

ເມືອງລາວ ຂອງເຮົາ ແຕ່ເກົ່າກ່ອນ
ລາວຈະເຣີນ ຖາວອນ ຢູ່ເຢັນສຸກສັນ
ບໍ່ໄດ້ກໍ່ ເຣື່ອງຣາວຂ້າພັນ (ຊໍ້າ)
ລາວເຮົາຜູກ ສໍາພັນ ຮັກກັນຕລອດມາ

ຊົນຊາວລາວ ເປັນຄົນຮັກຊາດ
ມັກສງົບ ກຽດການສົງຄາມ
ລາວທັງເມືອງ ບໍ່ໄດ້ອ່ອນແອ (ຊໍ້າ)
ລາວພາກັນ ຍຶດໝັ້ນ ໃນສາມັກຄີ

ຖ້າຫາກມີ ສັດຕຣູມາຣຸກຣານ
ລໍ້າດິນແດນເຂດບ້ານ ຢຽບຍໍ່າເມືອງລາວ
ຈະຂໍສູ້ ໃຫ້ຊາດຢູ່ຍົງ (ຊໍ້າ)
ໃຫ້ຊາດລາວ ໝັ້ນຄົງ ຖວາຍຊີວີ ປະກັນ

ລາວເປັນມິດ ກັບທຸກຊາດເພື່ອນບ້ານ
ລາວບໍ່ໄດ້ຣຸກຣານ ຫັກຫານແດນໃຜ
ລາວເຮົາຢູ່ ດ້ວຍສິດເສຣີ (ຊໍ້າ)
ບໍ່ແຊກແຊງຣາວີ ເປັນມິດໄມຕຣີ ຜູກພັນ

ເຊີນຊາວລາວ ຮີບມາຮ່ວມໃຈ
ຮັກສາໄວ້ ຊຶ່ງຮີດທັມມະນູນ
ມາເຮົາມາ ເຊີນເຖີດຊາວລາວ (ຊໍ້າ)
ສາມັກຄີ ຍືນຍາວ ສ້າງເມືອງລາວ ສືບໄປ

ເປັນແບບຢ່າງ ແກ່ຄົນຣຸ່ນໃໝ່
ຄວາມໝັ້ນຄົງ ຈະໄດ້ ຢູ່ຍັ້ງຍືນຍົງ
ຮັກສາຊາດ ສາມາດເຂັ້ມແຂງ (ຊໍ້າ)
ທຸງວົງເດືອນສີ່ແດງ ເທີດໄວ້ໃຫ້ລາວ ຈະເຣີນ

ປະພັນ ຄໍາຫຼ້າ ໜໍ່ແກ້ວ : ທໍານອງ & ເນື້ອຮ້ອງ

ຈັນທະລາ ອຸເທນສັກດາ

# ສາວເຖົ້າ

ເຖົ້າ ຈິຕາຍຢູ່ແລ້ວ
ນ້ອງແກ້ວ ຄອຍຖ້າຜູ້ໃດ
ເຂົາຢູ່ເມືອງນອກ ຫຼືວ່າເມືອງໃນ
ອີກດົນປານໃດ ເຂົາຈິ່ງຈະມາ ສູ່ຂໍ

ເຖົ້າ ເກີນໄປເສັຽແລ້ວ
ຫາແນວ ແຕ່ງໄວ້ໃຫ້ພໍ
ໃຫ້ໜຸ່ມທັງຫຼາຍ ເຂົາວ່າຣະອໍ
ໃຫ້ຄົນເຂົາຍໍ ວ່າປານອາຍຸ ສິບຫົກປີ

(ເວົ້າ) ແມ່ນເຈົ້າຖ້າ ຜູ້ໃດເກ໋າະ ຄືວ່າ ດົນກະດັກກະດົ້ແທ້
ຂໍຖາມເຈົ້າແດ່ ຫຼືວ່າບໍ່ແຄ ຜູ້ຊາຍລະຕິ
ຫຼືເທພເຈົ້າ ສົ່ງນາງມາເກີດ ພຣິງ
ເປັນໂສດຕະລອດ ຊີວີ ເກີດເປັນທະນີ ບໍ່ດີກວ່າອ໋າ

ເໜີດ ສັດທາເສັຽແລ້ວ
ນ້ອງແກ້ວ ສິ້ນຄວາມໂສພາ
ເຈົ້າເກີດເປັນຍິງ ຂາດຊາຍຫົວຊາ
ຂາດຄູ່ນິທຣາ ເກີດມາຕ້ອງໜາວ ຕະລອດການ

(ເວົ້າ) ແມ່ນເຈົ້າຖ້າຜູ້ໃດເກາະ ຄືວ່າດົນກະດັກກະດົ້ແທ້ ກະດຽວວ່າເອົາຜົວ ໄປແຕ່ດົນ ແລ້ວນາ ຊິຖ້າໃຜອີກ ຊ້ຽວເອົາຊະນ້ອງ ຮ້າງໆໆ ຊ້ຽວເອົາສາຈັກໜ່ອຍຊິເຖົ້າ ຄ້າງບ້ານໃດ໋ ຮ້າງໆໆ

1950+

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໝໍ່ແກ້ວ**

ດາວມະນີວອນ

# ສາວເຖົ້າແຄ້ນ

ເຖົ້າ　　ບໍ່ຄຸງຫົວໃຜ
ແຄ້ນໃຈ　　ຜູ້ຊາຍປາກຄັນ
ເຂົາຢູ່ດີໆ　　ກໍ່ມາເສກສັນ
ເນື້ອແຫ່ວໜັງຍານ　　ບໍ່ໜັກກະບານ ຫົວໃຜ

ເຖົ້າ　　ກໍ່ຕາມເທາະແມ່
ບໍ່ເຫັນແຄ　　ເຈົ້າເລີຍຍອດຊາຍ
ວ່າໄດ້ວ່າດີ　　ຄືນໜ້າບໍ່ອາຍ
ຢ່າມາລວດລາຍ　　*ລອງກໍ່ຍັງໄດ້ ຖ້າວ່າອອດດີ*

(ເວົ້າ) ບໍ່ໄດ້ຖ້າຜູ້ໃດດອກ　　ຄືມາເວົ້າລ່ຳໄລ ກະດັກກະດໍ້ແທ້
ຂໍເຊີນຟັງແດ່　　ຂ້ອຍບໍ່ຢາກແລ ຜູ້ຊາຍໃຈຜີ
ຂ້ອຍລົງມາເກີດ　　ເພື່ອແກ້ງ ພວກໜຸ່ມອັບປີ
ເປັນໂສດພຣົງ　　ຍັງດີກວ່າມີ ຜົວນອນແນບກາຍ

ຢ່າ　　ມາກວນ ໂມໂຫ
ຫາໂຄ　　ມັນໜ້າເຈັບໃຈ
ເປັນໜຸ່ມກໍ່ຕາຍ　　ເປັນເຖົ້າກໍ່ຕາຍ
ຢ່າມາວຸ້ນວາຍ　　*ເຮີງ ຈັກໜ່ອຍ ເຖົ້າໃຈຮ້າຍ*
*ລະຊິເຈັບໂຕ　 ບໍ່ຮູ້ເນື້ອໃດ໋ ຫັ້ນນະ*

(ເວົ້າ) ເຈົ້າຫັ້ນເດ່ ! ແມ່ນເຈົ້າເຮັດອີ່ຫຍັງຢູ່ຫັ້ນເກາະ ກະດຽວວ່າ　ເອົາເມັ່ງແຕ່ດິນແລ້ວນ໋າ
ຂ້ຽວເອົາຈະແມ໋ອ້າຍ ຢ່າສຸຊອກເວົ້າ ໃຫ້ແຕ່ຜູ້ຍິງຫຼາຍແມ໋ ! ອັນຂ້ອຍຫຼຽວເບິ່ງເຈົ້າຫັ້ນ
ມັນກໍ່ເຕບເຊບ ພໍ່ແຮງໃດ໋ຫັ້ນນະ
ອັນຂ້ອຍນີ້ເກາະ ບໍ່ໄດ້ຖ້າຜູ້ໃດດອກ ຢ່າສຸເວົ້າລ່ຳໄລ ກະດັກກະດໍ້ຫຼາຍແມ໋ !
ເອົາຈະເດີ ເມັ່ງຫັ້ນນະ ຈັກໜ່ອຍເຂົາ　ຊິຮ້ອງວ່າອີຕາກະເທືອຍຫັ້ນນະ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ຄຳຫຼ້າ ໜໍ່ແກ້ວ

# ອຸກໃຈ

ອຸກໃຈ
ອຸກໃຈຈົນຫົວ    ຈີແຕກຕາຍ
ໜຸ່ມນງສາວໆ    ຂອງລາວສມັຍໃໝ່ຫຼາຍ
ປົກຫຸ້ມຄຸມກາຍ    ໜ້າອາຍບັດສີ

ອຸກໃຈ
ເກືອບອົດບໍ່ໄຫວ    ຂ້ອຍຢາກແລ່ນໜີ
ບາງໆເຂີນໆ    ກວນໃຈ ເຫຼືອເຕັມທີ່
ສະລັບສັບສີ    ເໝືອນໂຕລະຄອນ

ປາກທາແດງ    ຄີ້ວຂຽນດຳ
ປ່ອຍຜົມລາມ    ວ່າໂຕງາມງອນ
ນຸ່ງສິ້ງຮັດໆ    ເຫັນແລ້ວອຶດອັດ ມັນໜາວມັນຮ້ອນ
ຈິດວີ່ໃຈວອນ    ຍາມຫຼັບຍາມນອນ ອາວອນວຸ້ນວາຍ

ອຸກໃຈ
ໜຸ່ມສາວທັງຫຼາຍ    ຂໍເຊີນຈື່ໄວ້
ຢ່າລືມຮີດຄອງ    ຂອງລາວເຮົາ ເໝີດຫຼາຍ
ຂໍໂທດຫຼາຍໆ    ຢ່າໄດ້ກຽດຊັງ

(ເວົ້າ) ມັນກໍໂພດອີ່ຫຼີໄດ໋ ແຕ່ອີ່ພໍ່ອີ່ແມ່ ກໍບໍ່ເຄີຍ ເຫັນເດີກ ແບບນີ້ນ໋າ
ເບິ່ງຄັກແລ້ວ ຄືຜີນີ້ ບາດເບິ່ງດີແລ້ວ ໂອ໋ຍ... ອຸກໃຈຫຼາຍ

ຄຳຫຼ້າ ໜໍ່ແກ້ວ : ທຳນອງ & ເນື້ອຮ້ອງ

ຄຳຫຼ້າ ໜໍ່ແກ້ວ

# ນວນນ້ອງວຽງສວັນ

ວຽງສວັນ ນັ້ນງາມແທ້ ແນ່ເອີຍ
ສົມດັ່ງຄຳ ຊົມເຊີຍ ເຂົາເອີ່ຍກັນວ່າ ວຽງທອງ
ເມື່ອຍາມໃດ ເມກໄຫຼລອຍ ລະລ່ອງ
ເຫັນໜ້ານວນນ້ອງ ແລ້ວຕ້ອງຊວນໃຫ້ ອາວອນ

ງາມຜ່ອງສີ ເໜືອນາຣີ ໃດໆ
ສ້າງຜົນບຸນ ປາງໃດ ເສີມສົ່ງໃຫ້ເຈົ້າ ງາມງອນ
ເດັ່ນພຽງໃດ ຫ້ອງຫົວໃຈ ນ້ອງວ້າງບ່ອນ
ເພາະຂາດຄູ່ຊ້ອນ ຍາມນອນ ຄົງເສົ້າໂສກສັນ

ນວນນ້ອງ ວຽງສວັນຄົນດີ
ເຈົ້າເປັນເທພີ ຂວັນເມືອງ ແຫ່ງນີ້ມານານ
ເນື້ອນວນຂາວຜ່ອງ ສອງພວງແກ້ມ ເປັ່ງບານ
ງາມຍິ່ງໃດມາກກວ່າ ຍິ້ມຫວານ ຣະຣື່ນຊື່ນໃຈ

ເມືອງສວັນ ປັ້ນເຈົ້າໃຫ້ ງາມເດັ່ນ
ແມ່ນຊາຍໃດ ໄດ້ເຫັນ ແລ້ວຢາກເປັນເພື່ອນ ດວງໃຈ
ວາສນາ ຈຶ່ງນ້ອມນຳມາ ຄຽງໃກ້
ສົມດັ່ງດວງໃຈ ໃຝ່ຝັນຮັກນາງ ແນ່ນອນ

ແສງສຸຣິຈັນ

# ຈາກນ້ອງປີໃໝ່

ຈາກນ້ອງເມື່ອຄາວ ສົ່ງການປີໃໝ່
ອ້າຍຝາກຫົວໃຈ ໄວ້ກັບເຈົ້ານ້ອງ
ປານນີ້ນາງລືມ ຫຼືໃດເນື້ອທອງ
ຈຳພາກຈາກນ້ອງ ດ້ວຍຄວາມໝົ່ນໝອງ ອາລັຍ

ຈາກນ້ອງໄປໄກ ຫົວໃຈເປັນຫ່ວງ
ຢ້ານແຕ່ນ້ອງລວງ ໃຫ້ປ່ວງຫຼົງໄຫຼ
ຫາກຮັກຂອງຍິງ ມີຈິງຈາກໃຈ
ຂ້າຍອມຖວາຍ ເນື້ອກາຍ ໄວ້ແທບບາດນາງ

ຮັກຄົງບໍ່ມີ ສັກດີນາ
ໄພ່ຫຼືຣາຊາ ເກີດມາຍ່ອມອະນິຈັງ
ຢູ່ສູງສຸດຍີ້ ຂໍພຽງຊື່ໃນ ໝອນຂ້າງ
ຫາກກາຍສິ້ນຫວັງ ຂໍພຽງສຽງສັ່ງ ຍັງມີ

ຢາກຫວນຄືນໄປ ຫາຈອມຂວັນຈິດ
ໄປຫາມິ່ງມິດ ແມ່ມາຣະສີ
ຢາກຮູ້ເຣື່ອງຣາວ ຜົນແຫ່ງໄມຕຣີ
ຊື່ນສຸກຣີດີ ຫຼືວ່າອັບສີ ສິ້ນສູນ

1977

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

24 / VII
ຫ້າມຈຳໜ່າຍ



ສົມພອງ
ຈັນທະຣາ ອຸເທນສັກດາ

# ໜາວ

(ຮ່ວມ) ໜາວ ໆ ໆ ໜາວລົມ ຈະຕ້ອງຫົ່ມຜ້າ
ຜູ່ໃດໜາວຟ້າ ໜາວຟ້າ ຈະຕ້ອງຜີງໄຟ
ໜຸ່ມສາວ ໜາວໃຈ
ເຮັດຈັ່ງໃດ ຈິເຊົາໜາວເອີຍ

(ຊາຍ) ສວັດດີນ້ອງສາວ ນ້ອງໜາວໆໃຈມາຈັກປີ
ຢ່າອາຍໜ່າຍໜີ ໂປຣດຟັງອະລິ ວິທີແກ້ໜາວເອີຍ
ຫາຄູ່ຢູ່ເຊີຍ ແນບຄະເນີຍ ຈະເຫີຍໜາວພລັນ

(ຍິງ) ສວັດດີອ້າຍເອີຍ ຂໍເຜີຍ ໜາວມາຕັ້ງສິບກວ່າປີ
ນ້ອງບໍ່ທັນມີ ຜູ່ຫວັງໄມຕຣີ ຈັກທີກັບນ້ອງເລີຍ
ໃຜຂາດຄູ່ເຊີຍ ຮີບຈອງເລີຍ ຢ່າປ່ອຍໃຫ້ໜາວຕາຍ

(ຮ່ວມ) ໜຸ່ມສາວທັງຫຼາຍ ໝັ້ນໝາຍໄວ້ນັ້ນ ຈຶ່ງແຕ່ງງານ
ຢ່າມົວໜາວກັນ ກອດໝອນເພີ້ຝັນ ເຖິງກັນຫວານຊື່ນເຊີຍ
ຫາຄູ່ເຖີດເອີຍ ຢ່າທຳເສີຍ ເພື່ອນເອີຍຈະໜາວຕາຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ບຸນທັງ ວົງສາລີ

# ຟັງນະທີ່ຮັກ

ຟັງນະ ຟັງນະ　　ຟັງນະຄົນດີ
ຢູ່ໃນໂລກນີ້　　ມີໃຜຮັກນ້ອງ ຫຼາຍກວ່າ
ຮັກລົ້ນຫົວໃຈ　　ໄຫຼຖ້ວມ ແຜ່ນດິນແຜ່ນຟ້າ
ຟັງແໜ້ນຢູ່ໃນອຸຣາ　　ສຸດປາຖນາ ຟັງນະຄົນດີ

ຟັງນະ ຟັງນະ　　ຟັງນະດວງໃຈ
ບໍ່ເຄີຍ ຮັກໃຜ　　ຮັກຫຼາຍ ລົ້ນໃຈພຽງນີ້
ອ້າຍຂໍສາບານ　　ທັງໄຫວ້ວອນວານຜູດຜີ
ຂໍໃຫ້ແມ່ທໍຣະນີ　　ສູບເອົາຊີວິດ ອ້າຍນີ້ທັງເປັນ

↻ ເລັ່ງດູຫົວໃຈ　　ອ້າຍດູວ່າມີໃຜຢູ່
ນອກຈາກຍອດຊູ້　　ຄູ່ເຊີຍ ມີເຄີຍຫວ່າງເວັ້ນ
ນາງຄືຍອດຮັກ　　ຍອດຍິງ ທີ່ອ້າຍເຄີຍເຫັນ
ຈຶ່ງເລືອກໄວ້ເປັນ　　ຣາຊິນີ ຄອບຄອງດວງມາຣ

ຟັງນະ ຟັງນະ　　ຟັງນະຈອມໃຈ
ເກີດມາຊາດໃດ　　ຂໍໃຫ້ພົບນ້ອງ ຊາດນັ້ນ
ຈະມີຫຼືຈົນ　　ຊ່າງເຖີດ ບໍ່ເຫັນສຳຄັນ
ຂໍໃຫ້ໄດ້ຢູ່ຄຽງຂວັນ　　ຕາບຊົ່ວຊີວັນ ເທົ່ານັ້ນກໍ່ພໍ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ຄຳຫຼ້າ ໜໍ່ແກ້ວ

# ສວັດດີປີໃໝ່

ສວັດດີ ສວັດດີປີໃໝ່
ສົດໃສ ຮື່ນເລີງສຳຣານ
ເທບພະໄທ ຈົ່ງໄດ້ປະທານ
ພີ່ນ້ອງລູກຫຼານ ຈົ່ງສຳຣານບານໃຈ

ສວັດດີ ສວັດດີທົ່ວກັນ
ສຸກສັນ ຊື່ນບານຣືທັຍ
ໂວກພັຍ ຈົ່ງໄດ້ເຫືອດຫາຍ
ຂໍຈົ່ງມີຊັຍ ຕລອດໄປຊົ່ວການ

ເກົ່າ ໝົດແລ້ວເພື່ອນເອີຍ
ປີໃໝ່ມາເຊີຍ ເປັນປີສຸກສັນ
ລືມຄວາມທຸກ ໂກດແຄ້ນເຄືອງກັນ
ໃຫ້ອະໂຫສິກັນ ສລອງວັນປີໃໝ່

ສວັດດີ ສວັດດີນ້ອງພີ່
ສຸກຂີ ດີຖືປີໃໝ່
ກຽດຕິຍົດ ຊື່ສຽງກຽງໄກ
ຊັບສິນລັ່ງໄຫຼ ສຸກສະບາຍເຖີດເອີຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ພິມມະ ພິມມະສອນ

# ຂອບໃຈ

ຂອບໃຈເຫຼືອເກີນ　　ທີ່ເມີນຜ່ານພົ້ນ
ຂອບໃຈທີ່ຄົນ　　ບໍ່ປາຖນາ
ຂອບໃຈທີ່ລືມ　　ກັນໄດ້ຕໍ່ໜ້າ
ຂອບໃຈແກ້ວຕາ　　ທີ່ຄິດຕັດຮ່ອນ

ຂອບໃຈນະຄົນ　　ຂ້າຂໍຂອບໃຈ
ຂອບໃຈທີ່ໄປ　　ບໍ່ກັບມາວອນ
ຂອບໃຈທີ່ຄົນ　　ລືມສັນຍາກ່ອນ
ຂອບໃຈທີ່ຖອນ　　ເອົາຮັກກັບຄືນ

ຂອບໃຈຂໍຈົ່ງ　　ໄປດີມີຊັຍ
ພົບຄົນຮັກໃໝ່　　ສົມໃຈ ໃນຮັກຫວານຊື່ນ
ຕັດຂາດສບັ້ນລືມກັນ　　ແລ້ວຜັນເປັນອື່ນ
ສຸຂສົມເຊີຍຊື່ນ　　ຮັ່ງຄືນ ຮັກເດີມເສັ່ງທີ

ຂອບໃຈຮີບໄປ　　ຢ່າຫວນກັບມາ
ຂອບໃຈເທວາ　　ຊ່ວຍພາເຂົາໜີ
ຂອບໃຈທີ່ໄດ້　　ພົ້ນກັນຊາດນີ້
ຂອບໃຈຢ່າໄດ້　　ພົບກັນອີກເລີຍ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ແສນສັກດາ

# ຄິດເຖິງທີ່ຮັກ

ກ່ອນນີ້ ມີຄົນຮັກ
ສຸດຮັກ ໃສທ່ຽມເທົ່າ
ອຸກໃຈ ອ້າຍຂາດເຈົ້າ
ສຸດເຫງົາ ເຝົ້າຫ່ວງໃຍ

ບໍເຫັນ ອີກພຽງເງົາ
ສຸດເສົ້າ ເຫຼືອທົນໄດ້
ຂັດເຄືອງ ເຣື່ອງອັນໃດ
ເຫດໃດ ນ້ອງຈຶ່ງເມີນ

ໂອ ສຸດທີ່ຮັກ
ສຸດຮັກ ເຈົ້າເຫຼືອເກີນ
ຢ່າແຫນງ ແກ້ງທຳເມີນ
ຫ່າງເຫີນ ເມີນຄູ່ຊົມ

ທີ່ຮັກ ເຈົ້າຢູ່ໃສ
ສຸກໃຈ ຫຼືຕຣອມຕຣົມ
ອ້າຍຍັງ ຄອຍພິຣົມ
ຂື່ນຂົມ ຕຣົມບົ່ມໃນ

ຄຶດເຖິງ ສຸດທີ່ຮັກ
ຄຶດເຖິງ ແທບຂາດໃຈ
ໄດ້ຍິນ ແລ້ວຫຼືໃດ
ກ່ອນຕາຍ ຂໍພົບນາງ

ຄຳຫຼ້າ ໝໍ່ແກ້ວ : ທຳນອງ & ເນື້ອຮ້ອງ

ວົງເດືອນ

# ຢາກເປັນໂຈຣ



ໂອ ແມ່ນາງ ຊ່າງງາມໂສພາ
ເຈົ້າຫຼົງຟ້າມາ ຫຼືວ່າຫົນໃດ
ຈາກບ່ອນນັ້ນ ເຈົ້າມາກັບໃຜ
ຊ່າງງາມວິໄລ ຈິດໃຈໄຜ່ຜັນ

ໄດ້ພົບຍິງ ມາຫຼາຍລ້ານຄົນ
ບໍ່ຄືໜ້າມົນ ບໍ່ທຽມທຽບທັນ
ເຈົ້າຄົງລົງ ມາຈາກສວັນ
ຜ່ອງສີໂສພັນ ເຫັນກັນເທື່ອດຽວ

ແມ່ນນ້ອງສາວ ຂາດຄູ່ຄຽງ ຢ່າອຳຢ່າອຽງ
ຢ່າອ້າຍອື້ອຶງ ໃຫ້ແລຫຼຽວ
ອ້າຍຍ່າງມາກົບລົມຜູ່ດຽວ ປ່ຽວໃຈສຸດເຫງົາ
ພໍເຫັນໜ້າເຈົ້າ ກໍຊື່ນໃຈ

ຢາກຈະເປັນ ຊຸນໂຈຣປຸ້ນໜັກ
ປຸ້ນກາຍປຸ້ນຮັກ ປຸ້ນເອົາຫົວໃຈ
ປຸ້ນເອົາຕົວ ແມ່ນາງດັ່ງໝາຍ
ປຸ້ນໄປແນບກາຍ ແກ້ໜາວກອດນອນ

1950+

ຄຳປິນ

# ກຸຫຼາບສອນນອນ

| | |
|---|---|
| ກຸຫຼາບ | ສອນນອນ |
| ຂ້ອຍນອນ | ລະເມີຣຽກຫາ |
| ເມື່ອມອງຕາ | ແລ້ວພາດວງໃຈໄຫວຫວັ່ນ |
| ເຈົ້າງາມ | ດັ່ງນາງສວັນ |
| ຈິດໃຈໄຝ່ຝັນ | ທຸກວັນເວລາ |
| ສຸດງາມຕາ | ດັ່ງຟ້າ ລົງມາສູ່ດິນ |
| | |
| ກຸຫຼາບ | ງາມຕາ |
| ສເນຫາ | ຫວັງຊອນໃຫ້ດົມ |
| ເຈົ້າງາມສົມ | ໃສໄລດັ່ງດວງມະນີ |
| ເຈົ້າງາມດັ່ງ | ມະລາສີ |
| ກິ່ນເຈົ້າຫອມດີ | ຫວັງຊອນໃຫ້ດົມ |
| ເຈົ້າງາມສົມ | ຍາມຊົມສຸດແສນຊື່ນໃຈ |

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໝໍ່ແກ້ວ ແລະ ໄພທູນ ນະຄອນທັບ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໝໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ

# ດອກຈຳປາ

ໂອ ດອກຈຳປາ
ເຈົ້າເປັນມາລາ ທີ່ສຸດໂສພາ ງາມຜ່ອງ
ພໍຕາເວັນ ສາດແສງສີທອງ
ຈຳປາອ້າກີບລະອອງ ຮັບແສງທອງ ຈາກດວງສຸຣິ

ຍ້ອນ ໂຊກວາສນາ
ບຸນຕາມນຳພາ ໄດ້ພົບບຸບຜາ ມາລີ
ປຣາຖນາ ຜູກໃຈໄມຕຣີ
ຈອງໄວ້ເປັນຄູ່ຊີວິ ຄູ່ຂວັນມາລີ ແມ່ນຊີວາ

ມວນມາລີ ທີ່ເຂົາເລົ່າລື
ບໍ່ເຫັນສົມນາມສົມຊື່ ທີ່ເຂົາລື ໜັກໜາ
ດອກຈຳປາ ນີ້ໜາ ທີ່ແສນໂສພາ
ໃຜເຫັນຄົງປຣາຖນາ ຄ້ວາຈຳປາ ໄວ້ແນບອຸຣາ

ຫາກ ສົມດັ່ງໝາຍ
ຈະເປັນຫຼືຕາຍ ບໍ່ຂໍຫ່າງໄກຂວັນຕາ
ພຽງດວງດຽວ ກ່ຽວຂ້ອງສເນຫາ
ຈົນສູນສິ້ນຊີວາ ຖນອມຈຳປາ ຊົ່ວຟ້າມະລາຍ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ສົມພອງ

# ສົງສານຄົນຊ້ຳ

ສຽງໃຜ ດັງແວ່ວມາ
ຢາກເຫັນໜ້າ ເວລາເພັງພັດປິວ
ວາບຫວິວ ປິວເປັນສຽງສັ່ງ
ຂອງຄົນຊ້ຳ ຣະກັມໃຈ

ສົງສານ ສຽງເພັງຈົ່ມ
ຄົງຣະທົມ ຂື່ນຂົມບໍ່ເວັ້ນວາຍ
ຂ້ອນຄືນ ຍັງສົ່ງສຽງໄກ
ເໝືອນສຽງໃຫ້ ໃຜລວງມາ

↻ ຫາ ວ່າຍິງທົ່ວໄປ
ມີຫຼາຍໃຈ ຜິດຄຳສັນຍາ
ບາດຜູ້ຊາຍ ຫຼອກເຂົາບໍ່ວ່າ
ຜູ້ຍິງເສັຽນ້ຳຕາ ເປັນແສນແສນ

ນ້ອງຂໍ ຮ້ອງຕໍ່ວ່າ
ຍິງແນ່ກວ່າ ຜູ້ຊາຍຕັ້ງຫຼາຍຄະແນນ
ຜູ້ຍິງ ຮັກປັກຝັງແໜ້ນ
ສັນຍາແກ່ນ ແມ່ນວາຍຊົນ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ

# ພາສິດຮັກ

ຍິງຊາຍເກີດມາ ເກີດມາຄູ່ກັນ ແທ້ຫຼື?
ໂລກເຂົາເລົ່າລື ວ່າຮັກຮັກນີ້ ເປັນສິ່ງສຸຂເຫຼືອ
ແຕ່ຮັກເປັນເຈືອ ດ້ວຍຍາເບື່ອ ໂປຣດໄດ້ຣະວັງ
ຢ່າຫຼົງຈິຣັງ ໃຫ້ຖວາ ຈະຊ້ຳອຸຣາ

ຍິງຊາຍເກີດມາ ເກີດມາຄູ່ກັນ ພຽງໃດ?
ຈຶ່ງຮັກມັກໄຄ່ ສ່ອງເຫັນຫົວໃຈ ເປັນໜັກເປັນໜາ
ຫ່າງເຫີນພຽງວັນ ຝັນເຫັນດວງໜ້າ ຫຼັບຕາກໍ່ເພີ້
ເຝົ້າຫຼົງຣະເມີ ໄດ້ຄຽງສອງ ສຸຂສົມຊື່ນໃຈ

ອັນຮັກນີ້ ເໝືອນມົນປລາດ
ຈັ່ງໃຈອນາດ ສຸດມາດໃຈໝາຍ
ຫາກສົມຫົວໃຈ ແມ່ນຕາຍກໍ່ຍອມ ຖນອມເຈົ້າ
ຜິດຫວັງນັ່ງເສົ້າ ເຫງົາບໍ່ສິ້ນ ອົດກິນນ້ຳຕາ

ຍິງຊາຍເກີດມາ ເກີດມາຄູ່ກັນ ໝັ້ນໝາຍ
ໜຸ່ມສາວຄາວໄວຍ໌ ຈະຮັກຈະໄຄ່ ຟັງກ່ອນເຖີດໜາ
ຢ່າເຫັນໃຈຕົນ ນັ້ນດີວິເສດ ກວ່າໃດໃນຫຼ້າ
ຢ່າຫຼົງມາລຍາ ວ່າຄວາມຮັກ ຈະຈິງແນ່ນອນ

ປະພັນ ໂດຍ ຄຳຫຼ້າ : ທຳນອງ & ເນື້ອຮ້ອງ



ຄຳຫຼ້າ ໜໍ່ແກ້ວ
1955

# ສາວລາວດາວສມັຍ

ດູດວງດາວ ປຽບໃສ່ສາວ ຊ່າງງາມເຫຼືອ
ແລບໍ່ເບື່ອ ຫາກໄດ້ເບິ່ງ ງາມຜ່ອງພັນ
ເໝືອນດັ່ງເທບ ເທວາ ມາເສກສັນ
ໂອ ສາວງາມ ຂອງລາວສມັຍນີ້
ເໝືອນເທວີ ມາຈາກຟ້າ ເມືອງສວັນ
ສົມມິ່ງຂວັນ ດອກໄມ້ ຂອງຊາດເອີຍ

ງາມຍິງລາວ ພວກສາວໆ ສມັຍນີ້
ມວນສຕຣີ ຊ່າງຕົກແຕ່ງ ແປງຮູບໂສມ
ໃຜໄດ້ເຫັນ ຫຼົງປອງ ຫວັງຜູກພັນ
ໂອ ສາວງາມ ເນື້ອນຸ່ມ ຍາມຍິ້ມຫວານ
ຂໍມອບຮັກ ໄວ້ກັບນິ່ງ ໃນດວງໃຈ
ຫຼືຫາກໃຜ ມາຄອບຄອງ ຫ້ອງຫວ່າງເອີຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຈັນທະລາ ອຸເທນສັກດາ

# ລັກມັກ



ລັກມັກເຈົ້າແລ້ວ ມັກເຈົ້າແລ້ວ
ຂ້ອຍມັກເຈົ້າແລ້ວ ຂ້ອຍຫຼົງເຈົ້າແລ້ວ ຄົນງາມ
ຕັ້ງແຕ່ມື້ນັ້ນ ຂ້ອຍຫຼົງຕິດຕາມ
ເຈົ້ານາມໃດໜໍ່ ນ້ອງສາວ

ມັກເຈົ້າສຸດໃຈ ມັກສຸດໃຈ
ຂ້ອຍມັກສຸດໃຈ ຂ້ອຍຫຼົງກວ່າໃຜ ແລ້ວເຈົ້າ
ຕັ້ງແຕ່ມື້ນັ້ນ ຂ້ອຍຜັນບໍ່ເຊົາ
ພາບນາງຍອນເຍົ້າ ບໍ່ເວັ້ນ

ປາກງາມຍາມຍິ້ມ ນັ້ນມີສເນ
ມັກຫຼາຍແທ້ເດ ເມື່ອເຫັນ
ໃບໜ້າຜ່ອງພັນ ໃສກວ່າຈັນເພັນ
ຕາຄູ່ນັ້ນເປັນ ແວວແຫ່ງໄມຕຣີ

ມັກເຈົ້າເຫຼີດໃຈ ມັກເຫຼີດໃຈ
ຂ້ອຍມັກເຫຼີດໃຈ ຂ້ອຍມັກກວ່າໃຜ ແລ້ວນີ້
ຖ້າຫາກຮູ້ຕົວ ຍິ້ມຫົວອີກທີ
ຈະເກັບເປັນສີ ແຫ່ງໃຈ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ຄຳຫຼ້າ ໜໍ່ແກ້ວ

# ດີໃຈ

ດີໃຈ ໜັກໜາ
ໄດ້ພົບໜ້າ ເພື່ອນຝູງລຸງຕາ
ຫຼາຍປີ ຜ່ານມາ
ບໍ່ເຫັນໜ້າ ກັນເລີຍໝໍ່ເຮົາ

ຢູ່ກິນ ຈັ່ງໃດ
ສຸຂສບາຍ ຫຼືໃດກັນເຈົ້າ
ໄດ້ຍິນ ຂ່າວຄາວ
ແຂງແຮງຄືເກົ່າ ໝູ່ເຮົາສບາຍດີ

ຢູ່ຄົບໜ້າ ໄຂວ່ຕາ
ຕັ້ງໃຈມາຫາ ຢ້ຽມຢາມນ້ອງພີ່
ບໍ່ເຫັນກັນ ມາເປັນປີໆ
ຍັງຕຸ້ຍຍັງພີ ຍັງຢູ່ດີ ມີແຮງ

ດີໃຈ ສຸດແສນ
ຮັກກັນໝັ້ນແກ່ນ ເກື້ອກຸນໜຸນແຍງ
ທຸກຄົນ ເຂັ້ມແຂງ
ນັບຖືຮັກແພງ ກັນໄວ້ເຖີດເອີຍ

ແກ້ວມະນີຄອນ

# ພໍນຶກໄດ້

ນ້ອງ ພໍນຶກໄດ້
ຕັ້ງຫຼາຍປີ ທີ່ພົບພານ
ຫຼາຍຄືນ ຫຼາຍວັນ
ຄວາມສຳພັນ ເກືອບລາງຫາຍ

ນ້ອງ ພໍນຶກອອກ
ອ້າຍຢາກບອກ ບອກບໍ່ໄດ້
ທັງຫານ ທັງອາຍ
ເກັບຫຍັງໄວ້ ບອກມາເລີຍ

ສາມຄຳ ກໍໄດ້
ນ້ອງພໍໃຈ ຈັ່ງສະເລີຍ
ຢ່າອາຍ ໄປເລີຍ
ຂໍຢ່າເຢີ້ງ ໃຫ້ຫຼີງບອງ

ຫົວໃຈ ນ້ອງຫວ່າງ
ຮີບຫາທາງ ເປັນເຈົ້າຂອງ
ຮັກດຽວ ແຕ່ນ້ອງ
ຢ່າມີສອງ ຢ້ານໝອງໃຈ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໝໍ່ແກ້ວ**

ຄຳຫຼ້າ ໝັ່ນແກ້ວ

# ແລ້ວແຕ່

ແລ້ວແຕ່ໃຈ ຈະໄປກໍໄປ ແລ້ວບໍ່ຕ້ອງມາ
ເລືອກເອົາທາງນີ້ ທີ່ຊື້ງໃຈກວ່າ
ແລ້ວຢ່າວຽນມາ ກອນໃຈ

ແລ້ວແຕ່ມັກ ເບິ່ງໃຫ້ດັກໆ ແລ້ວຕັດສິນໃຈ
ລູກຄົນລະແມ່ ຮູ້ແນ່ແກ່ໃຈ
ສິ່ງທີ່ຕົນໝາຍ ໃຜ່ຫາ

ຕ່າງຄົນຕ່າງຄິດ ຕ່າງຈິດຕ່າງໃຈ
ເຂົ້າກັນບໍ່ໄດ້ ມາກມາຍບັນຫາ
ກົງຈັກດອກບົວ ເຫັນທົ່ວໃນຕາ
ສຸດແຕ່ຈະຄ້ວາ ພົວພັນ

ແລ້ວແຕ່ໃຈ ສຸດຈະແກ້ໄຂ ທາງໃຜທາງມັນ
ໄດ້ດີມີສຸຂ ຫຼືທຸກທໍຣະມານ
ບໍ່ຕ້ອງກ່ຽວພັນ ກັນເລີຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໝັ່ນແກ້ວ



ຈັນທະລາ ອຸເທນສັກດາ

# ຮັກໜ່ອຍ

ໜ່ອຍ ເອີຍໜ່ອຍ
ພໍ່ລອຍ ເຖິງເປັນອາເຊັ່ງ
ໜ້າຕາ ຈິ່ມລິ້ມໜ້າເຈັ້ງະ
ຊຶມໆ ເຊັ້ງໆ ຊຶ້ງໆ ໃນໃຈ

ບອກ ແລ້ວວ່າ
ອ້າຍມາ ມອບຫົວໃຈໃຫ້
ຢ່າປ່ອຍ ໃຫ້ຊ້ຳໃຈຕາຍ
ຮັກໜ່ອຍຫຼາຍໆ ບໍ່ໄດ້ຫຼອກລວງ

ລາວ-ຈີນ ກໍຮັກກັນໄດ້
ເລື່ອງຂອງຫົວໃຈ ຜູ້ໃດຈະຫວງ
ທຸກດີມີຈົນ ຢ່າຫ່ວງ
ອາຍອຸ່ນໜູນຊວງ ບໍ່ລວງຫຼອກກັນ

ອ້າຍ ຮັກໜ່ອຍ
ງົວຄວາຍ ອ້າຍມີເຕັມບ້ານ
ຫາກມີໜ່ອຍ ເປັນມິ່ງຂວັນ
ເໝືອນຢູ່ສວັນ ວິມານເມືອງແມນ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

1950+

ຄຳຫຼ້າ ໜໍ່ແກ້ວ

# ສບາຍດີປີໃໝ່

ສບາຍດີ ປີໃໝ່
ເກົ່າກາຍໄປ ບໍຫວນມາ
ສິ້ນໂພຍໄພ ໄຮ້ໂຣຄາ
ໂຊກຫຼັ່ງມາ ປານສາຍທານ

ສບາຍດີ ປີໃໝ່
ສຸຂສົດໃສ ທົ່ວເຖິງກັນ
ຈິ່ງມີໄຊ ພົ້ນໄພພານ
ແຈ່ມຄືຈັນ ຄືນເດືອນເພັງ

ອາຍຸວັນນັງ ສຸຂຂັງ
ດ້ວຍພລັງ ສູງສົ່ງກ້າເກັ່ງ
ກຽດຕິຍົດ ຊື່ກ້ອງຣະເບັງ
ພອນບັນເລງ ຕາມເພັງນີ້

ສບາຍດີ ປີໃໝ່
ຍອດດວງໃຈ ຢູ່ໃສນີ້
ຢ່າປ່ຽນໄປ ເໝືອນເດືອນປີ
ສົ່ງເພັງນີ້ ເຕືອນໃຫ້ຈຳ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ

# ແມ່



| | |
|---|---|
| ແມ່ | ມີພຣະຄຸນຍິ່ງໃຫຍ່ |
| ຫາສິ່ງໃດ | ບໍ່ທຽບປຽບປານ |
| ແມ່ | ທົນທຸກ ທົນທໍຣະມານ |
| ເລີ່ມແຕ່ຕັ້ງຄັນ | ຈົນຮອດວັນ ກຳເນີດເກີດມາ |
| | |
| ແມ່ | ພຽນລ້ຽງດູ ຕຸ້ມຕ່ອມ |
| ຖນອມ | ກ່ອມກ້ຽງ ລູກດັ່ງແກ້ວຕາ |
| ແມ່ | ປົກປ້ອງ ກັນໄພນາໆ |
| ແມ່ນແຕ່ຊີວາ | ຍອມສະຣະ ເພື່ອລູກຜູກພັນ |
| | |
| ບາງທີ | ແມ່ຫຼົງຮ້າຍດ່າວ່າດັງ |
| ດ້ວຍເຈຕະນາຫວັງ | ໃຈຕັ້ງ ກໍ່ສ້າງທັ່ງນັ້ນ |
| ຢາກໃຫ້ໄດ້ດີ | ເປັນສີ ແກ່ເຜົ່າພົງພັນ |
| ເສີມສົ່ງໃຫ້ທຸກສິ່ງອັນ | ຫວັງໃຫ້ລູກນັ້ນ ໄດ້ດີ |
| | |
| ແມ່ ບໍ່ເຄີຍ | ຄຽດຊັງຊຸມລູກ |
| ຂໍ ແຕ່ລູກ | ກ້າວໜ້າທະວີ |
| ແມ່ | ສຸດແສນຊື່ນຊົມ ຍິນດີ |
| ຂໍຈົ່ງທຳດີ | ຈົ່ງທຳດີ ໃຫ້ຊາດບ້ານເມືອງ |

ຄຳຫຼ້າ ໜໍ່ແກ້ວ

# ດ້ວຍຮັກສມັກໃຈ

ເຖິງນ້ອງຈະຜ່ານຊາຍ ມາຫຼາຍຄົນ ບໍ່ສົນຄວາມຫຼັງ
ເຖິງຈະເປັນຮ້າງ ຫຼືວ່າເປັນໝ້າຍ
ໂອ ທາງຊີວິດ ພາດຜິດພຽງໃດ
ພັ້ງມາຫາໃໝ່ ຍັງໄດ້ຍັງມີ

ເຖິງວ່າຄົນອື່ນ ຊີງຊັງໝາງເມີນ ຫ່າງເຫີນເມີນໄກ
ຖອນເຍື່ອຖອນໄຍ ຖອນໃຈໜ່າຍໜີ
ອ້າຍຍັງສົນໃຈ ປອງໝາຍໄມຕຣີ
ຢາກໄດ້ເປັນສີ ຊີວາ

ຢ່າໂສກເລີຍເຈົ້າ ຢ່າເສົ້າໝົ່ນໝອງ
ຜົນບຸນໜຸນຈ່ອງ ແຕ່ຊາດກ່ອນມາ
ເຮົາເຂົ້າໃຈກັນ ຮັກກັນດີກວ່າ
ຄວາມຫຼັງຜ່ານມາ ຖືວ່າຜັນໄປ

ຮັກຈິງຍິ່ງໃຫຍ່ ດ້ວຍໃຈໝັ້ນຄົງ ຊື່ຕຣົງຈົງຮັກ
ດ້ວຍໃຈສມັກ ພັກດີຕລອດໄປ
ພ້ອມກັນສ້າງສັນ ສວັນອຳໄພ
ຢ່າຫວັ່ນຢ່າໄຫວ ໄພພານ

*ເທື່ອສຸດສຸດທ້າຍ ເຖິດໜາ*

ຄຳຫຼ້າ ໜໍ່ແກ້ວ : ທຳນອງ & ເນື້ອຮ້ອງ

ຄຳຫຼ້າ ໜໍ່ແກ້ວ

# ລຳບາກໃຈ

ໂທໃຈ ໄປຮັກເຂົາເຮັດຫຍັງ
ຈະຫວັງ ໃນຮັກ ຈັກພຽງໃດ
ກໍເຂົາ ມີແລ້ວ ຄົນຄູ່ໃຈ
ຈະໝາຍປອງຮັກ ຄົງໝົດທາງ

ເມື່ອເຫັນ ເມື່ອພົບ ປະສົບຕາ
ດັ່ງວ່າ ໃຈເຂົາ ຈະຈິງຈັງ
ຮູ້ທັນ ບັນຫາ ທີ່ປ່ຽນພລັງ
ຫາທາງ ມຸ້ງຫວັງ ສົມດັ່ງໝາຍ

24 / VII

ແຕ່ຄິດແລ້ວ ຄົງຈະຍາກ
ຄົງລຳບາກ ສຸດວິສັຍ
ສຸດຈະຝືນ ຄວາມຝັນໃຝ່
ສຸດຫ້າມໃຈ ຫວນໃຫ້ຮຽກຫາ

ຫ້າມຈຳໜ່າຍ

ຊາດນີ້ ຄົງໄດ້ ໄດ້ແຕ່ຄິດ
ເສົ້າຈິດ ຄິດແລ້ວ ໝອງອຸຣາ
ຍ້ານບໍ່ສົມ ດັ່ງອາດປຣາຖນາ
ຄິດວ່າ ຊາດນີ້ ຄົງຜິດຫວັງ

1977

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ຄຳຫຼ້າ ຫ່ມແກ້ວ

# ເຄາະຂີ້ໝ້ຽງ

ເກົ່າ ມັນເປັນຂີ້ໝ້ຽງ
ຈຸ້ມສຽງ ບໍເສາະບໍໃສ
ຮ້ອງເພັງ ກໍຮ່າວຮ້ອງໄປ
ຕາມໃຈ ຜູ່ຂໍຟັງມາ

ຢ່າ ວ່າຮ້ອງບໍມ່ວນ
ຢ່າເວົ້າຂວັນ ຕິສິນນິນທາ
ສິລປິນ ບໍມີຄຣູ ບໍມີບາ
ຜ່ານມານັ້ນ ພອນສວັນ ບັນດານ

ຮູ້ ກັນຢູ່ແລ້ວ

ຄຳຫຼ້າ ໜໍ່ແກ້ວ

# ເກີດເປັນຄົນ

ເກີດມາເປັນຄົນ ຢ່າທຳຕົນ ເໝືອນງົວເໝືອນຄວາຍ
ຢ່າສັບສົນ ວົນວາຍ ໃຫ້ພູມໃຈ ທີ່ໄດ້ເກີດເປັນຄົນ
ຮັກຊາດບ້ານເມືອງ ຢ່າໃຫ້ເລືອງ ຜູ່ທີ່ຢູ່ໃກ້ຕົນ
ກໍ່ສ້າງຝຶກຝົນ ທຳຕົນ ໃຫ້ເປັນຄົນດີ

ຕົນເອງ ເປັນທີ່ເພິ່ງ ຂອງຕົນ
ຕ້ອງອົດທົນ ສ້າງຕົນເຕັມທີ່
ສັງຄົມຕ້ອງການ ແຕ່ຄົນດີ
ຄົນອັບປີ ໄລ່ໜີໄກໆ

ອັນຄົນໂກງ ຄົນກິນ ປິ້ນປົດ
ເອົານ້ຳກົດ ຫົດປາກໃຫ້ຮາກໄຫຼ
ຢ່າໃຫ້ເຫຼືອ ຫຼົງລະບະໄວ້
ຈະເປັນໄພ ເປັນພິດ ຜິດຄອງ

ເກີດແລ້ວ ຕ້ອງຕາຍ ເຖິງຈະຕາຍ ໃຫ້ຕາຍດ້ວຍດີ
ສ້າງຄຸນງາມ ຄວາມດີ ຄຸນ ຄວາມດີນັ້ນ ຈະຕອບສນອງ
ໃຜໆ ກໍນິຍົມ ເຊີຍຊົມ ສົ່ງເສີມຍໍຍ້ອງ
ໂດ່ງດັງ ທັງຜອງ ໝາຍປອງ ເປັນຫຼັກຄຸນນະທັມ

ຢ່າຫຼົງກົນ ຄົນອື່ນຍື່ນຍໍ
ຄອຍພະນໍ ລໍ້ລວງຫຼົງຕາມ
ທຸກເວລາ ທຸກນາທີ ທຸກໂມງຍາມ
ຈເຣີນຕາມ ຍຸກສມັຍໃໝ່ໆ

ອັນທຳດີ ຕ້ອງໄດ້ດີ ແນ່ນອນ
ຈົ່ງສັງວອນ ຮ່ຳຮອນສອນໃຈ
ຢ່າໝຸນທັນ ຮ້ອນຮົນກວ່າໄຟ
ຈະເສັຽໃຈ ພາຍຫຼັງ ຈົນວັນຕາຍ

ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**

ສົມພອງ

# ນ້ຳຕານ້ຳໃຈ

ຮັກກັນດ້ວຍໃຈ ຫຼືໃດນໍຄົນ
ສັນຍາປີ້ປົ່ນ ເຫຼືອທົນແລ້ວເຈົ້າ
ເຂົາລືມເຮົາ ແລ້ວຫຼືນີ້ ມີໃໝ່ໄດ້ດີ ລືມເກົ່າ
ເຂົາຫວັງລວງເຮົາ ຫຼືໃດ

ຊໍ້າໃຈເຫຼືອທົນ ນໍຄົນເຂົາເມີນ
ເຂົາເພີດເຂົາເພີນ ຖິ້ມເຮົາໝອງໃໝ້
ເຂົາລືມເຮົາແລ້ວລືມສິ້ນ ໂຜ່ບິນຫ່າງເຫີນ ເມີນໄກ
ໂທ່ເອີຍໃຈຊາຍ ແສນຊົ່ວ

ມີນຶ່ງ ຢາກໄດ້ສອງ ເປັນລວງ ອີກຮອດສາມ
ໂທຊາຍໃຈຊາມ ລວນລາມ ໄປທົ່ວ
ເຫັນຍິງເປັນ ຂອງຫຼິ້ນ ຫຼອກກິນ ໃຫ້ໝອງມົວ
ສິ້ນເນື້ອໝົດຕົວ ແລ້ວຄອງຫາໃໝ່

ຮັກກັນດ້ວຍໃຈ ຫຼືໃດນໍຄົນ
ສັນຍາປີ້ປົ່ນ ເຫຼືອທົນແລ້ວນີ້
ຂໍພຽງເທົ່ານີ້ ລາກ່ອນ ຂໍໄຫວ້ຂໍວອນ ເທບໃຫ້
ຂໍລຳຈົນຕາຍ ແລ້ວເອີຍ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ



ຄຳຫຼ້າ ໜັ່ນແກ້ວ
1956

# ກັ່ງວສາວ

ຄ່ຳຄືນວັນນີ້ ເຫັນເຂົາມີ ລຳວົງມ່ວນກັນ
ສຽງຮ້ອງເນືອງນັນ ພາໃຫ້ຜັນ ເຫັນສາວໜ້ານົນ
ສຽງກອງລຳວົງ ປະຕຶ່ງໂມ່ງ ຈົນຫຼົງນຳມາ
ຂໍພຽງເຫັນໜ້າ ບໍໄດ້ໂຕ້ງ ກະຢ່າ ບໍວ່າດອກສາວ
ລຳວົງແກ້ເຫງົາ ບັນເທົາ ທຸກຮ້ອນໃນໃຈ
ນ້ອງຢູ່ບ້ານໃດ ອ້າຍຂໍໄປຕາມ ສົ່ງແມ່ງາມງອນ

↻ ເກີດມາເປັນຄົນຈົນ ຕ້ອງທົນດ້ານໜ້າ ລະອາລຳທົນ
ຫາກນ້ອງຊັງຄົນຈົນ ເສັຽແຮງດັ້ນດົ້ນ ຄົງຕຣົມໃຈຕາຍ

ໂອ໋ ນ້ອງສາວເອີຍ ອ້າຍບໍເຄີຍ ຮັກໃຜມາກ່ອນ
ເຫັນໂສມບັງອອນ ໃຈສະທ້ອນ ນອນບໍໄດ້
ຫຼົງຮັກພຽງໃຈ ຮັກກວ່າໃຜ ຢູ່ໃນໂລກນີ້
ຂໍພຽງໄມຕຣີ ຢ່າໄດ້ມີແໜງໜ່າຍ ຈະຕາຍກໍ່ຍອມ
ຢາກຢູ່ຄູ່ດອມ ຈອມໃຈ ຢູ່ທຸກເວລາ
ຮັກອ້າຍເຖີດໜາ ກະຣຸນາ ຢ່າອົ່ງແມ່ຈອມໃຈ

ແສນສັກດາ

# ອ້າຍຄອຍ

ອ້າຍຄອຍ ອ້າຍຄອຍ ອ້າຍຄອຍນ້ອງຢູ່
ຄອຍນາງຍອດຊູ້ ບໍ່ມາ
ເມື່ອວານນັດກັນ ຈົບດີວະໜາ
ແລ້ວໃດສັນຍາ ນັ້ນເລື່ອນໄດ້

ຍ້ານນາງຫຼົງທາງ ຍ້ານນາງຫຼົງທິດ
ຍ້ານເມືອນັ່ງຄິດ ນ້ອຍໃຈ
ຍ້ານມານຂວາງທາງ ນ້ອງນາງເອົາໄວ້
ຍ້ານນ້ອງປ່ຽນໃຈ ຊັ້ນດອກໜາ

ຫຼືມີຜູ້ໃດ ຂັດໃຈນ້ອງນ້ອຍ
ຫຼືມີຄົນຄອຍ ເອົາໃຈຫຼາຍກວ່າ
ຫຼືນ້ອງຕັດໃຈ ຈຶ່ງໄດ້ຫຼົບໜ້າ
ຫຼືຕີຣາຄາ ຄ່າຮັກເຮົາເພີ້

ອ້າຍຍັງເຝົ້າຄອຍ ຫຼົງຄອຍຂວັນໃຈ
ຄອຍຕາມນັດໄວ້ ສເມີ
ໄດ້ຍິນຫຼືຍັງ ສຽງດັງພ້ຳເພີ້
ຮັກນ້ອງສເມີ ຍັງບໍ່ລືມ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ແສນສັກດາ

# ຕໍ່ຮັກຕໍ່ຂານ



ແວ່ວສຽງ ເພັງຮ້ອງມາ
ຕໍ່ຂານຕໍ່ວ່າ ຜູ່ຊາຍທຸກຄົນ
ວ່າເປັນ ຄົນລວງຫຼອກສາວ ປີ້ປົ່ນ
ຢາກຂ້າຜູ່ຊາຍ ທຸກຄົນ ທີ່ລວງຫຼອກຍິງ

ໄດ້ຍິນ ຍິງຮ້ອງມາ
ສິ້ນສາວເສັ່ງທ່າ ຍ້ອນຊາຍໃຈສິງ
ສາບແຊ່ງ ຜູ່ຊາຍ ກັບເພດເປັນລີງ
ຢ່າຢູ່ເປັນມານ ຜູ່ຍິງ ຂໍໃຫ້ເປັນລີງ ຕໍ່ໄປ

ຢ່າຟ້າວໃຈນ້ອຍ ປ້ອຍດ່າຊາຍຫຼາຍ ຄົນງາມ
ຢ່າຟ້າວປະນາມ ຢຽບຍ່ຳ ທຳເປັນນ້ອຍໃຈ
ຄຶດໃຫ້ດີກ່ອນ ເລືອກສ້ອນ ຊາຍມີຫຼາຍຊາຍ
ແກມຕົມ ແກມຫີນແກມໄມ້ ຍອດຊາຍແທ້ຈິງ ກໍ່ມີ

ຜູ່ຍິງ ລວງເໝືອນກັນ
ຂ້າຂໍພະນັນ ຕໍ່ຂານສະຕຣີ
ແນ່ຈິງ ມາລອງ ມອບຮັກຂ້າທີ
ຈະກອດຍອດຂວັນ ຊີວີ ຊີບນີ້ ມອບນາງແນ່ນອນ

1950+

ຄຳຫຼ້າ ໜໍ່ແກ້ວ

# ຢູ່ກັບນ້ອງ

ຢູ່ກັບນ້ອງ ອ້າຍມີຄວາມສຸຂ
ອ້າຍເປັນທຸກ ຍາມພາກຈາກຈອນ
ເຖິງຍາມກິນ ເຖິງຍາມຫຼັບນອນ
ໃຈອາວອນ ຮ້ອນໆ ໜາວໆ

ຢູ່ໃກ້ນ້ອງ ມີຄວາມອົບອຸ່ນ
ບໍ່ວາຍວຸ້ນ ຫົວໃຈຫາຍເສົ້າ
ມີຄູ່ຄິດ ມີຄູ່ປາກເວົ້າ
ບໍ່ງຽບເຫງົາ ສອງເຮົາເຂົ້າໃຈ

↻ ຮັກຍອດຮັກ ຊຶ້ງສລັກອຸຣາ
ຮັກເທົ່າຟ້າ ດັ່ງແກ້ວຕາ ແກ້ວໃຈ
ໄດ້ຢູ່ກັບນ້ອງ ບໍ່ກ່ຽວຂ້ອງ ກັບໃຜ
ຈະໄປທາງໃດ ບໍ່ໃຫ້ໄກ ໃຫ້ຫ່າງ

ໄດ້ກັບນ້ອງ ບໍ່ໝາຍປອງ ໃຜອື່ນ
ຈະບໍ່ຟື້ນ ຄວາມເກົ່າຄວາມຫຼັງ
ຈະຖນອມ ທອມຮັກແຕ່ນາງ
ມອບຊີວັງ ໃຫ້ນາງຜູ່ດຽວ

(ຮ້ອງໝູ່)
1976

# ວຽງຈັນດວງໃຈ



| | |
|---|---|
| ເມືອງວຽງຈັນ | ປານສວັນ ເມືອງຄົນລະເນີ |
| ຢູ່ໃສກໍນອນ | ລະເມີ |
| ທັງຝັນທັງເພີ້ | ເຖິງແຕ່ເມືອງ ວຽງຈັນ |
| | |
| ໃຜ | ວ່າວຽງຈັນເສົ້າ |
| ພວກເຈົ້າ | ຢ່າເວົ້າຢ່າຝັນ |
| ວຽງຈັນ | ມ່ວນຊື່ນເບີກບານ |
| ຟົດຟື້ນສນັ່ນ | ວຽງຈັນມ່ວນຫຼາຍ |
| | |
| ປ່າດົງ! ທົ່ງກວ້າງ! | ຫ້ວຍໜອງ ລຳຄອງນ້ອຍໃຫຍ່ |
| ປູປາ ນານ້ຳກໍຫຼາຍ | ເຫຼືອກິນເຫຼືອຂາຍ ສຸຂສບາຍແທ້ດາຍ |
| ຊາວວຽງ ຂຍັນອົດທົນ | ສູ້ຊົນ ໄລ່ໜີຕີຜ່າຍ |
| ໝູ່ມາຣ ຣຸກຣານໜີຕາຍ | ຊາວວຽງຂັບໄລ່ ອອກຈາກເມືອງລາວ |
| | |
| ເມືອງວຽງຈັນ | ນະຄອນຫຼວງ ສາທາລະນາລັດລາວ |
| ຮຸ່ງເຮືອງ | ເຫຼືອງເຫຼື້ອມເໜືອນດາວ |
| ສັງຄົມພວມກ້າວ | ສູ່ຄວາມສີວິໄລ |
| ໂອ ວຽງຈັນ ໂອ ວຽງຈັນ | ວຽງຈັນ ດວງໃຈເຮົາ |

ປະພັນໂດຍ : ທຳນອງ & ເນື້ອຮ້ອງ

ສົມພອງ

# ເປັນຫຍັງຈຶ່ງລືມ

ເປັນຫຍັງຈຶ່ງລືມ ເປັນຫຍັງຈຶ່ງລືມ
ບອກວ່າບໍ່ລືມ ນ້ອງຍັງຈຳໄດ້
ຜີສາງຍັກໃຂ ຫຼືດ້ວຍເຫດໃດ
ຫຼືວ່າຜູ້ໃຫຍ່ ປອບໃຈ ໃຫ້ລືມສັນຍາ

ເປັນຫຍັງຈຶ່ງລວງ ເປັນຫຍັງຈຶ່ງລວງ
ບອກຈະບໍ່ລວງ ຫວງປານແກ້ວຕາ
ກ່ອນນີ້ບອກນ້ອງ ໝາຍປອງໜັກໜາ
ຂໍເອົາຊີວາ ອາສາມອບໝາຍ ໃຫ້ຄອງ

ກ່ອນຈາກກັນ ຄືນນັ້ນ ຍັງຈຳໄດ້ດີ
ໃສວ່ານ້ອງພີ່ ເປັນເທພີ ທີ່ອ້າຍໝາຍປອງ
ອ້າຍສາບານໄວ້ ຈະບໍ່ປ່ຽນໃຈ ເປັນສອງ
ຮັກດຽວ ຮັກດຽວແຕ່ນ້ອງ ຮັບຮອງ ບໍ່ກ່ຽວຍິງໃດ

ເປັນຫຍັງຈຶ່ງລືມ ເປັນຫຍັງຈຶ່ງລວງ
ຜູ້ໃດຂັດຂວາງ ຂໍໃຫ້ວອດວາຍ
ຫຼືອ້າຍເບື່ອນ້ອງ ແລ້ວຈຶ່ງປ່ຽນໃຈ
ເຜີຍມາເຖິດອ້າຍ ຈະໄດ້ ໄຜ່ຫາຄົນອື່ນ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ
1993

# ວອນລົມ

ຫວິວ ສາຍລົມຫວິວ ໂຊຍພັດມາ
ເຍັນກາຍາ ໜາວອຸຣາ ພາໃຫ້ໜອງ
ເບິ່ງນະພາ ເຫັນວາໂຍ ຕ້ອງພາໜອງໃຈ

ລົມ ສຽງລົມພັດ ໄພພະນາ
ສະກຸນາ ເຫີນນະພາ ຄູ່ກັນໄປ
ໂອ ນົກນ້ອຍ ສຽງຈ້ຽງຈ້ຽງໄສ ຫວນໃຫ້ໜອງໜິ່ນ

ເມື່ອໃດໜໍ່ ຈຶ່ງຈະມີຄູ່
ຢູ່ຄຽງຂ້າງ ຈັກຄົນ
ເພື່ອຄາຍຫາຍ ຄວາມເສົ້າໜອງໜິ່ນ
ໃຜຈັກຄົນ ຈະສົນໃຈ

ໜາວ ໜາວຍິ່ງໜາວໃຈ ເຫຼືອທົນ
ໂອ ລົມໜາວ ໜາວຈົນທົນ ແທບບໍ່ໄຫວ
ປ່ຽວໃຈນັກ ຊັກພາໜອງໄໝ້ ໃຜຈະເມດຕາ

1977

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ



ຄຳຫຼ້າ ໜໍ່ແກ້ວ

# ກະຊັບສຳພັນລາວ - ໄທ

ຂອງ ໄຫຼຫຼັ່ງ
ສອງຟາກຝັ່ງ ແຜ່ນດິນລາວ-ໄທ
ໂອ ທາຣນ້ຳໄສ ເໝືອນນ້ຳໃຈ ບວງຊົນສອງຝັ່ງ
ເສື່ອມ ຄວາມຮັກຄວາມຫວັງຂອງສອງຝັ່ງ ເປັນທາງນ້ຳໃຈ

ລາວເອີຍ! ໄທເອີຍ!
ກ່ອນເຮົາເຄີຍ ເພິ່ງພາອາໄສ
ສຽງແຄນຟັງໄດ້ ປາກເວົ້າເຂົ້າໃຈ ເຫຼື້ອມໃສໄມຕຣີ

↻ ຢູ່ ຄົນລະຝັ່ງ
ບໍ່ຢຸດຢັ້ງ ສ້າງສາມັກຄີ
ຮ້ອຍ ພັນໝື່ນປີ
ເພີ່ມທະວີ ໄມຕຣີສັມພັນ

ຢ່າ ໃຫ້ໝາງໝອງໝົ່ນ
ຫົວໃຈຄົນ ທີ່ເຄີຍຮັກກັນ
ຢູ່ ໃກ້ຮຽງກັນ
ຊ່ອຍເຫຼືອກັນ ເຖີດເຮົາລາວ-ໄທ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ
2004

# ມ່ວນຊື່ນຍາມພົບ

ຈາກກັນວັນນັ້ນ ພົບກັນວັນນີ້
ຈັ່ງໃດສບາຍດີ ນ້ອງພີ່ທຸກຄົນ
ເປັນເດືອນເປັນປີ ມີກັນພຽງຫົນ
ບໍ່ພົບກັນດົນ ດົນໆ ອີ່ຫຼີ

ເມື່ອພົບກັນແລ້ວ ຫາແນວມ່ວນກັນ
ສນຸກສນານ ນຳກັນຄືນນີ້
ດົນໆເຫັນກັນ ສມານສາມັກຄີ
ວັນດີຄືນດີ ວັນນີ້ເຮົາດີໃຈ

ລຸກຂຶ້ນມາ
ຢ່າຊ້າລ່ຳໄລ
ລຸກມາໄວ
ວາງລວດລາຍ ລ້າຍລຳ

ຢ່າປ່ອຍໃຫ້ເພັງ ມັນໆ ຜ່ານໄປ
ອອກກຳລັງກາຍ ດ້ວຍການເຕັ້ນລຳ
ອາຍຸຈະຍືນ ມ່ວນຊື່ນອີກຊ້ຳ
ມະມາເຕັ້ນລຳ ອີ່ມໜຳ ສຳຣານໃຈ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ບຸນທົງ ວົງສາລີ
1969

# ພາກຮັກ

ອາໄລອາວອນ ຕ້ອງນອນສະອື້ນ ໂສກສັນ
ຄົນເຄີຍຮັກກັນ ຕ້ອງມາໜີຮ້າງ ຫ່າງໄກ
ຜືນຢູ່ ອົດສຸຣະທົມ ບໍວາຍ
ທົນໝອງໃໝ້ ຫົວໃຈແທບພັງ ຂາດຮອນ
ດວງໃຈເອີຍ ຮູ້ຫຼືບໍ
ຍັງເຝົ້າລໍ ເຝົ້າລໍຫຼັບນອນ
ຮື... ຮື...
ປານນີ້ ເຈົ້າຢູ່ໃສ
ຫຼັບໄຫຼ ຫຼືວ່າອາວອນ
ເຂົ້ານອນ ຫຼືຍັງນັ່ງຄອຍ
ຮື... ຮື....

ເຄີຍເຊີຍເຄີຍຊົມ ພິຣົມຊົມຊື່ນຊຸກາຍ
ຍັງຈຳຝັງໃຈ ເຖິງໄກ ມິໄດ້ເລືອນລອຍ
ຫວັງໄດ້ກັບມາ ຫາຄົນທີ່ຄອຍ
ຄົນຮັກຂ້ອຍ ເຫງົາຫງອຍ ຫຼືວ່າຢ່າງໃດ
ດວງໃຈນີ້ ໝັ້ນຄົງຢູ່
ຄອຍຂວັນຄູ່ ຍອດຊູ້ ແສນຫ່ວງໃຍ
ຮື... ຮື...
ຈຳພາກ ຈາກຈອມຂວັນ
ຈະຫວນ ຄືນມາຫາໃໝ່
ຢ່າໄດ້ ຫາໃຜມາຊ້ອນຊົມ
ຮື... ຮື...

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ຄຳຫຼ້າ ໜໍ່ແກ້ວ
1965

# ສຸຂຂີປີໃໝ່

ສຸຂຂີປີໃໝ່ ສຸກໃຈນ້ອງພີ່
ໂປຣດຈົ່ງໄດ້ມີ ຣາສີສູງສົ່ງ
ກຽດກ້ອງໄປໄກ ພົ້ນພັຍໃຈຈົ່ງ
ສົມດັ່ງປະສົງ ໝັ້ນຄົງຊົ່ວຟ້າ

ສົດໃສໃຈຊື່ນ ຮື່ນຣົມສົມປອງ
ສຸຂມີໃນຜອງ ສນອງເຮືອງຈ້າ
ຜາບແພ້ໄພພານ ພົ້ນມານນາໆ
ຂໍໃຫ້ດິນຟ້າ ຄຸ້ມຄອງເໝືອນກ່ອນ

ລູກຂໍຂະມາ ລາໂທດພໍ່ແມ່ ເຖົ້າແກ່ຕາຍາຍ
ຜິດພັ້ງພາດໄປ ອະພັຍຫຼານກ່ອນ
ຂໍຮ້ອງເພັງນີ້ ສົ່ງພອນ
ຂໍອວຍເປັນກອນ ບັງເລງ ລ້ຳເລີດກ້າເກັ່ງ ດັ່ງໝາຍ

ອາຍຸຍືນຍັ້ງ ວັນນັງເສີມສ້າງ
ຄູ່ຄຽງສຸຂຂັງ ພລັງແຖມໃຫ້
ເສົ້າໂສກໂຣກພັຍ ໜີໄກຫາງຫາຍ
ໂຊກລາບມາກມາຍ ດັ່ງໝາຍຖາວອນ

ຈັບທະໜອມ

# ຜູ້ຊາຍຜີ

ເຈົ້າຫຼອກຂ້ອຍແລ້ວ
ເຈົ້າຫຼອກຂ້ອຍແລ້ວ
ຫຼອກແລ້ວຕົວະແລ້ວ
ຕົ້ມແລ້ວຈົນເປື່ອຍ
ຫຼົງເຊື່ອນ້ຳຄຳ
ແລ່ນນຳຈົນເມື່ອຍ
ໂສດສົດຢູ່ເລື້ອຍ
ຫັ່ນເຈົ້າໂຕດີ

ເຈົ້າມີລູກແລ້ວ
ເຈົ້າມີເມັຽແລ້ວ
ພໍແລ້ວເຊື່ອແລ້ວ
ເຫັນແລ້ວວານນີ້
ລູກຕາດຳໆ
ຕັ້ງສາມຕັ້ງສີ່
ຍຸດເລງຈະຫີ
ຈັ່ງມີເມດຕາ

ເປັນຄົນທັ້ງທີ
ຍາດຜີມາເກີດ
ຄຶດວ່າດີເລີດ
ແລ້ວບໍ່ອາດຍາ
ຫຼອກລວງຕົວະຍົວະ
ປິດບັງນາງ
ລູກເຕົ້າພັລຍາ
ຄອຍຖ້າຢູ່ເຮືອນ ເປັນຝູງ

ຍຸດຫຼອກໄດ້ແລ້ວ
ລູກເມັຽມີແລ້ວ
ລະວັງຖືກແຮ້ວ
ພໍແລ້ວລະລຸງ
ຢູ່ກັບລູກເມັຽຊ່ະ
ຢ່າມາຫຍຸ້ງ
ຢ່າກວນຢ່າຄຸງ
ພໍ່ລຸງຫຼີກໄປ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ


ຮີບໂຮມເພັງຂອງ ຄຳຫຼ້າ ໜໍ່ແກ້ວ, ເຜີຍແຜ່ໂດຍ ທັມມະນູນ ພັນນຸເດຊ

ແສນສັກດາ

# ນ້ອຍ



ອັນຄວາມມືດມົນ ທີ່ວຽນວົນສຸມໃນຫົວໃຈ
ຈະຢູ່ແຫ່ງໃດ ກໍ່ວຸ້ນວາຍຫາແຕ່ນ້ອງນ້ອຍ
ຢາກຈະເຫັນໜ້າ ຢາກເວົ້າຈາກັນ ວັນລະໜ້ອຍ
ຢາກຢູ່ໃກ້ ຢາກອີ່ນອ່ອຍ ຢາກມີນ້ອຍ ເປັນມິ່ງສມອນ
ນັ່ງນອນຜ່ອນພັກ ສມັກສເມີ

ແຮງປາຖນາ ຮ່ຳຮຽກຫາ ທຸກຄືນທຸກວັນ
ບໍ່ແມ່ນຄວາມຝັນ ໄດ້ພົບກັນ ເວົ້າກັນເອີ່.!ເອີ.!
ຫົວໃຈເປັນສຸກ ເຜີາລຸກຫລົງໄຫລລະເມີ
ຫ່າງກັນໄກ ໄດ້ແຕ່ເພີ້ ຢາກຈະເຈີຢາກຈອບໜ້ານ້ອຍ
ຫຼົງຄອຍ ວ່ານ້ອຍເຫຼື້ອມໃສສັດທາ

ຫົວໃຈ ອ້າຍບໍ່ໄດ້ເປັນຫີນ
ແມ່ນມີປີກບິນ ຈະບິນໄປຫາ
ພຽງໄດ້ພົບ ເຖີງບໍ່ໄດ້ເວົ້າຈາ
ພຽງເຫັນແຕ່ໃບໜ້າ ສົບສາຍຕາ ກໍ່ເປັນສຸກໃຈ

ອັນຄວາມມືດມົນ ຈະຢູ່ດົນ ເທົ່າໃດທໍ່ນີ້
ນ້ຳໃຈໄມຕຣີ ນັ້ນຄົງມີ ເໜືອກວ່າສິ່ງໃດ
ຟ້າດິນຈົ່ງຊ່ອຍ ນ້ອງນ້ອຍຢ່າຫຼົງລືມງ່າຍ
ກວ່າຊີບນີ້ ຈະສລາຍ ໂປຣດຈົ່ງໄດ້ເມດຕາປຣານີ
ຫວັງໃນຊາດນີ້ ໄມຕຣີຍັ້ງຍືນ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໝໍ່ແກ້ວ

1950+

ບຸນທ່ຽງ ມະນີວົງ

# ປ່ອຍອ້າຍເຖີດ

ປ່ອຍອ້າຍເຖີດ ດວງໃຈທີ່ຮັກ
ແມ່ນຫາກນ້ອງຮັກ ອ້າຍຈິງຈາກໃຈ
ອ້າຍຈົນຍາກໄຮ້ ຖ້າຂືນຢູ່ໄປ ຄົງອາຍຂາຍໜ້າ

ບໍ່ຫານຢູ່ ຕໍ່ໄປແລ້ວເອີຍ
ຢູ່ໃຫ້ຄົນເຢີ້ຍ ເຢີ້ຍຫຍັນນິນທາ
ອ້າຍຂໍເວລາ ໄປພັທນາ ຖານະແລະສັກສີ

↻ ອຸດົມຄະຕິ ເຮົາຄົນລະຢ່າງ
ຈຶ່ງຂໍຫຼີກທາງ ໄປຄົນລະທີ່
ຫາກບຸນເຮົາຄາດ ໄດ້ຮ່ວມກັນ
ກໍ່ຄົງກັບຫັນ ມາຮ່ວມຊີວີ
ຊົ່ວຊີວິດນີ້ ອ້າຍມີຮັກດຽວ

ປ່ອຍອ້າຍອອກ ຈາກເອີກນ້ອງໄປ
ຈະດີຈະຮ້າຍ ເປັນຕາຍດາຍດຽວ
ຂໍນ້ອງຢ່າກ່ຽວ ຂໍທຸກຄົນດຽວ ຊ້ຳດຽວປ່ຽວໃຈ

ປະພັນ ຄຳຫຼ້າ ໜໍ່ແກ້ວ : ເນື້ອຮ້ອງ & ທຳນອງ

ຄຳຫຼ້າ ໜໍ່ແກ້ວ

# ຢ້ານ

ຢ້ານແຕ່ ຄວາມຮັກຈະໝອງ
ຢ້ານມີ ເຈົ້າຂອງອີກຄົນ
ຢ້ານໜີ ຄວາມເສົ້າບໍ່ພົ້ນ
ຢ້ານຄົນ ເຂົາແໜ່ງໜ່າຍ

ຢ້ານຮັກ ບໍ່ສົມດັ່ງຫວັງ
ຢ້ານມີ ຄົນຂວາງຂັດໄວ້
ຢ້ານເຂົາ ໃຈອ່ອນເອນໄຫວ
ຢ້ານຄາຍ ຮັກກັບຄືນ

ຮູ້ແລ້ວ ວ່າເຈົ້າຍັງພັກ
ຮູ້ແລ້ວ ວ່າຮັກຍັງຊື່ນ
ຢ້ານຄວາມ ກັ່ນແກ້ງຄົນອື່ນ
ຢ້ານກືນ ນ້ຳຕາຈົນໄດ້

ຢ້ານແຕ່ ຄວາມຜັນມືດມົວ
ຢ້ານຄົນ ຈະຍົວະໃຫ້ອາຍ
ຢ້ານເຫຼືອ ພຽງຊາກຮັກໄວ້
ຢ້ານຕາຍ ເພາະຜິດຫວັງ

ຄຳຫຼ້າ ໜໍ່ແກ້ວ : ຂຽນເນື້ອ & ທຳນອງ

ສົມພອງ
1969

# ວິມານວຽງທອງ

ຄ່ຳລົງແສງຈັນ ສອດສ່ອງນະພາ
ທຸກວັນທິວາ ຣາຕຣີແສນງາມ
ດິນຕຣີບັນເລງ ສຽງເພັງ ກ່ອມຂວັນ
ດັ່ງນຶ່ງສວັນ ວິມານຂ້າຢູ່

ໜຸ່ມສາວຄູ່ກັນ ເດີນຫຼິ້ນຣິມຂອງ
ຮັກກັນສົມປອງ ຄຽງຄອງໝັ້ນຢູ່
ດວງໃຈຊື່ຕຣົງ ຮັກດຽວຍອດຊູ້
ຢູ່ຄູ່ຟ້າດິນ ຈົນສິ້ນ ແສງສຸຣິຍາ

ຫາກໄດ້ມາແດນ ຖິ່ນແຄວ້ນແສນສຸກ
ເໝືອນສິ້ນຄວາມທຸກ ສຸກສັນບານອຸຣາ
ແມ່ນ ໄດ້ຈາກລາ
ແຕ່ປຣາຖນາ ຄະນຶງ ເຖິງຢູ່ທຸກວັນ

ວຽງຈັນນີ້ຫນໍ ງາມເດັ່ນໜັກໜາ
ໂລກເຂົາລືຊາ ວ່າເມືອງສວັນ
ຫາກໄດ້ມາເຍືອນ ເໝືອນເປັນຄວາມຝັນ
ໂອ້ເມືອງວຽງຈັນ ຕິດພັນຫົວໃຈ ບໍລືມ

ເນື້ອຮ້ອງ & ທຳນອງ : ຄຳຫຼ້າ ໜໍ່ແກ້ວ

ສະຫວັດ

# ບໍ່ນອນກໍ່ຝັນ

| | | |
|---|---|---|
| ບໍ່ນອນກໍ່ຜັນ | ຜັນເຫັນ | ຜັນເຫັນໜ້າ |
| ບໍ່ນອນກໍ່ຜັນ | ຜັນມາ | ຜັນມາຢູ່ |
| ບໍ່ນອນກໍ່ຜັນ | ໄດ້ນັ່ງຮຽງ | ຄຽງຍອດຊູ້ |
| ບໍ່ນອນກໍ່ຜັນ | ວ່າຍອດປະທູ | ເປັນຄູ່ນອນ |

| | | |
|---|---|---|
| ຮັກກໍ່ຮັກ | ຫວງກໍ່ຫວງ | ປານແກ້ວຕາ |
| ຄິດຮອດຫາ | ຄຶດເຫັນໜ້າ | ສຸດອຸທອນ |
| ຢ່າລືມສຳພັນ | ຢ່າລືມສັນຍາ | ເຄີຍວ່າວອນ |
| ໂປຣດເຖິດງາມງອນ | ຢ່າຖອນຮັກຄືນ | ນະຊື່ນໃຈ |



ເນື້ອຮ້ອງ & ທຳນອງ : **ຄຳຫຼ້າ ໜໍ່ແກ້ວ**